# ພາກທີ 10 ບົດສະຫຼຸບ ແລະ ການຈັດຕັ້ງປະຕິບັດ

## 10.1 ບົດສະຫຼຸບ.

ການສຶກສາໄດ້ກວມເອົາ ທຸກໆລັກສະນະ ຂອງການພັດທະນາ ຢູ່ ສປປລາວ ນັບແຕ່ລັກສະນະ ດ້ານເຕັກນິກ ລວມທັງສະພາບແວດລ້ອມ ໄປເຖິງລັກສະນະ ດ້ານສະຖາບັນການຈັດຕັ້ງ ລວມ ທັງການ ຈັດຕັ້ງ, ການເງິນ, ການຕະຫຼາດ ແລະ ການພັດທະນາ ບຸກຄະລາກອນ. ໄປຕາມຊ່ອງ ທາງແຈ່ມໃສ ດ້ານການພັດທະນາຂອງ ລັດຖະບານ ສປປລາວ ດັ່ງທີ່ໄດ້ລະບຸໄວ້ໃນ ຍຸດທະສາດ ວິໄສທັດຄື: (1) ຮັບປະກັນດ້ານສະບຽງອາຫານ, (2) ສົ່ງເສີມການຜະລິດ ສິນຄ້າ ກະສິກຳ ເພື່ອຂາ ອອກ, ແລະ (3) ຍຸດຕິການຖາງປ່າເຮັດໄຮ່. ການສຶກສາໄດ້ຮ່າງແຜນ ປະຕິບັດງານເຖິງປີ 2020, ທີ່ບັນຈຸໂຄງການ ແລະ ແຜນງານທີ່ຕ້ອງການ ໃນນັ້ນມີ 8 ໂຄງການ ທີ່ໄດ້ຖືກອານຸມັດ ແລ້ວເພື່ອ ການຈັດຕັ້ງ ປະຕິບັດ. ອີງຕາມການກະຕວງ ແບບຊັດເຈນ ຕໍ່ຜົນສຳເລັດ ແລະ ເປົ້າໝາຍ ແລະ ຄວາມຕ້ອງການຈັດຂັ້ນຕອນ ການປະຕິບັດ, ໄດ້ກຳນົດ 58 ໂຄງການ ທີ່ຈະຕ້ອງປະຕິບັດກ່ອນປີ 2010.

ດັ່ງຄຳເຫັນຂອງຜູ້ຕາງໜ້າ ຈາກອົງການຈັດຕັ້ງຊ່ວຍເຫຼືອ ຫຼາຍຄົນໃນບັນດາກອງປະຊຸມ ສຳມະ ນາ ກ່ຽວກັບການສຶກສານີ້, ສປປລາວ ຈະບໍ່ມີທຶນ ແລະ ບຸກຄະລາກອນ ພຽງພໍເພື່ອ ຈັດຕັ້ງ ປະຕິບັດ ແຜນງານ ຂະໜາດໃຫຍ່ ທີ່ປະກອບດ້ວຍ 110 ໂຄງການຕະຫຼອດໄລຍະ 18 ປີທີ່ຈະມາ ເຖິງ. ນອກຈາກນັ້ນ ການປະຕິບັດ ບັນດາໂຄງການ ແລະ ແຜນງານດັ່ງກ່າວ ຍັງຈະ ບໍ່ຮັບປະກັນ ໃຫ້ປະເທດໄດ້ລຸດພົ້ນອອກຈາກບັນຊີ ຂອງປະເທດດ້ອຍພັດທະນາ ທີ່ສຸດໃນປີ 2020 ຕາມເປົ້າ ໝາຍ ທີ່ໄດ້ວາງໄວ້. ດັ່ງນັ້ນ ການສຶກສາຈຶ່ງໄດ້ສະເໜີໃຫ້ ລັດຖະບານລາວ ປະຕິບັດໂຄງການ ແລະ ແຜນງານຕາມບູລິມະສິດ ທີ່ໄດ້ສະເໜີໃນບົດລາຍງານ ແຜນແມ່ບົດນີ້. ທີມງານສຶກສາ ມີຄວາມເຫັນວ່າ ການຕອບສະໜອງຕໍ່ຍຸດທະສາດ ການພັດ ທະນາກະສິກຳ ຈະຮັບປະກັນ ໃຫ້ແກ່ ການ ສຳເລັດ ແລະ ບັນລຸເປົ້າໝາຍ ໃນເວລາອັນສັ້ນ ກ່ວາ.

ຈະຕ້ອງໄດ້ບັນທຶກວ່າ ການຈັດບູລິມະສິດ ຂອງໂຄງການ ແລະ ແຜນງານ ໄດ້ເປັນທິດ ນຳລວມ ເພື່ອການຈັດຕັ້ງປະຕິບັດແຜນປະຕິບັດງານ. ດັ່ງນັ້ນ, ໄດ້ແນະນຳ ໃຫ້ການຄັດເລືອກ ເອົາໂຄງ ການ ແລະ ແຜນງານເພື່ອການປະຕິບັດ ຈະຕ້ອງໄດ້ປະຕິບັດ ຕາມບູລິມະສິດ ທີ່ກຳນົດໄວ້ຢ່າງ ແທ້ຈິງ. ບູລິມະສິດຕາມເຂດພື້ນທີ່ ແລະ ບູລິມະສິດ ຕາມຂະແໜງການຍ່ອຍ ຈະໄດ້ຖືກບັນ ຈຸເຂົ້າໃນ ບູລິມະສິດລວມ. ນຳໂຍບາຍ ການ ຊ່ວຍ ເຫຼືອໃຫ້ແກ່ ສປປລາວ ຂອງອົງການ ຊ່ວຍເຫຼືອ ຈະຕ້ອງ ໄດ້ ພິຈາລະນາ ຄັດເລືອກເອົາ ບັນດາ ໂຄງການ ແລະ ແຜນງານ ຕາມບູລິມະສິດ ທີ່ຈັດໄວ້ ເຊັ່ນດຽວກັນ.

## 10.2 ການຈັດຕັ້ງປະຕິບັດ

### 10.2.1 ຄຳນຳ

ມີຫຼາຍຂົງເຂດທີ່ມີທ່າແຮງ ສະແດງໃຫ້ເຫັນຂໍ້ຈຳກັດ ໃນການຈັດຕັ້ງປະຕິບັດຢ່າງໂລ່ງລ່ຽນ ຂອງແຜນປະຕິບັດການ ຫຼັງຈາກ ໄດ້ຮັບການສະໜັບສະໜຸນຈາກລັດຖະບານແລ້ວ. ນອກຈາກນັ້ນ, ຍັງມີຄວາມຕ້ອງການໃນການກະກຽມຫຼາຍຢ່າງ ຖ້າຫາກວ່າຢາກໄດ້ ຜົນປະໂຫຍດຢ່າງເຕັມສ່ວນຂອງໂຄງການ ແລະ ແຜນງານ ໃຫ້ເກີດເປັນຈິງ. ແມ່ນຫຍັງ ໃນຕໍ່ໄປນີ້ ທີ່ຈະໄດ້ແນະນຳ ຕໍ່ພື້ນຖານການກະກຽມ ແລະ ຈຳເປັນຕ້ອງໄດ້ເຮັດກ່ອນ ທີ່ຄືດວ່າ ຈຳເປັນກ່ອນການລິ່ມລົງມືປະຕິບັດ.

### 10.2.2 ນະໂຍບາຍ ເພື່ອປະຕິບັດ

ການປະຕິບັດແຜນປະຕິບັດການ ຕ້ອງການ ຄວາມສາມາ ສະພາບແວດລ້ອມຂອງນະໂຍບາຍສຳລັບຊາວກະສິກອນ ແລະ ຜູ້ ເຮັດການປຸງແຕ່ງກະສິກຳ ເພື່ອດຳເນີນກິດຈະກຳ ເສດຖະກິດ ທີ່ບໍ່ຂັດຂວາງຈາກການຄວບຄຸມ, ແຊກແຊງ ແລະ ການແຊງຂັນທີ່ບໍ່ຍຸດຕິທຳ. ມີຫຼາຍສິ່ງທີ່ກ້າວທີ່ໄດ້ເຮັດຂຶ້ນແລ້ວສຳລັບກ້າວເຂົ້າສູ່ ເສດຖະກິດຕະຫຼາດ ແລະ ປັບປຸງສິນຄ້າທີ່ມີປະສິດທິຜົນ ແລະ ປັດໄຈຕະຫຼາດ ຜ່ານການ ຟື້ນຟູ ແລະ ຂະຫຍາຍ ສິ່ງອຳນວຍຄວາມສະດວກດ້ານໂຄງລ່າງ. ເຖິງຢ່າງໃດກໍຕາມ, ຍັງມີການແຊກແຊງບາງຢ່າງທີ່ຈະຕ້ອງໄດ້ເນັ້ນ ເພື່ອໃຫ້ບັນລຸ ຜົນໄດ້ຮັບຢ່າງມີປະສິດທິຜົນຢ່າງໄວວາ. ສິ່ງເຫຼົ່ານີ້ຄືການຍົກເລີກ ການຄວບຄຸມທາງອ້ອມ ຕໍ່ການເຄື່ອນຍ້າຍ ຜົນຜະລິດຜ່ານແຂວງຕ່າງໆ, ລັດຖະບານ ຖອນອອກຈາກ ການຄ້າສິນຄ້າກະສິກຳ, ແລະ ປັບປຸງປະສິດທິຜົນຂອງ ຕະຫຼາດການເງິນຂະໜາດນ້ອຍ. ມີຄວາມຈຳເປັນໃນການຍົກເລີກການຊົດເຊີຍອັນຮີບດ່ວນ ຕໍ່ ອັນຕາດອກເບ້ຍ ຊຶ່ງອັນນີ້ເປັນການນຳໄປສູ່ ການກະຈາຍທີ່ບໍ່ສະເໝີພາບ ຂອງການບໍລິການການເງິນ ກັບຜົນປະໂຫຍດທີ່ເກີດຂຶ້ນສະລັບພຽງແຕ່ ກຸ່ມນ້ອຍໆ ຂອງປະຊາຊົນຊົນນະບົດເທົ່ານັ້ນ. ມີຄວາມຈຳເປັນເໝືອນກັນໃນການ ດຳເນີນ ການລົງທະບຽນທີ່ດິນ ແລະ ຄອບຄອງດິນ ກໍຄື ດ້ານການຮັບປະກັນຕໍ່ບັນຫາການເຊົ່າດິນຕໍ່ໄປ ຖ້າຫາກວ່າ ຜົນປະໂຫຍດອັນເຕັມສ່ວນ ຂອງໂຄງການ ຂອງການລົງທຶນໃນແຜນປະຕິບັດການໃຫ້ເກີດເປັນຈິງ. ຈຶ່ງສະເໜີວ່າ ສິ່ງທີ່ເປັນບຸລິມະສິດ, ລັດຖະບານຈິ່ງແຕ່ງຕັ້ງ ຄະນະປະຕິບັດການ ຊຶ່ງປະກອບດ້ວຍ ພະນັກງານລັດອາວຸດໂສ ຈາກບັນດາກະຊວງທີ່ກ່ຽວຂ້ອງ ເພື່ອທົບທວນ ຈັດວາງສິ່ງທີ່ມີ ໃນປັດຈຸບັນ ແລະ ກະກຽມ ແຜນການຂອບເຂດຂອງເວລາ ເພື່ອຍົກເລີກ ການແຊກແຊງຂອງລັດ ທີ່ເປັນພື້ນຖານ ການກະກຽມໃນການຈັດຕັ້ງປະຕິບັດ ແຜນປະຕິບັດການ. ຂອບເຂດຂອງເວລານັ້ນ ຕ້ອງມີຈຸດປະສົງເພື່ອ ຍົກເລີກການແຊກແຊງຂ້າງເທິງ ກ່ອນການເລີ່ມຕົ້ນ ການປະຕິບັດ ແຜນປະຕິບັດການ.

### 10.2.3 ການຈັດວາງ ການປະຕິບັດ

ຄະນະສຶກສາ ມີທັດສະນະເປັນເອກະສັນກັນ ວ່າບັນຫາດຽວຕົ້ນຕໍ ທີ່ປະເຊີນຕໍ່ການຈັດຕັ້ງປະຕິບັດແຜນປະຕິບັດການກໍຄື ກະຊວງ, ພະແນກ, ຫ້ອງການ (ເມືອງ) ກະສິກຳ ແລະ ປ່າໄມ້ ມີພະນັກງານ ທີ່ມີຄວາມອາດສາມາດຈຳກັດ ເພື່ອອອກແບ ແລະ ປະຕິບັດແຜນງານ ແລະ ໂຄງ

ການ ຍ້ອນຂາດການຝຶກອົບຮົບ ແລະ ພະນັກງານທີ່ມີປະສົບປະການຢ່າງໜັກໜ່ວງ. ພະນັກງານຄຸນວຸດທິ ທີ່ມີປະສົບການຈຳນວນໜ້ອຍນຶ່ງ ບໍ່ໄດ້ແຈກຢາຍຕາມຄວາມເໝາະສົມ; ບໍ່ມີຄວາມດຸ່ນດ່ຽງ ຂອງພະນັກງານວິຊາການ ຢູ່ລະດັບເມືອງ ພ້ອມດ້ວຍ ຄວາມຮູ້ ຄວາມສາມາດບໍ່ພຽງພໍ ໃນບາງຂະແໜງ ເຊັ່ນ ການສົ່ງເສີມ ແລະ ລະບົບຟາມ ກໍຄື ຈຳນວນພະນັກງານປະຈຳການໃນທົ່ວທຸກບ່ອນກໍບໍ່ພຽງພໍ. ເພື່ອແກ້ບັນຫາເຫຼົ່ານີ້ ຈະຕ້ອງໄດ້ພະຍາຍາມພ້ອມກັນແກ້ເປັນເວລາຍາວນານຫຼາຍປີ ແລະ ບັນຫານີ້ ກໍເປັນຂໍ້ຈຳກັດ ໃນການຈັດຕັ້ງປະຕິບັດ. ໃນໄລຍະຊ່ວງກາງ, ຈຶ່ງສະເໜີວ່າ ກະຊວງກະສິກຳ ແລະ ປ່າໄມ້ ສ້າງໜ່ວຍປະຕິບັດ ແຜນປະຕິບັດການພາຍໃຕ້ກົມແຜນການ. ໜ່ວຍດັ່ງກ່າວ ພື້ນຖານຮັບຜິດ ຄະນະປະຕິບັດ ສຳລັບແຕ່ລະ ແຜນງານ ແລະ ໂຄງການ ຂອງແຜນປະຕິບັດການ. ຄະນະຈັດຕັ້ງປະຕິບັດ ຄວນປະກອບດ້ວຍ ພະນັກງານຫຼັກແຫຼ່ງຂອງການປະຕິບັດ ທີ່ມີຄວາມຮູ້ ຄວາມສາມາດ ແລະ ພະນັກງານທີ່ມີປະສົບການ ກໍຄື ພະນັກງານແຜນການ, ຕິດຕາມ ພ້ອມດ້ວຍພະນັກງານຄຸ້ມຄອງ ແລະ ບັນຊີ. ໃນເມື່ອວິທີການເຊັ່ນນີ້ ເບິ່ງຄືວ່າ ຈະດຶງເອົາພະນັກງານ ທີ່ມີປະສົບການອອກຈາກ ວຽກໃນປັດຈຸບັນ, ຈຶ່ງຄວນຈ້າງເອົາພະນັກງານທີ່ດີທີ່ສຸດ ມາປະຕິບັດໂຄງການ. ໜ່ວຍປະຕິບັດ ໂຄງການຕ້ອງຮັບຜິດຊອບ ໃນການຕິດຕາມຄວາມກ້າວໜ້າ ແລະ ການປະຕິບັດ ຂອງໂຄງການ ດ້ວຍຫົວໜ້າທີມ ປະຕິບັດໂຄງການລາຍງານ ເປັນໄຕມາດ ໃຫ້ແກ່ຫົວໜ້າ ໜ່ວຍຈັດຕັ້ງປະຕິບັດໂຄງການ ຂອງກະຊວງກະສິກຳ ແລະ ປ່າໄມ້. ຄວາມກ້າວໜ້າຂອງການປະຕິບັດໂຄງການ ຈະຕ້ອງທົບທວນຄືນເປັນແຕ່ລະປີ ໃນວາລະກອງປະຊຸມ ໂດຍກະຊວງກະສິກຳ ແລະ ປ່າໄມ້ ທີ່ຄວາມກ້າວໜ້າຂອງໂຄງການ ແລະ ຂໍ້ຈຳກັດ ແລະ ບັນຫາສຳຄັນ ແລະ ແຜນການໃນປີ ຕໍ່ໄປຈະຕ້ອງໄດ້ສົນທະນາ ແລະ ຕົກລົງກັນ. ກອງປະຊຸມປະຈຳປີນີ້ ແມ່ນເພື່ອສຳລັບສົນທະນາ ແລະ ທົບທວນ ໂຄງການ ແລະ ແຜນງານ ຂອງແຜນປະຕິບັດການ ເທົ່ານັ້ນ ແລະ ອາດ ເພີ່ມຄວາມຮັບຜິດຊອບ ຂອງອົງການ ໃຫ້ການຊ່ວຍເຫຼືອ ສະເພາະໂຄງການ/ແຜນງານນັ້ນ.

10.2.4 ລາຍຈ່າຍຂອງທຶນທີ່ເກີດຂຶ້ນ.

ບັນຫາ ຂອງທຶນດຳເນີນງານ ແລະ ສ້ອມແປງ ສຳລັບກິດຈະກຳ ກຳລັງດຳເນີນປັດຈຸບັນ ແມ່ນບັນຫາຕົ້ນຕໍ ໃນກະຊວງກະສິກຳ ແລະ ປ່າໄມ້ ແລະ ທຸກໆກະຊວງ ຂອງລັດຖະບານ. ງົບປະມານສຳລັບດຳເນີນງານ ແລະ ສ້ອມແປງຕ່ຳ ແມ່ນປະສົມປະສານກັບ ການຂາດຄວາມສະດວກໃນການຂົນສົ່ງ, ການເງິນຈຳກັດ ສຳລັບອັດກິນລ້ຽງພາກສະໜາມ, ການຄົ້ນຄວ້າ ແລະ ສະຖານທີ່ທົດລອງ ບໍ່ພຽງພໍ ແລະ ຂາດການສ້ອມແປງອັນເໝາະສົມ ສຳລັບອຸປະກອນ ແລະ ວຽກກໍ່ສ້າງທີ່ສຳເລັດ. ຂຶ້ນກັບການແບ່ງປັນງົບປະມານຂອງລັດ ເປັນເຫດໃຫ້ມີຜົນກະທົບເສຍຫາຍ ຕໍ່ການປະຕິບັດການ ຢູ່ພາກສະໜາມ ໃນແຕ່ລະມື້ ແຕ່ລະວັນ. ຍ້ອນແນວນັ້ນ ຈຶ່ງຂໍແນະນຳວ່າ ທຶນໃຊ້ຈ່າຍເພີ່ມເຕີມເກີດຂຶ້ນນີ້ ຄວນມີໄວ້ໃຫ້ແກ່ ແຜນປະຕິບັດການ. ທຶນນີ້ ແມ່ນມີໄວ້ເປັນແຫຼ່ງເພີ່ມເຕີມ ຂອງກິດຈະກຳ ຂອງໂຄງການ/ແຜນງານ ຂອງແຜນປະຕິບັດການ. ຖ້າວ່າ ແລະ ໃນເມື່ອການແບ່ງປັນທຶນ ສຳລັບປະຕິດບັດການ ແລະ ສ້ອມແປງບໍ່ພຽງພໍ. ທຶນດັ່ງກ່າວນີ້ ໃຊ້ສະເພາະ ເປັນອັດຕາກິນ ແລະ ພື້ນຖານຄວາມຕ້ອງການ ແລະ ວຽກສະໜາມ ເຊັ່ນຈ່າຍສຳລັບເຮັດສາທິດປະຈຳວັນ ແລະ ແປງສາທິດ ແລະ ປ້ອງກັນພະຍາດສັດ ແກ່ພະນັກ

ງານລິງສະໜາມ. ທຶນນີ້ ຕ້ອງ ຄຸ້ງຄອງຈັດແບ່ງ ໂດຍສູນກາງ. ກທຶນດັ່ງກ່າວນີ້ ແມ່ນໄດ້ມາ ຈາກ ເງິນທີ່ການຂາຍ ຢາວັກແຊງຈາກ ໂຮງງານຂອງລັດ, ຂາຍແນວພັນພື້ນຖານເຂົ້າ, ແນວ ພັນອື່ນໆ, ຂາຍເບັ້ຍພືດ ແລະ ແນວພັນປາ, ຂາຍງົວ ແລະ ໄກ່ແກ່, ໝູນ້ອຍ ແລະ ລາຍຮັບ ອື່ນໆ ຈາກການປະຕິບັດການ ຂອງລັດ. ທຶນຈະຕ້ອງ ຊ່ວຍອໍານວຍຄວາມສະດວກ ເພື່ອຊຸກຍູ້ ເພື່ອການປະກອບສ່ວນ ການຊ່ວຍເຫຼືອຈາກສາກົນ ແລະ NGO's ຂອງທຶນທີ່ເກີດຂຶ້ນ ເພື່ອ ເພີ່ມເຕີມ ການແບ່ງປັນງົບປະມານລາຍຈ່າຍຂອງລັດທີ່ມີ.

ທຶນດັ່ງກ່າວ ແມ່ນບໍ່ໄດ້ແນະນໍາໃຫ້ ດັ່ງທີ່ ເກີດຂຶ້ນໃນການແບ່ງປັນງົບປະມານປະຈໍາປີຂອງລັດ ສໍາລັບລາຍຈ່າຍ. ພຽງແຕ່ໝາຍຄວາມວ່າ ເປັນການແບ່ງປັນເພີ່ມເຕີມ ແລະ ສໍາຮອງ ສໍາລັບ ບາງແຜນງານ/ໂຄງການ ໃນແຜນປະຕິບັດງານ ທີ່ເຫັນວ່າ ມີຄວາມຈໍາເປັນທີ່ສຸດ ເພື່ອຄວາມ ສໍາເລັດຂອງໂຄງການ. ທຶນ ບໍ່ແມ່ນ ໝາຍຄວາມວ່າ ໃຊ້ ເປັນແຫຼ່ງທຶນສືບຕໍ່ ລາຍຈ່າຍທີ່ເກີດ ຂຶ້ນ ສໍາລັບບາງກິດຈະກໍາ. ມັນໝາຍຄວາມວ່າ ເປັນແຫຼ່ງສໍາຮອງ ຫຼື ສຸກເສີນ ເພື່ອ ຜົນສໍາ ເລັດຂອງໂຄງການ ຫຼື ແຜນງານ ຢູ່ໃນສະພາບ ອັນຕະລາຍ ເຊັ່ນ ກໍລະນີເກີດຄວາມເສຍຫາຍ ຂອງຜົນລະປູກ, ຫຼື ການລະບາດ ຂອງພະຍາດສັດ.

10.2.5 ປະສານງານກັບ ໂຄງການຊ່ວຍເຫຼືອຈາກສາກົນ.

ນະໂຍບາຍ ແລະ ຂັ້ນຕອນ, ໂດຍສະເພາະ ໃນຂົງເຂດໂຄງການພັດທະນາຕາມ ໂຄງການ ຊ່ວຍເຫຼືອຂອງຕ່າງປະເທດ ບໍ່ໄດ້ເປັນແບບດຽວກັນ. ຕົວຢ່າງ ທີມຄະນະສຶກສາໄດ້ພົບວ່າ ການອຸດໜູນຝຸ່ນໃນລາຄາທີ່ແຕກຕ່າງກັນ ພາຍໃຕ້ແຕ່ລະໂຄງການ ທີ່ແຕກຕ່າງກັນ ແລະ ແຕກຕ່າງກັບລາຄາຂອງລັດຖະບານ. ໃນລັກສະນະດຽວກັນນີ້ ກໍຄື ເບັ້ຍໄມ້ໃຫ້ໝາກ ແລະ ການແຈກຢາຍ ແນວພັນປາ. ໃນເວລາດຽວກັນນັ້ນ ພາກສ່ວນເອກະຊົນ ຊໍ້າຂາຍເບັ້ຍໄມ້ ແລະ ແນວພັນປາ ໃນລາຄາທີ່ສູງກວ່າຕະຫຼາດ. ໃນສະພາບດັ່ງກ່າວນີ້ ແມ່ນກົງກັນຂ້າມກັບ ແບບນະໂຍບາຍຂອງລັດຖະບານ ແລະ ໃນເວລາດຽວກັນ ກໍໃຫ້ສັນຍານດ້ານຕະຫຼາດຜິດ ພາດ ແລະ ຂ້າແນວຄິດລິເລີ່ມ ຂອງພາກສ່ວນເອກະຊົນ. ຍ້ອນແນວນັ້ນ ຈຶ່ງມີຄວາມຈໍາເປັນ ໃນການປະສານ ກັບທຸກການແຈກຢາຍ ຂາເຂົ້າ ແລະ ຜົນຜະລິດທີ່ໄດ້ຮັບ ແລະ ນະໂຍບາຍ ລາຄາ ຂອງ ໂຄງການຊ່ວຍເຫຼືອ ຂອງຕ່າງປະເທດ ແລະ ກົດລະບຽບບັງຄັບ ເພື່ອຮັບປະກັນ ວ່າທຸກ ອົງປະກອບຂອງໂຄງການຊ່ວຍເຫຼືອ ຕ່າງປະເທດ ໄປຕາມນະໂຍບາຍ ແລະ ຍຸດທະ ສາດຂອງລັດຖະບານ. ຈຶ່ງຂໍແນະນໍາວ່າ ກ່ອນເລີ່ມຕົ້ນ ແຜນປະຕິບັດການ ກົດລະບຽບໃໝ່ ຈະຕ້ອງໄດ້ເຮັດ ສໍາລັບການປະສານງານ ກິດຈະກໍາຂອງໂຄງການ/ແຜນງານຊ່ວຍເຫຼືອຕ່າງໆ ຂອງຕ່າງປະເທດ ແລະ ກົດລະບຽບ ແລະ ຂັ້ນຕອນລະອຽດຕ່າງໆ ຕ້ອງໃຫ້ ຮູ້ ແລະ ຕົກລົງລະ ຫວ່າງລັດ ແລະ ແລະ ຜູ້ໃຫ້ທຶນ. ນອກຈາກນັ້ນ, ລາຍລະອ ຽດ ຂອງການຈັດຕັ້ງປະຕິບັດ ກັບ ການເນັ້ນໜັກ ຕໍ່ພະນັກງານລັດ ທີ່ພົວພັນ ໃນການຮ່າງ, ການປະຕິບັດ ແລະ ຄຸ້ມຄອງການ ເງິນ ໄດ້ຕົກລົງ ກ່ອນເລີ່ມຕົ້ນໂຄງການ.

10.2.6 ຕ້ອງການກົນໄກ ສຳລັບການປະສານງານພາຍໃນອົງການ.

ໂຄງການ ແລະ ແຜນງານເກືອບທັງໝົດ ຕ້ອງການ ການຈັດຕັ້ງປະຕິບັດ ຢ່າງກົມກຽວກັນ ຈາກຫຼາຍກວ່ານຶ່ງອົງການຂອງລັດ. ນອກຈາກນັ້ນ, ແຜນງານທັງໝົດທີ່ຢູ່ໃນລາຍການທີ່ນີ້ ມີຄວາມຮັບຜິດຊອບຈາກ ອົງການຈັດຕັ້ງ ຢູ່ນອກກະຊວງກະສິກຳ ແລະ ປ່າໄມ້. ຕົວຢ່າງ ທາງຊົນນະບົດ, ການຫັດຖະກຳ, ການເງິນຊົນນະບົດ ແລະ ແນວຄິດລິເລີ່ມດ້ານການຄ້າ ແມ່ນຄວາມຮັບຜິດຊອບ ດ້ານພື້ນຖານຈາກອົງການຈັດຕັ້ງອື່ນທັງໝົດ. ຍ້ອນແນວນັ້ນ ຈຶ່ງເປັນແກ່ນສານ ແລ້ວວ່າ ແຜນງານທັງໝົດເຫຼົ່ານີ້ ຈຶ່ງເປັນ ການກົມກຽວກັນ ແລະ ເປັນຂັ້ນຕອນ ຄັກແນ່ ເພື່ອຮັບປະກັນ ຜົນກະທົບສູງສຸດ. ຕົວຢ່າງ, ໂຄງການປັບປຸງເຕັກໂນໂລຊີ ການປູກຝັງ ຈະບໍ່ມີຜົນກະທົບອັນສູງສຸດ ຖ້າຫາກວ່າ ໂຄງການການເງິນຊົນນະບົດ ບໍ່ໄດ້ປະສົມປະສານເຂົ້າໃນໂຄງການນີ້. ເປັນຄວາມສຳຄັນອີກດ້ານນຶ່ງກໍຄື ການຮັບປະກັນຂອງຂະບວນການງົບປະມານ ໄດ້ຮັບການແບ່ງປັນທຶນ ຢ່າງກົມກຽວກັນ. ນີ້ໝາຍຄວາມວ່າ ການປະສານງານຈຶ່ງຮຽກຮ້ອງຈາກຫຼາຍພາກສ່ວນ ສຳລັບທຶນງົບປະມານ ສຳລັບໂຄງການນີ້. ຂໍແນະນຳຕື່ມວ່າ ເພື່ອເຮັດໃຫ້ຮັບປະກັນການປະສານງານນີ້ ຫົວໜ່ວຍ ວຽກນຶ່ງ ພ້ອມດ້ວຍທຸກໜ່ວຍງານຍ່ອຍໄດ້ຮັບການສ້າງຕັ້ງຂຶ້ນ. ໜ່ວຍງານນີ້ຕ້ອງມີພະນັກງານປະຈຳ ເພາະໃຊ້ເວລາຍາວນານ ຂອງແຜນປະຕິບັດການ. ຫົວໜ່ວຍດັ່ງກ່າວ ຕ້ອງ ເໜືອລະດັບກະຊວງ ແລະ ຕ້ອງຮັບຜິດຊອບ ເື້ອປະສານງານ, ຮວມທັງການປະສານກັບ ຂາເຂົ້າຈາກການຊ່ວຍເຫຼືອ, ຮັບປະກັນການແບ່ງທຶນໃຫ້ມີພຽງພໍ, ຮັບປະກັນພະນັກນັກງານສະໜັບສະໜຸນ ແລະ ຮັບເຂົ້າໃໝ່ຢ່າງພຽງພໍ, (ລະດັບອົງການຈັດຕັ້ງພາຍໃນ), ຖ້າຫາກຈຳເປັນ ແລະ ດຳເນີນ ການທົບທວນຄືນ ຄວາມກ້າວໜ້າໂຄງການ/ແຜນງານຢ່າງປົກກະຕິ ດ້ວຍທັດສະນະ ຮັບປະກັນການປະສານງານ ແລະ ເພື່ອລຶບລ້າງສິ່ງຫຍໍ້ທໍ້ຕ່າງໆ.

10.2.7 ກອງປະຊຸມປະຈຳປີ ເພື່ ອທົບທວນ ແລະ ລາຍງານແກ່ ຜູ້ໃຫ້ທຶນ.

ການປະກອບສ່ວນການລົງທຶນຂອງຜູ້ໃຫ້ທຶນ ແກ່ການລົງທຶນຂອງລັດ ຄາດວ່າ ຈະເປັນແກ່ນສານ. ຍ້ອນແນວນັ້ນ ຈຶ່ງຈຳເປັນ ຮັບປະກັນວ່າ ການຈັດບຸລິມະສິດ ແລະ ຈັດວາງລຳດັບ ຈະຕ້ອງຕິດພັນກັນ. ຍ້ອນການຄວາມຈຳເປັນທີ່ສຸດຂອງ ຂອງການຊ່ວຍເຫຼືອຈາກຜູ້ໃຫ້ທຶນ ໃນການຈັດຕັ້ງປະຕິບັດ ແຜນປະຕິບັດການ, ຈຶ່ງແນະນຳວ່າ ໃນເມື່ອ ແຜນດັ່ງກ່າວໄດ້ຮັບການຮັບຮອງຈາກລັດຖະບານແລ້ວ, ຈະຕ້ອງໄດ້ຈັດກອງປະຊຸມ ຂອງຜູ້ໃຫ້ທຶນທັງໝົດ ລວມທັງ NGO's. ຈຸດປະສົງຂອງກອງປະຊຸມ ຈະໄດ້ອະທິບາຍ ໃຫ້ຈະແຈ້ງ ເຖິງເປົ້າໝາຍ ແລະ ຈຸດປະສົງ ຂອງແຜນປະຕິບັດການ; ການໃຫ້ບຸລິມະສິດ ແລະ ຈັດລຳດັບ ແລະ ອະທິບາຍເຖິງການປະຕິບັດການ ຂອງລັດຖະບານ ທີ່ຈະຕ້ອງໄດ້ເຮັດກ່ອນ ເພື່ອຊ່ວຍເຫຼືອການຈັດຕັ້ງປະຕິບັດແຜນການ. ກອງປະຊຸມກໍຈະຊ່ວຍ ອະທິບາຍ ຄວາມຮັບຜິດຊອບຂອງລັດຖະບານ ຢ່າງຈະແຈ້ງ ຂອງວຽກທີ່ຈະຕ້ອງໄດ້ເຮັດກ່ອນ ແລະ ບັນຫາທີ່ພົວພັນອື່ນໆ ແກ່ການຈັດຕັ້ງປະຕິບັດ. ເປັນການທົບທວນຄືນ ການສະເໜີຂອງລັດຖະບານ ສຳລັບການ ສ້າງຄວາມເຂັ້ມແຂງ ຄວາມອາດສາມາດ ຂອງການຈັດຕັ້ງປະຕິບັດ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການຈັດຕັ້ງຂອງການປົກຄອງທ້ອງຖິ່ນ, ແລະ ບາງການສະເໜີ ເພື່ອປັບປຸງ ໂຄງການວິຊາການ ແລະ ການເງິນ ແບບຍືນນານ.

ກອງປະຊຸມຄວນຈັດຂຶ້ນ ເປັນແຕ່ລະປີ ແລະ ເພື່ອຍົກໃຫ້ເຫັນຄວາມກ້າວໜ້າຂອງແຕ່ລະໂຄງການ ແລະ ແຜນງານ, ການປະຕິບັດການຂອງລັດຖະບານ ສຳລັບຊ່ວຍ ການຈັດຕັ້ງປະຕິບັດ, ຂໍ້ຈຳກັດ ແລະ ສິ່ງຍໍ້ທໍ້ ຂອງໂຄງການທີ່ປະເຊີນ ແລະ ແຜນຂອງການປະຕິບັດການ ສຳລັບປີທີ່ຈະມາເຖິງ. ກອງປະຊຸມປະຈຳປີ ຈະຕ້ອງຍົກ ຄວາມກ້າວໜ້າທັງໝົດ ຂອງຂະແໜງການກະສິກຳ ແລະ ບົດສະເໜີໂຄງການ ແລະ ເປົ້າໝາຍ ສະລັບປີຈະມາເຖິງ.

10.2.8 ການຕິດພັນ ຂອງກະຊວງກະສິກຳ ແລະ ປ່າໄມ້-ແຂວງ

ທີມຄະນະສຶກສາ ໄດ້ຕີລາຄາ ວ່າການຕິດພັນລະຫວ່າງກະຊວງກະສິກຳ ແລະ ປ່າໄມ້ ອົງການຈັດຕັ້ງຂອງລັດຢູ່ທ້ອງຖິ່ນ ໃນແງ່ຂອງການຕິດພັນກັນ ຂອງການຈັດຕັ້ງປະຕິບັດ ຍັງອ່ອນຫຼາຍຕໍ່ການແບ່ງຂັ້ນຄຸ້ມຄອງ. ໃນຂະນະທີ່ພະນັກງານ ແລະ ການບໍລິຫານຂອງລັດ ຢູ່ລະດັບ ພະແນກຂອງແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສືບຕໍ່ອ່ອນຕໍ່ໄປ, ທຶນງົບປະມານ ແມ່ນເພີ່ມຂຶ້ນ ຢູ່ໃນມືຂອງຫ້ອງການເຈົ້າແຂວງ ແລະ ກະຊວງກະສິກຳ ແລະ ປ່າໄມ້ ມີໜ້ອຍດຽວ ຫຼື ບໍ່ທຳໜ້າທີ່ການຕິດຕາມ ຫຼື ປະຕິບັດ. ສະພາບດັ່ງກ່າວນີ້ ແມ່ນບໍ່ເປັນການສະໜັບສະໜູນ ໃນເມື່ອກ້າວເຂົ້າປະຕິບັດແຜນປະຕິບັດການ. ຍ້ອນແນວນັ້ນ ຈຶ່ງສະເໜີວ່າ ກົມແຜນການ ຂອງກະຊວງກະສິກຳ ແລະ ປ່າໄມ້ ກ້າວເຂົ້າ ຕິດຕາມ ແລະ ປະເມີນຜົນ ກິດຈະກຳຕ່າງໆ ແລະ ຕິດຕາມການເງິນ ແລະ ຕິດຕາມຜົນສຳເລັດ ຂອງໂຄງການ. ມີຄວາມຈຳເປັນສຳລັບກົມແຜນການ ກະຊວງກະສິກຳ ແລະ ປ່າໄມ້ ບໍ່ພຽງແຕ່ ຕິດຕາມໂຄງການ ແລະ ແຜນງານ ແຕ່ວ່າ ດຳເນີນທຳໜ້າທີ່ ຈັດຕັ້ງປະຕິບັດໂຄງການ ຍ້ອນແນວນັ້ນ ຈຶ່ງເປັນຜູ້ຢູ່ໃນທ່າເພື່ອກຳນົດ ການຫຼ້າຊ້າ, ຄວາມຍໍ້ທໍ້, ແລະ ຄວາມຈຳກັດ ແລະ ການເລີ່ມລົງມື ຮ່ວມກັບ ອົງການຈັດຕັ້ງຕ່າງໆ ເພື່ອຈັດຕັ້ງປະຕິບັດ. ກົມແຜນການ ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງດຳເນີນ ການຕີລາຄາ ຂອງໂຄງການ/ແຜນງານ ບົນພື້ນຖານປົກກະຕິເພື່ອຮັບປະກັນການລົງມືຕາມເວລາ ໃນກໍລະນີ ຂອງບາງສິ່ງຍໍ້ທໍ້.

10.2.9 ການຮວມເອົາການລົງທຶນຂອງລັດ ເຂົ້າກັບແຜນປະຕິບັດການ.

ຂະບວນການ ການລົງທຶນຂອງລັດແຕ່ລະປີ ແມ່ນຢູ່ໃນນະໂຍບາຍລວມ, ບູລິມະສິດ ແລະ ເປົ້າໝາຍອອກໃຫ້ໂດຍ ຄະນະກຳມະການແຜນການ ແລະ ການຮ່ວມມື ກັບ ກະຊວງການເງິນ ກຳນົດລະດັບເພດານ ຂອງທຶນສຳລັບໃຊ້ຈ່າຍ. ຕາມສາຍຂອງກະຊວງຕ່າງໆ ແລະ ແຂວງ ກໍເຮັດຕາມພື້ນຖານແຜນການຂອງຂະແໜງການ ຕໍ່ຂໍ້ກຳນົດ ແລະ ເປົ້າໝາຍຂອງຊາດ. ຂັ້ນຕອນສຳລັບການກະກຽມ ການລົງທຶນຂອງລັດ ແມ່ນຂັ້ນຕອນແຕ່ເທິງລົງລຸ່ມຫຼາຍ ແລະ ແຕ່ລຸ່ມຫາເທິງ ຄືອຳນາດການປົກຄອງເມືອງ ແລະ ບ້ານໄດ້ພົວພັນກ່ຽວກັບການສ້າງ. ຫຼັງຈາກຂັ້ນຕອນການປຶກສາຫາລືນີ້ແລ້ວ ແຜນລົງທຶນຂອງລັດກໍໄດ້ສົ່ງຫາລັດຖະບານ ແລະ ໃນຂັ້ນສຸດທ້າຍ ກໍສະເໜີຮັບຮອງເອົາໂດຍສະພາແຫ່ງຊາດ. ຈຶ່ງຂໍແນະນຳວ່າ ການຊວງກະສິກຳ ແລະ ປ່າໄມ້ ສ້າງຄວາມເຂັ້ມແຂງໃຫ້ແກ່ ຄວາມອາດສາມາດ ໃນການວາງແຜນ ແລະ ປະຕິບັດ ເພື່ອສາມາດ ປະຕິບັດໄດ້ ແຜນປະຕິບັດການ ແລະ ໂຄງການ/ແຜນງານ ບູລິມະສິດ ທີ່ໄດ້ຄັດເລືອກ. ຍິ່ງໄປກວ່ານັ້ນ ກະຊວງກະສິກຳ ແລະ ປ່າໄມ້ຕ້ອງໄດ້ ຮວມເອົາ ແຜນປະຕິ

ບັດການ ເຂົ້າໃນແຜນຂອງຂະແນງການກະສິກຳຂອງຕົນ ແລະ ອອກຂໍ້ກຳນົດ ຕັ້ງແຕ່ຕົ້ນຂອງແຕ່ລະແຜນການປີ ໃຫ້ແຂວງ ແລະ ເມືອງ ເພື່ອຮັບປະກັນ ຂັ້ນຕອນຂອງແຜນການການລົງທຶນຂອງລັດ ສະທ້ອນເຖິງ ບູລິມະສິດຂອງແຜນປະຕິບັດການໄດ້ເປັນຢ່າງດີ. ກະຊວງກະສິກຳ ແລະ ປ່າໄມ້ ຄວນຮັບຜິດຊອບເພື່ອສະເໜີຕໍ່ ກະຊວງການເງິນ ແລະ ຄະນະກຳມະການແຜນການ ແລະ ຮ່ວມມື ດ້ານທຶນ ແລະ ລາຍຈ່າຍເກີດຂຶ້ນປະຈຳປີ ທີ່ຕ້ອງການນຳຄືການປະກອບສ່ວນ ຕໍ່ການຊ່ວຍເຫຼືອ ແລະ ທຳມະຊາດຂອງການປະກອບສ່ວນຕ່າງໆ. ກະຊວງກະສິກຳ ແລະ ປ່າໄມ້ ກໍທົບທວນຮ່າງແຜນປະຕິບັດການດັ່ງກ່າວ ເປັນແຕ່ລະ ຫ້າປີ ເພື່ອຮັບປະກັນວ່າແຜນປະຕິບັດການ ແມ່ນສອດຄ່ອງກັບແຜນພັດທະນາຫ້າປີ.

10.2.10 ບົດບາດການຄຸ້ມຄອງຂອງລັດຕໍ່ແຜນປະຕິບັດການ

ທັງລັດ ແລະ ຜູ້ໃຫ້ທຶນ ໄດ້ສະແດງການກ່ຽວຂ້ອງ ຕໍ່ຄວາມຫຍຸ້ງຍາກ ໃນການປະຕິບັດໂຄງການ (ກອງປະຊຸມໂຕະມົນຄັ້ງທີ 7, ເດືອນ ຕຸລາ 1999). ການສ້າງຄວາມອາດສາມາດ ແມ່ນມີຄວາມຈຳເປັນ ຢູ່ທຸກລະດັບ ແລະ ຂາດພະນັກງານທີ່ມີຄວາມຮູ້ຄວາມສາມາດ ເປັນສິ່ງກີດຂວາງ ເພື່ອປັບປຸງການປະຕິບັດ. ສິ່ງດັ່ງກ່າວນີ້ ກ່ຽວພັນກັບຫຼາຍປັດໃຈ, ສິ່ງສຳຄັນທີ່ສຸດແມ່ນລະດັບການຕອບແທນຕ່ຳ ເຊັ່ນຄ່າຈ້າງ ແລະ ເງິນເດືອນ ຂອງພະນັກງານລັດ ໄດ້ລົດລົງຢ່າງເຫັນໄດ້ຊັດ ທັງເປີເຊັນຂອງ GDP ແລະ ໃນແງ່ຂອງຕົວຈິງ ໃນຊຸມປີມໍ່ໆມານີ້. ນອກຈາກນັ້ນຂາດການກະຕຸກຊຸກຍູ້ ສຳລັບການໄປເຮັດວຽກຢູ່ເຂດຫ່າງໄກ, ຂາດຄວາມສະດວກໃນການຂົນສົ່ງ, ແລະ ການເງິນທີ່ອະນຸມັດໃຫ້ ຄ່າອັດຕາລົງສະໜາມຈຳກັດ ແລະ ງົບປະມານປະຕິບັດການ ແລະ ສ້ອມແປງຕ່ຳ, ທັງໝົດນີ້ ແມ່ນຈຳກັດ ຄວາມສາມາດໃນການປະຕິບັດຢູ່ທຸກລະດັບ. ອັນນີ້ກໍສະທ້ອນເຖິງຄວາມສາມາດຍາດແຍ່ງເອົາການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຜູ້ໃຫ້ທຶນໄດ້ຕ່ຳ. ເຖິງແມ່ນວ່າຂັ້ນຕອນ ດ້ານການເງິນ ມີການຜ່ອນສັ້ນຜ່ອນຍາວຢູ່ເລື້ອຍກໍຕາມ ໃນໂຄງການຊ່ວຍເຫຼືອຈາກຕ່າງປະເທດ. ການຈຳກັດຄວາມສາມາດ ຢູ່ລະດັບທ້ອງຖິ່ນຕາມບັນຫາພົວພັນດັ່ງກ່າວຂ້າງເທິງ ແມ່ນຂົງເຂດຕົ້ນຕໍ ທີ່ຕ້ອງໄດ້ເນັ້ນ ໂດຍຄະນະກຳມະການປັບປຸງການປົກຄອງຂອງລັດ ທີ່ຕ້ອງໄດ້ເບິ່ງທັງໝົດຂອງແຜນການປັບປຸງ ທົ່ວລະດັບການປົກຄອງ ແລະ ການບໍລິຫານຂອງລັດ. ເຖິງຢ່າງໃດກໍຕາມກໍຈະບໍ່ມີຄຳຕອບ ແລະ ການແກ້ໄຂບັນຫາ ທີ່ງ່າຍດາຍ ເບິ່ງຄືວ່າຈະໃຊ້ເວລາຫຼາຍປີ. ໃນເວລາດຽວກັນນັ້ນ, ຈຶ່ງສະເໜີວ່າລັດຖະບານ ຄວນກວດສອບຢ່າງສະໝ່ຳສະເໝີ ແລະ ທົບທວນການປະຕິບັດ ຂອງແຜນປະຕິບັດການ ແລະ ລົງມືຄັດເລືອກ ເປັນແຕ່ລະບັ້ນ ເພື່ອປັບປຸງການປະຕິບັດ ແຜນປະຕິບັດການ.

10.2.11 ການຮ່າງໂຄງການ ແລະ ການປະເມີນມູນຄ່າ.

ລາຍຊື່ຂອງແຜນງານຂອງໂຄງການ ທີ່ມີຢູ່ໃນ ແຜນປະຕິບັດການ ເປັນລັກສະນະກະໂຫຼກທົ່ວ. ຈຸດປະສົງຂອງໂຄງການ, ຍຸດທະສາດ, ການອອກແບບ ແລະ ມູນຄ່າຂອງອົງປະກອບ ຕ້ອງການໃຫ້ປະເມີນຄືນ ຈາກຂໍ້ມູນໃນຕໍ່ໜ້າ. ນອກຈາກນັ້ນ ການຄາດຄະເນມູນຄ່າ ຂອງໂຄງການ/ແຜນງານທີ່ໄດ້ສະເໜີ ຕ້ອງການໄດ້ປັບຄືນ. ໂຄງການ ແລະ ແຜນງານທັງໝົດ ທີ່ໄດ້ກຳນົດໃນທີ່ນີ້ຍັງບໍ່ແມ່ນພຽງພໍໂດຍພື້ນຖານ ສຳລັບປະຕິບັດ. ຈຶ່ງຂໍແນະນຳວ່າ ວຽກສືບຕໍ່ລະອຽດ

ແມ່ນມີຄວາມຈຳເປັນ ແລະ ຈະຕ້ອງດຳເນີນ ຕັ້ງແຕ່ໄລຍະຕົ້ນ, ຢ່າງໜ້ອຍ ສຳລັບໂຄງການທີ່ຢູ່ໃນບຸລິມະສິດ.

# ເອກະສານຄັດຕິດ - 1

# ສັງລວມລັກສະນະດ້ານກະສິກຳ ແລະ ທ່າແຮງໃນການພັດທະນາ

## ສັງລວມລັກສະນະດ້ານກະສິກຳ ແລະ ທ່າແຮງການພັດທະນາ

| ແຂວງ | ເມືອງ | ຄວາມສ່ຽງໄພຕ UXO | ວິເຄາະທ່າແຮງ( ເຮັກຕາ/ຄົນ) | ຈັດກຸ່ມ |
|---|---|---|---|---|
| ຜົ້ງສາລີ | ຜົ້ງສາລີ | 0 | 3,8 | 1 |
| | ຍອດອູ | 0 | 10,9 | 2 |
| | ສຳພັນ | 1 | 3,1 | 1 |
| | ບຸນເໜືອ | 0 | -1.4 | 2 |
| | ບຸນໄຕ້ | 0 | -1.0 | 1 |
| | ໃໝ່ | 1 | 11.0 | 1 |
| | ເກົ້າ | 1 | -1.0 | 1 |
| ຫຼວງນ້ຳທາ | ສິງ | 1 | -1.5 | 1 |
| | ລອງ | 0 | -1.0 | 1 |
| | ຫຼວງນ້ຳທາ | 1 | -1.2 | 2 |
| | ວຽງພູຄາ | 1 | -0.1 | 1 |
| | ນານ | 1 | -1.8 | 1 |
| ອຸດົມໄຊ | ຫຼ້າ | 0 | -2.0 | 1 |
| | ໄຊ | 0 | -2.2 | 1 |
| | ເບັ້ງ | 0 | -3.3 | 1 |
| | ຮອນ | 0 | -1.1 | 1 |
| | ຍາ | 0 | -1.0 | 1 |
| | ປາກເບັ້ງ | 0 | -1.2 | 1 |
| | ນາໂມ | 0 | -3.1 | 1 |
| ບໍ່ແກ້ວ | ເມິອງ | 0 | -1.0 | 6 |
| | ຫ້ວຍຊາຍ | 0 | -1.8 | 2 |
| | ພາ-ອຸດົມ | 0 | -1.6 | 6 |
| | ປາກທາ | 0 | -3.1 | 1 |
| | ທົ່ງພຽງ | 0 | -2.8 | 2 |
| ຫຼວງພະບາງ | ນ້ຳບາກ | 2 | -1.9 | 1 |
| | ຍ່ອຍ | 4 | -1.4 | 8 |
| | ປາກອູ | 2 | -1.6 | 1 |

| | | | | |
|---|---|---|---|---|
| | ປາກເຊັງ | 1 | -1.2 | 1 |
| | ຫຼວງພະບາງ | 2 | -1.6 | 1 |
| | ຈອມເພັດ | 2 | 0.0 | 1 |
| | ຊຽງເງິນ | 2 | -0.1 | 1 |
| | ວຽງຄຳ | 1 | -0.3 | 1 |
| | ພູຄູນ | 1 | 9.9 | 1 |
| | ໂພນໄຊ | 1 | -1.6 | 1 |
| | ນານ | 0 | 4.5 | 1 |
| ຫົວພັນ | ຊຳ-ໃຕ້ | 1 | -2.1 | 1 |
| | ຫົວເມືອງ | 1 | 3.7 | 1 |
| | ວຽງໄຊ | 2 | -2.3 | 2 |
| | ຊຳເນືອ | 1 | 2.2 | 2 |
| | ວຽງທອງ | 1 | 5.8 | 2 |
| | ແອັດ | 2 | -2.2 | 2 |
| | ຊຽງໂຄ | 2 | -1.9 | 2 |
| | ສົບບາວ | 2 | -2.7 | 2 |
| ໄຊຍະບູລີ | ຄົບ | 0 | -3.3 | 2 |
| | ຊຽງຫອນ | 0 | -3.0 | 2 |
| | ເງິນ | 0 | -3.6 | 2 |
| | ຫົງສາ | 0 | -1.1 | 2 |
| | ບໍ່ແຕນ | 0 | 1.7 | 9 |
| | ພຽງ | 0 | -1.0 | 2 |
| | ໄຊຍະບູລີ | 0 | 4.0 | 2 |
| | ປາກລາຍ | 0 | -1.7 | 2 |
| | ແກ່ນທ້າວ | 0 | 3.0 | 9 |
| | ທອງມີໄຊ | 0 | -2.3 | 2 |
| ກຳແພງນະຄອນ | ຫາດຊາຍຟອງ | 0 | -0.9 | 7 |
| | ໄຊເສດຖາ | 0 | -1.4 | 7 |
| | ຈັນທະບູລີ | 0 | -0.6 | 7 |

| | | | | |
|---|---|---|---|---|
| | ສີສັດຕະນາກ | 0 | -0.5 | 7 |
| | ສີໂຄດຕະບອງ | 0 | -0.9 | 7 |
| | ສັງທອງ | 2 | -3.6 | 5 |
| | ໄຊທານີ | 0 | -1.5 | 5 |
| | ນາຊາຍທອງ | 0 | -2.8 | 5 |
| | ປາກງື່ມ | 2 | -3.4 | 5 |
| ຊຽງຂວາງ | ໜອງແຮດ | 2 | -0.8 | 8 |
| | ແປກ | 5 | -2.4 | 2 |
| | ຄຳ | 3 | -1.4 | 2 |
| | ຄູນ | 4 | -1.2 | 2 |
| | ພາໄຊ | 4 | 6.9 | 2 |
| | ພູກູດ | 2 | 3.0 | 2 |
| | ໝອກໃໝ່ | 1 | 8.3 | 2 |
| ແຂວງວຽງຈັນ | ຊະນະຄາມ | 1 | 1.5 | 2 |
| | ເຟືອງ | 2 | -4.4 | 2 |
| | ໂພນໂຮງ | 0 | -4.1 | 5 |
| | ວັງວຽງ | 2 | -3.5 | 2 |
| | ແກ້ວອຸດົມ | 0 | -3.8 | 5 |
| | ກາສີ | 1 | 3.2 | 2 |
| | ທຸລະຄົມ | 0 | -3.3 | 5 |
| | ຫີນເຫີບ | 2 | -3.8 | 2 |
| | ວຽງຄຳ | 0 | -2.7 | 5 |
| | ແມດ | 1 | -4.4 | 2 |
| ບໍລິຄຳໄຊ | ປາກຊັນ | 2 | -1.4 | 5 |
| | ວຽງທອງ | 1 | 2.7 | 1 |
| | ປາກກະດິງ | 1 | -1.4 | 2 |
| | ຄຳເກີດ | 1 | -1.2 | 2 |
| | ບໍລິຄຳໄຊ | 1 | -2.2 | 1 |
| | ທ່າພະບາດ | 0 | -3.3 | 5 |

| | | | | |
|---|---|---|---|---|
| ຄຳມ່ວນ | ຫີນບູນ | 1 | -2.3 | 3 |
| | ນາກາຍ | 1 | -1.9 | 6 |
| | ທ່າແຂກ | 2 | -3.3 | 3 |
| | ມະຫາໄຊ | 4 | -4.7 | 3 |
| | ບົວລະພາ | 2 | -3.6 | 6 |
| | ໄຊບົວທອງ | 4 | -3.0 | 6 |
| | ເຊບັ້ງໄຟ | 5 | -4.1 | 3 |
| | ໜອງບົກ | 0 | -2.4 | 4 |
| | ຍົມມະລາດ | 4 | -4.2 | 3 |
| ສະຫັວນນະເຂດ | ເຊໂປນ | 4 | -2.5 | 1 |
| | ນອງ | 1 | -2.0 | 6 |
| | ທ່າພັງທອງ | 1 | -5.0 | 3 |
| | ຄັນທະບູລີ | 0 | -3.0 | 3 |
| | ໄຊບູລີ | 2 | -4.1 | 4 |
| | ສອງຄອນ | 0 | -6.0 | 4 |
| | ອຸທຸມພອນ | 2 | -2.6 | 3 |
| | ສອນບູລີ | 5 | -6.3 | 3 |
| | ອາດສະພັງທອງ | 5 | -3.4 | 4 |
| | ອາດສະພອນ | 3 | -4.5 | 3 |
| | ວີລະບູລີ | 4 | -4.5 | 6 |
| | ພີນ | 1 | -4.9 | 6 |
| | ໄຊພູທອງ | 0 | -2.8 | 4 |
| | ພະລານໄຊ | 5 | -4.0 | 3 |
| | ຈຳພອນ | 2 | -3.4 | 4 |
| ໄຊສົມບູນ | ທ່າໂທມ | 2 | -3.5 | 2 |
| | ພອນ | 4 | 5.5 | 2 |
| | ໄຊສົມບູນ | 0 | 16.6 | 2 |
| | ລອງຊານ | 1 | -6.8 | 2 |
| | ໂຮມ | 1 | -5.4 | 2 |

| | | | | |
|---|---|---|---|---|
| ສາລະວັນ | ສາມ້ວຍ | 4 | -1.4 | 1 |
| | ທຶມລ່າງ | 5 | -5.3 | 3 |
| | ຕາໂອຍ | 1 | -0.7 | 1 |
| | ລະຄອນເພັງ | 2 | -2.6 | 4 |
| | ວາປີ | 5 | -4.0 | 4 |
| | ສາລະວັນ | 5 | -4.2 | 4 |
| | ເລົ່າງາມ | 5 | -1.7 | 1 |
| | ຄົງເຊໂດນ | 5 | -3.0 | 4 |
| ເຊກອງ | ຄະມຸ | 1 | 0.1 | 1 |
| | ດັກຈຶງ | 4 | -1.8 | 1 |
| | ລາມຳ | 1 | -2.5 | 1 |
| | ທ່າແຕງ | 5 | -2.0 | 1 |
| ຈຳປາສັກ | ສະນະສົມບູນ | 3 | -3.1 | 4 |
| | ປາກເຊ | 3 | -2.6 | 3 |
| | ໂພນທອງ | 2 | -4.7 | 4 |
| | ບາຈຽງຈະເລີນ | 2 | -2.2 | 1 |
| | ປາກຊ່ອງ | 1 | 7.0 | 10 |
| | ປະທຸມພອນ | 1 | -3.9 | 3 |
| | ຄອງ | 2 | -3.0 | 3 |
| | ເມືອງລາປະໂມກ | 1 | -1.5 | 3 |
| | ຈຳປາສັກ | 2 | -4.3 | 4 |
| | ສຸກກຸມມານ | 2 | -4.7 | 4 |
| ອັດຕະປື | ໄຊເສດຖາ | 2 | -3.7 | 3 |
| | ຊານໄຊ | 1 | -1.1 | 1 |
| | ພູວົງ | 1 | 5.7 | 6 |
| | ສະໜາມໄຊ | 1 | -4.3 | 3 |
| | ສາມັກຄີໄຊ | 5 | -3.3 | 3 |

# ເອກະສານຄັດຕິດ - 2
# ບັນຊີໂຄງການ ແລະ ແຜນງານທີ່ສະເໜີ

## 1. ການພັດທະນາຊັບພະຍາກອນດິນ ແລະ ນ້ຳ

| ລ/ດ | ຊື່ໂຄງການ/ແຜນງານ | ອົງການປະຕິບັດ | ໄລຍະ | ທີ່ຕັ້ງ | ຈຸດປະສົງ | ໜ້າວຽກ |
|---|---|---|---|---|---|---|
| 1 | ສ້າງຄວາມເຂັ້ມແຂງໃຫ້AUP/LA, ຂື້ນທະບຽນ ແລະ ອອກໃບຕາດິນຢູ່ເຂດຊົນນະບົດ | ໂຄງການຫຼຸດຜ່ອນການຖາງປ່າເຮັດໄຮ່, ກົມແຜນການ, ກະຊວງ ກປ ແລະ ກປ ແຂວງ | A (S) | ທົ່ວປະເທດ | (1) ປັບປຸງລະບົບ AUP/LA ທີ່ມີຢູ່ໃນປະຈຸບັນ ດ້ວຍການວິເຄາະວາງແຜນໃນລະດັບມະຫາພາກ ອີງໃສ່ ເປົ້າໝາຍພັດທະນາລະດັບຊາດ ແລະ ແຜນການລະດັບມະຫາພາກ ອີງໃສ່ຄວາມຕ້ອງການຂອງການພັດທະນາທ້ອງຖິ່ນ.(2) ປັບປຸງລະບົບ ການກວດກາປະເມີນຜົນ ຂອງ AUP/LAເພື່ອແນໃສ່ ສົ່ງເສີມໃຫ້ ບ້ານຄຸ້ມຄອງກະສິກຳ ປ່າໄມ້ ແລະ ຊັບພະຍາກອນອື່ນໆ.(3) ພັດທະນາຂັ້ນຕອນການສຳເນົາ ຂໍ້ມູນຂອງ AUP/LA ເພື່ອສ້າງເງື່ອນໄຂສະດວກ ໃຫ້ແກ່ການຂຶ້ນທະບຽນທີ່ດິນໃນອະນາຄົດ | (1) ຂະຫຍາຍຕາໜ່າງຂອງບັນດາອົງການ ຂອງລັດຖະບານ ທີ່ກ່ຽວຂ້ອງກັບ AUP/LA .(2) ພັດທະນາແຜນປະຕິບັດ ແຫ່ງຊາດ ໂດຍອີງໃສ່ມາດຕະຖານເພື່ອໃຫ້ບູລິມະສິດ .(3) ສ້າງກິດຈະກຳຕິດຕາມ ຮ່ວມກັນລະຫວ່າງບ້ານ ແລະ AUP/LA. (4) ຂັ້ນຂະຫຍາຍວິທີການກວດກາຕາດິນ (5) ດຳເນີນການຝຶກອົບຮົມ ສຳລັບພະນັກງານລະດັບຊາດ ແຂວງ ແລະ ເມືອງ (6) ພິຈາລະນາຄືນ ບັນດາຂັ້ນຕອນກວດກາປະເມີນຜົນ (7) ພັດທະນາລະບົບ ສຳເນົາຂໍ້ມູນຂ່າວສານ |
| 2 | T/A ກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳ ຂ່ວມ ທົ່ວປະເທດ. | STEA /ກປ | B | ທົ່ວປະເທດ | (1) ພັດທະນາແຜນການນຳໃຊ້ ແລະ ແຈກຢາຍນ້ຳ ສຳລັບຂະແໜງການກະສິກຳ, ຕົວເມືອງ, ອຸດສາຫະກຳ ແລະ ພະລັງງານ. (2) ຄວບຄຸມຄຸນນະພາບ ແລະ ປະລິມານຂອງນ້ຳສຳລັບຜູ້ຊົມໃຊ້. | (1) ປັບປຸງວິທີນຳໃຊ້ນ້ຳ ຢ່າງມີຜົນສູງສຸດ ລະຫວ່າງ ຂະແໜງການຕ່າງໆ ທີ່ພົວພັນກັບນ້ຳ, (2) ສ້າງແຜນການພັດທະນາຊັບພະຍາກອນນ້ຳ ຢ່າງແທດເໝາະ ແລະ ມີລັກສະນະຍືນຍົງດ້ານສິ່ງແວດລ້ອມ, (3) ປະກອບອຸປະກອນ ແລະ ວິທີການ ທົດສອບນ້ຳ ຢ່າງແທດເໝາະ. |
| 3 | ແຜນງານຄຸ້ມຄອງ ເຂດອ່າງນ້ຳ ແລະ ອ່າງໂຕ່ງນ້ຳ. | STEA/ກປ | A (S) | ທົ່ວປະເທດ | (1) ຮັບປະກັນຊັບພະຍາກອນນ້ຳ ສຳລັບກິດຈະການເສດຖະກິດ ແລະ ສັງຄົມ ທີ່ພົວພັນກັບນ້ຳ, ໄຟຟ້ານ້ຳຕົກ, ຊົນລະປະທານ, ການປະມົງ ແລະ ອື່ນໆ; (2) ປ້ອງກັນປະຊາຊົນ ແລະ ຊັບສິນ ແລະ ທີ່ດິນຈາກນ້ຳຖ້ວມ ແລະ ດິນເຊາະເຈື່ອນ; (3) ຮັກສາການຜະລິດກະສິກຳ ແບບຍືນຍົງຢູ່ໃນທຸກສິ່ງເຂດ . | (1) ສ້າງລະບຽບຂັ້ນຕອນຄຸ້ມຄອງອ່າງນ້ຳຢ່າງຄົບຊຸດ ໂດຍພັດທະນາ ແລະ ປະຕິບັດແຜນການຄຸ້ມຄອງອ່າງນ້ຳ ບ່ອນໃດໄດ້ພັດທະນາ ຫລື ວາງແຜນໂຄງການ, (2) ປະກອບອຸປະກອນ ແລະ ວິທີການທົດສອບຄຸນນະພາບນ້ຳ ຢ່າງແທດເໝາະ. |
| 4 | ຈັດແບ່ງເຂດດິນກະສິກຳ ຄຸ້ມຄອງດິນ ແລະ ພັດທະນາລະບົບການເຮັດກະສິກຳ | NAFRI | A (S) | ວຽງຈັນ | (1) ພັດທະນາແຜນທີ່ປະເພດດິນກະສິກຳ, (2) ຊ່ວຍວາງແຜນການນຳໃຊ້ທີ່ດິນ ແລະ ຮູບແບບການປູກຝັງ, ແລະ (3) ໃຊ້ລະບົບເກັບກຳຂໍ້ມູນຈາກທາງໄກ ເພື່ອຊ່ວຍຈັດປະເພດທີ່ດິນ ແລະ ນຳໃຊ້ທີ່ດິນ. | (1) ຂະຫຍາຍແຜນທີ່ປະເພດທີ່ດິນ ແລະ ແຜນທີ່ພືດທີ່ແທດເໝາະ, (2) ສ້າງລະບົບລາຍງານຄືນ ເພື່ອຍົກລະດັບຂໍ້ມູນ GIS. (3) ເຊື່ອມຕໍ່ຂໍ້ມູນລະຫວ່າງ GIS ແລະ ກະສິກຳ(4) ພັດທະນາແຜນທີ່ການແບ່ງເຂດກະສິກຳ. |
| 5 | ແຜນງານຄົ້ນຄວ້າ ເຕັກໂນໂລຢີ ອະນຸລັກດິນ ແລະ ນ້ຳ. | NAFRI/DOF | B | ວຽງຈັນ ແລະ ທົ່ວປະເທດ | - ພັດທະນາເຕັກໂນໂລຢີທີ່ແທດເໝາະ ເພື່ອຄຸ້ມຄອງນ້ຳ ແລະດິນ. | (1) ທົບທວນໂຄງການທີ່ປະຕິບັດສຳເລັດແລ້ວ ແລະ ກຳລັງປະຕິບັດ ກ່ຽວກັບການອະນຸລັກດິນ, ແລະ (2) ພັດທະນາລະບົບສະໜັບສະໜູນດ້ານເຕັກນິກ ເພື່ອອະນຸລັກດິນ. |
| 6 | ແຜນງານຄົ້ນຄວ້າ ການຄຸ້ມຄອງນ້ຳຊົນລະປະທານ | NAFRI/DOI | B | ວຽງຈັນ | - ພັດທະນາເຕັກໂນໂລຢີທີ່ແທດເໝາະ ເພື່ອຄຸ້ມຄອງນ້ຳຊົນລະປະທານ. | (1) ພັດທະນາເຕັກໂນໂລຢີຄຸ້ມຄອງນ້ຳຊົນລະປະທານ ທັງສຳລັບພື້ນເຂດທົ່ງພຽງ ແລະ ເຂດເນີນສູງ, (2) ຄົ້ນຄວ້າຮູບການປະກອບສ່ວນຂອງຊາວນາ ໃນການຄຸ້ມຄອງນ້ຳຊົນລະປະທານ ຢ່າງມີປະສິດທິພາບ, (3) ໃຫ້ການຝຶກອົບຮົມ ດ້ານເຕັກນິກແກ່ພະນັກງານກັບທີ່ ແລະ ດ້ານການຄົ້ນຄວ້າ ພາຍໃນປະເທດ. |
| 7 | ໂຄງການຟື້ນຟູ ແລະ ຂະຫຍາຍລະບົບອຸຕຸນິຍົມວິທະຍາເພື່ອການພັດທະນາການກະເສດ ແລະ ຄວບຄຸມໄພນ້ຳຖ້ວມ | DMH/MAF | A | ທົ່ວປະເທດ | - ເພື່ອຟື້ນຟູ ແລະ ຂະຫຍາຍລະບົບຄົ້ນຄວ້າດ້ານອຸຕຸນິຍົມ ແລະ ອຸທົກກະສາດ ເພື່ອພັດທະນາກະສິກຳ ແລະ ພະຍາກອນອາກາດ ເພື່ອປ້ອງກັນຜົນເສັຍຫາຍຈາກໄພທຳມະຊາດ. | (1) ຟື້ນຟູສິ່ງອຳນວຍ ແລະ ປ່ຽນອຸປະກອນຕິດຕາມໃໝ່, (2) ກໍ່ສ້າງສະຖານີອຸຕຸນິຍົມ-ອຸທົກກະສາດໃໝ່, (3) ຍົກລະດັບໂທລະຄົມມະນາຄົມ ແລະ ສ້າງຕັ້ງລະບົບເຄືອຂ່າຍ, (4) ຍົກລະດັບການເກັບກຳ/ສັງລວມ/ປະກອບ ແລະ ວິໄຈຂໍ້ມູນ, (5) ຍົກລະດັບລະບົບພະຍາກອນອາກາດ ແລະ ນ້ຳຖ້ວມ, (6) ປັບປຸງລະບົບເຮັດວຽກ ແລະ ການຄຸ້ມຄອງ, (7) ແຜນງານຍົກລະດັບການສຶກສາຂອງ DMH ແລະ ຫ້ອງການອຸຕຸນິຍົມ-ອຸທົກກະສາດແຂວງ. (8) ຝຶກອົບຮົມ ພະນັກງານ ຂອງDMH ແລະ ຂອງຫ້ອງການ ອຸຕຸນິຍົມອຸທົກກະສາດຂັ້ນແຂວງໂດຍຜ່ານການ ສຳຫລວດແບບມີສ່ວນຮ່ວມວາງແຜນ ກວດກາຕິດຕາມການກໍ່ສ້າງ ແລະ ຝຶກອົບຮົມຢູ່ຕ່າງປະເທດ. (9) ກະກຽມໂຄງການສຶກສາໂຄງການຫລັກສູດ ສຳລັບພະນັກງານຂອງ DMH ແລະ ຫ້ອງການອຸທົກກະສາດລະດັບຂັ້ນແຂວງ. |

| | | | | | | |
|---|---|---|---|---|---|---|
| 8 | ຕອບສະໜອງສະພາວິທະຍາສາດເພື່ອຮັກສາສະພາບແວດລ້ອມແລະພັດທະນາ ກະສິກຳ | ສະພາວິທະຍາສາດ/ສຳນັກງານນາຍົກ | B | ທົ່ວປະເທດ | (1) ສະໜັບສະໜູນການສ້າງຕັ້ງສະມາຄົມຊັບພະຍາກອນແບບຊຸມຊົນ ແລະ ການຄຸ້ມຄອງດິນ.(2) ສະໜັບສະໜູນການເກັບກຳຂໍ້ມູນກ່ຽວກັບສິ່ງແວດລ້ອມ.(3) ຊ່ວຍເຫລືອໃນການ ອອກຂໍ້ກຳນົດກົດໝາຍ ກ່ຽວກັບຜົນກະທົບຕໍ່ ສິ່ງແວດລ້ອມ ຕໍ່ກະສິກຳປ່າໄມ້, ການປະໄມງ ແລະ ສະໜັບສະໜູນຂໍ້ລິເລີ່ມຕ່າງໆດ້ານສິ່ງແວດລ້ອມຂອງແຂວງ. | (1) ສົ່ງເສີມການການຈັດຕັ້ງກຸ່ມ, (2) ສ້າງຕັ້ງລະບົບການເກັບກຳຂໍ້ມູນ ແບບມີສ່ວນຮ່ວມ ແລະ ການວິໃຈ, (3) ປັບປຸງລະບົບລາຍງານ ໃຫ້ແກ່ STEA ແລະ ອຸດສາຫະກຳບໍລິການກະສິກຳ. |
| 9. | ປັບປຸງລະບົບພະຍາກອນອາກາດ ເພື່ອຮັບໃຊ້ການກະສິກຳ ແລະ ປ້ອງກັນໄພພິບັດ | DMH/MAF | B | ທົ່ວປະເທດ | - ເພື່ອຮັບປະກັນການຜະລິດກະສິກຳ ແລະ ປ້ອງກັນຄວາມເສຍຫາຍຈາກໄພທຳມະຊາດ. | (1) ສ້າງສະຖານີ ລາດາ ເພື່ອຕິດຕາມສະພາບອາກາດ ຢູ່ເຂດພາກເໜືອ ແລະ ພາກໃຕ້ ເພື່ອຕິດຕາມພະຍຸ ເຂດຮ້ອນ ໃຫ້ທັນເວລາ. (2) ສ້າງສະຖານີ UPPER AIR ຢູ່ເມືອງວຽງຈັນ. (3) ຍົກລະດັບລະບົບ ພະຍາກອນອາກາດ ແລະ ນ້ຳຖ້ວມ. (4) ຕິດຕັ້ງລະບົບໂທລະຄົມມະນາຄົມ ແລະ ສ້າງລະບົບຕາຄ່າຍ.(5) ປັບປຸງດ້ານການຈັດຕັ້ງຂອງວິຊາການ ແລະ ບໍລິຫານ.(6) ຍົກລະດັບພະນັກງານ ຂອງ DMH ແລະ ຫ້ອງການອຸຕຸນິຍົມ-ອຸທົກກະສາດສັ້ນແຂວງ. |

## 2. ສະຖາບັນ ແລະ ການຈັດຕັ້ງ

| ລ/ດ | ຊື່ໂຄງການ/ແຜນງານ | ອົງການປະຕິບັດ | ໄລຍະ | ທີ່ຕັ້ງ | ຈຸດປະສົງ | ໜ້າວຽກ |
|---|---|---|---|---|---|---|
| ສ້າງຄວາມເຂັ້ມແຂງທາງດ້ານໂຄງປະກອບການຈັດຕັ້ງຂອງ ກະຊວງກະສິກຳ-ປ່າໄມ້(ກກປ) | | | | | | |
| 1.1 | ປັບປຸງລະບຽບການຂອງການປົກຄອງ ແລະ ບໍລິຫານໃນກກປ | ກກປ/ເລຂາປະຈຳ/PAFS/DAFO | A | ກກປ ຫ້ອງການປະຈຳ, ຂະແໜງບໍລິຫານຂອງ PAFS ແລະ DAFO ທົ່ວປະເທດ | ເພີ່ມທະວີຄວາມສາມາດຂອງບັນດາພະແນກການ ແລະ ອົງການຂອງ ກກປ ນັບທັງ PAFS/DAFOທາງດ້ານ ການປົກຄອງ ແລະ ການບໍລິຫານ ໂດຍຜ່ານ ການປັບປຸງ ທາງດ້ານການຈັດຕັ້ງ ແລະ ພັດທະນາຊັບພະຍາກອນມະນຸດ; ປັບປຸງ ການຈັດຕັ້ງ ກົມຂອງຂະແໜງການບໍລິຫານ ແລະ ວາງແຜນ ຂອງບັນດາ ພະແນກການ ໃນກະຊວງກະສິກຳ , PAFS/DAFO | (1) ຊ່ວຍເຫລືອທາງດ້ານເຕັກນິກ ເພື່ອປັບປຸງ ຂັ້ນຕອນຂອງການບໍລິຫານ ແລະ ການປົກຄອງ (ວາງແຜນ, ຕິດຕາມກວດກາ ແລະ ລາຍງານ). (2) ສ້າງໃຫ້ມີ ຂັ້ນຕອນຂອງການປົກຄອງ ແລະ ການບໍລິຫານ ທີ່ໄດ້ຮັບການປັບປຸງແລ້ວ, (3) ດຳເນີນດານຈັດຕັ້ງການຝຶກອົບຮົມກັບທີ່ ແລະ ທັດສະນະສຶກສາສຳລັບພະນັກງານກ່ຽວຂ້ອງກັບຂະແໜງການບໍລິຫານ ແລະ ການປົກຄອງຂອງ ກກປ PAFS/DAFO(ໂດຍປະສົມປະສານກັບ ໂຄງການຝຶກອົບຮົມ RAFETC |
| 1.2 | ປັບປຸງຄວາມອາດສາມາດດ້ານແຜນການ ແລະ ສະຖິຕິຂອງກກປ | MAF/DOP/ PAFS/DAFO | A | MAF, DOP ຂະແໜງການວາງແຜນຂອງ PAFSແລະ DAFO ທົ່ວປະເທດ | ປັບປຸງຄວາມອາດສາມາດທາງດ້ານການວາງແຜນ ແລະ ສະຖິຕິ ຂອງ ບັນດາອົງການ ພະແນກການ ໃນກະຊວງກະສິກຳ ນັບທັງ PAFS/DAFO ໂດຍຜ່ານການປັບປຸງດ້ານການຈັດຕັ້ງ ແລະ ພັດທະນາບຸກຄະລາກອນ; ປັບປຸງ ການຈັດຕັ້ງ ກົມຂອງຂະແໜງການບໍລິຫານ ແລະ ວາງແຜນ ຂອງບັນດາ ພະແນກການ ໃນກະຊວງກະສິກຳ , PAFS/DAFO | (1) ຊ່ວຍເຫລືອທາງດ້ານເຕັກນິກ ເພື່ອປັບປຸງຄວາມສາມາດໃນການວາງແຜນ ແລະ ສະຖິຕິ ຕັ້ງແຕ່ລຸ່ມຫາເທິງ ຂອງບັນດາພະແນກການ ແລະ ອົງການກ່ຽວຂ້ອງຂອງ ກກປ ນັບທັງ PAFS/DAFO, (2) ປັບປຸງລະບົບຂ່າວສານດ້ານການບໍລິຫານ ແລະ ບາງແຜນການ ແຕ່ລຸ່ມຫາເທິງ ຈາກDAFO ໄປຫາ ກກປ (3) ນຳໃຊ້ເຕັກໂນໂລຊີ ສະໄໝໃໝ່ ສຳລັບການເກັບກຳ ສະຖິຕິຂໍ້ມູນ(ການເດີນສຳຫວດ ເກັບກຳແບບຢ່າງ ນຳໃຊ້ ລະບົບຂໍ້ມູນຂ່າວສານທາງໄກ (Remote Sensing)) (4) ພັດທະນາລະບົບ ຂ່າວສານເຕືອນໄພລ່ວງໜ້າ(5) ສະໜອງວັດຖຸອຸປະກອນ ແລະ ເຄື່ອງມືສຳລັບການວາງແຜນ ແລະ ສະຖິຕິ (6) ດຳເນີນດານຈັດຕັ້ງການຝຶກອົບຮົມກັບທີ່ ແລະ ທັດສະນະສຶກສາສຳລັບພະນັກງານ ກ່ຽວຂ້ອງກັບຂະແໜງການບໍລິຫານ ແລະ ການປົກຄອງຂອງ ກກປ PAFS/DAFO (ໂດຍປະສົມປະສານກັບ ໂຄງການຝຶກອົບຮົມ RAFETC. |
| 1.3 | ປັບປຸງການບໍລິຫານຊັບພະຍາກອນມະນຸດ ຂອງກກປ | ກກປ/ກົມຈັດຕັ້ງພະນັກງານ PAFS/DAFO | A | ກກປ/ກົມຈັດຕັ້ງພະນັກງານ ຂະແໜງພະນັກງານ ຂອງ PAFS / DAFO ທົ່ວປະເທດ | ເພື່ອຍົກສູງຄວາມສາມາດທາງດ້ານ ການບໍລິຫານບຸກຄະລາກອນ ໂດຍຜ່ານການປັບປຸງການຈັດຕັ້ງ ແລະ ພັດທະນາຊັບພະຍາກອນມະນຸດ ຂອງບັນດາພະແນກການ ແລະ ອົງການຂອງ ກກປ ນັບທັງ PAFS/DAFO; ຊັບຊ້ອນຄືນ ແລະ ປັບປຸງ ພະແນກການບໍລິຫານແລະວາງແຜນການ (ຂະແໜງບຸກຄະລາກອນ) ຂອງກົມ ໃນ ກກປ, PAFS / DAFO | (1) ຊ່ວຍເຫລືອທາງດ້ານເຕັກນິກ ເພື່ອປັບປຸງ ກົມຈັດຕັ້ງພະນັກງານຂອງ ກກປ ລວມທັງຂະແໜງການທີ່ກ່ຽວຂ້ອງ ນັບທັງ PAFS/ DAFO 2. ພັດທະນາຖານຂໍ້ມູນດ້ານການກຳນົດໜ້າວຽກ, ໂຄງການພັດທະນາໜ້າວຽກ ແລະ ໂຄງການຝຶກອົບຮົມກັບທີ່ ໂດຍອີງໃສ່ການຕີລາຄາຄວາມຕ້ອງການໃນການອົບຮົມ (3) ສ້າງຕັ້ງສູນພັດທະນາບຸກຄະລາກອນຂອງ ກກປ ສຳລັບຝຶກວິຊາວາງແຜນ ປະສານງານ ແລະ ນຳພາບຸກຄະລາກອນ, (4) ດຳເນີນການຈັດຕັ້ງການຝຶກອົບຮົມກັບທີ່ ແລະ ທັດສະນະສຶກສາສຳລັບພະນັກງານ ກ່ຽວຂ້ອງກັບຂະແໜງການບໍລິຫານ ແລະ ການປົກຄອງຂອງ ກກປ PAFS/DAFO (ໂດຍປະສົມປະສານກັບ ໂຄງການຝຶກອົບຮົມ RAFETC. |
| 2 | ສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງ ແລະ ວາງແຜນຂອງສະຖາບັນ ກປ | MAF/PAFS/ DAFO | B | ທຸກແຂວງ | ເພື່ອປັບປຸງ ແລະ ເພີ່ມທະວີບັນດາພະແນກການ ບໍລິຫານແລະວາງແຜນ ຂອງແຂວງ ແລະ ເມືອງ ທີ່ກ່ຽວຂ້ອງກັບ ກະສິກຳ ແລະ ການພັດທະນາຊົນນະບົດ ຕາມນະໂຍບາຍກະຈາຍອຳນາດ; ແລະ ເພີ່ມທະວີການປັບປຸງ ດ້ານການຈັດຕັ້ງ ແລະ ການເຄື່ອນໄຫວດ້ານບໍລິຫານບຸກຄະລາກອນຂອງ ກກປ PAFS/ DAFO | (1) ຕິດຕາມການເຄື່ອນໄຫວປັບປຸງການຈັດຕັ້ງ ຊຶ່ງໄດ້ດຳເນີນມາ ໃນໂຄງການປັບປຸງການຈັດຕັ້ງຄັ້ງກ່ອນ; (2) ຕິດຕາມການຝຶກອົບຮົມກັບທີ່ໃຫ້ແກ່ພະນັກການ ກກປ PAFS/ DAFO |

| | | | | | | |
|---|---|---|---|---|---|---|
| 3 | ທັດສະນະສຶກສາ ກ່ຽວກັບການຕິດສິນຕົກລົງສົ້ນທ້ອງຖິ່ນ | ຫ້ອງການແຂວງ | B | ທົ່ວປະເທດ | ສ້າງຄວາມຮູ້ ກ່ຽວກັບວິທີການບໍລິຫານ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ. | ຜູ້ຕາງໜ້າຫ້ອງການແຂວງ ແລະ ເມືອງ ທັດສະນະສຶກສາຢູ່ປະເທດອື່ນ. |
| 4 | ໂຄງການປັບປຸງ ໂຄງປະກອບການຈັດຕັ້ງຂອງ NAFRI | NAFRI | A | ສູນຄົ້ນຄວ້າ NAFRI ທີ່ຕັ້ງຢູ່ ວຽງຈັນ, ຈຳປາສັກ ແລະ ຫລວງພະບາງ | ພັດທະນາ ລະບົບຄົ້ນຄ້ວາ ດ້ານກະສິກຳ ແລະ ລະບົບປູກລ້ຽງ ແບບຊົມນະບົດ ທີ່ມີປະສິດທິຜົນ ແລະ ປະສິດທິພາບ ໂດຍຜ່ານການປັບປຸງການຈັດຕັ້ງ ກໍ່ສ້າງຄວາມສາມາດໃຫ້ພະນັກງານ ຍົກລະດັບສິ່ງອຳນວຍຄວາມສະດວກໃຫ້ແກ່ການຄົ້ນຄ້ວາ. | ກະລຸນາເບິ່ງໜ້າວຽກຂອງໂຄງການຢູ່ໃນໂຄງການຍ່ອຍ 4.1, 4.2 ແລະ 4,3 |
| 4.1 | ສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ ໃຫ້ແກ່ NAFRI ແລະ ປັບປຸງໂຄງການ | NAFRI | A | ທົ່ວປະເທດ | ຄືກັບຂ້າງເທິງ | (1) ຕິດຕັ້ງລະບົບຕາໜ່າງ ຂໍ້ມູນຂ່າວສານ ເພື່ອພັດທະນາ ລະບົບບໍລິຫານຄວາມຮູ້, (2) ຊ່ວຍເຫລືອທາງດ້ານເຕັກນິກ ສຳລັບ ລະບົບການປະສານງານດ້ານການຄົ້ນຄ້ວາ ແລະ ດ້ານການບໍລິຫານ ແລະ ການວາງແຜນການຄົ້ນຄວ້ານັບທັງ ການຄັດເລືອກ ໂຄງການຄົ້ນຄ້ວາຕ່າງໆ ສ້າງລະບົບ ຕິດຕາມກວດກາ ບັນດາກິດຈະກຳ ຄົ້ນຄວ້າ ປັບປຸງການເຊື່ອມຕໍ່ກັບ ສະຖາບັນຄົ້ນຄ້ວາຂອງປະເທດເພື່ອນບ້ານ; (3) ຝຶກອົບຮົມທາງດ້ານວິຊາການ ກ່ຽວກັບການຄຸ້ມຄອງ ການຄົ້ນຄ້ວາ ແລະ ຕາໜ່າງຂໍ້ມູນຂ່າວສານ, ການວາງແຜນການ ແລະ ລະບົບຕິດຕາມກວດກາ. |
| 4.2 | ໂຄງການສ້າງຄວາມສາມາດໃຫ້ພະນັກງານ NAFRI | NAFRI | A | ທົ່ວປະເທດ | ຄືຂ້າງເທິງ | (1) ຊ່ວຍເຫລືອດ້ານເຕັກນິກເພື່ອສ້າງ ແຜນງານຝຶກ ອົບຮົມກັບທີ່, ຝຶກອົບຮົມພາຍໃນປະເທດ ແລະ ຢູ່ຕ່າງປະເທດ ໃນວິຊາສະເພາະໃດໜຶ່ງ. (2) ປະຕິບັດແຜນງານການອົບຮົມດັ່ງກ່າວ; (3) ກວດກາຕີລາຄາແຜນງານຝຶກອົບຮົມດັ່ງກ່າວ; (4) ສ້າງຖານຂໍ້ມູນສຳລັບສຳເນົາ ປະຫວັດພະນັກງານຂອງ NAFRI. |
| 4.3 | ໂຄງການຍົກລະດັບການຄົ້ນຄ້ວາ NAFRI | NAFRI | A | ທົ່ວປະເທດ | ຄືຂ້າງເທິງ | ຊ່ວຍເຫຼືອດ້ານເຕັກນິກສຳລັບການສຳເນົາ ແລະ ຕີລາຄາ ອຸປະກອນສິ່ງອຳນວຍຕ່າງໆ ສຳລັບການຄົ້ນຄ້ວາ, ຮ່າງແຜນປັບປຸງເບື້ອງຕົ້ນ; (2) ໃຫ້ການປຶກສາແກ່ແຜນການປັບປຸງເບື້ອງຕົ້ນ, ອອກແບບ, ປະເມີນຄ່າໃຊ້ຈ່າຍ ແລະ ກະກຽມເອກະສານປະມູນ. (3) ດຳເນີນການປັບປຸງສິ່ງອຳນວຍຕ່າງໆແລະ ຕິດຕັ້ງອຸປະກອນ. |
| 5. | ປະສານສົມທົບການຄົ້ນຄ້ວາຢູ່ບັນດາປະເທດອາຊຽນ. | NAFRI | A | ທົ່ວປະເທດ | ສ້າງລະບົບປະສານງານດ້ານ ການຄົ້ນຄ້ວາກັບບັນດາປະເທດ ເພື່ອນບ້ານແນໃສ່ເພື່ອປັບປຸງ ປະສິດທິພາບ ແລະ ຜົນໄດ້ຮັບຂອງການຄົ້ນຄ້ວາ | (1) ເຊື້ອເຊີນບັນດານັກວິທະຍາສາດຂອງອາຊຽນ ເພື່ອດຳເນີນການຄົ້ນຄ້ວາ ແລະ ທັດສະນະສຶກສາຢູ່ ສປປລາວ. (2) ຮ່ວມປະຊຸມປະຈຳປີ ກັບສະຖາບັນກ່ຽວຂ້ອງ. (3) ສ້າງລະບົບແລກປ່ຽນຂໍ້ມູນຂ່າວສານດ້ານການຄົ້ນຄ້ວາ. |
| 6. | ໂຄງການປັບປຸງການ ກັກກັນພືດ | ອົງການປ້ອງກັນຊາດ(NPPO)/DOA | A | ວຽງຈັນ, ທົ່ວປະເທດ | ເພື່ອສົ່ງເສີມຄວາມເຊື່ອໝັ້ນຕໍ່ຜະລິດຕະພັນກະສິກຳສົ່ງອອກ ແລະ ຮັບປະກັນການປ້ອງກັນພືດພັນຢູ່ ສປປລາວ ໂດຍຜ່ານການປັບປຸງລະບົບ ກັກກັນພືດ | (1) ຊ່ວຍເຫລືອທາງດ້ານເຕັກນິກສຳລັບການຄົ້ນຄ້ວາປັບປຸງ ຄືນໃໝ່ ບັນດາລະບຽບການທີ່ພວມໃຊ້ຢູ່ໃນປະຈຸບັນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບກັກກັນພືດ.(2) ຟື້ນຟູຈຸດກວດຫ້ອງວິໃຈ ແລະ ວັດຖຸອຸປະກອນຕ່າງໆ .(3) ສ້າງຕັ້ງດ່ານກວດ 6 ແຫ່ງຂື້ນຕື່ມອີກ ຢູ່ຊາຍແດນຕິດກັບມຽນມາ ແລະ ກຳປູເຈຍ. (4) ດຳເນີນການຝຶກອົບຮົມໃຫ້ແກ່ພະນັກງານເຮັດໜ້າທີ່ກວດກາກັກກັນພືດ |
| 7. | ຂໍ້ກຳນົດກົດໝາຍກ່ຽວກັບ ຝຸ່ນເຄມີ ທີ່ໃຊ້ໃນກະສິກຳ | DOA | B | ວຽງຈັນ ແລະ ທົ່ວປະເທດ | ເພື່ອປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ປ້ອງກັນ ອຸບັດຕິເຫດ ທີ່ຈະເກີດຂື້ນກັບຊາວນາ ໃນການນຳໃຊ້ທາດເຄມີ | (1) ທົບທວນຄືນບັນດາຂໍ້ກຳນົດກ່ຽວກັບການໃຊ້ທາດເຄມີ. (2) ສ້າງຕັ້ງລະບົບຂື້ນທະບຽນໃຫ້ແກ່ ຜູ້ຈຳໜ່າຍ ແລະ ຂາຍຢົກຝຸ່ນເຄມີໃຊ້ໃນກະສິກຳ. |
| 8. | ຂໍ້ກຳນົດກ່ຽວກັບການນຳເຂົ້າເມັດພັນ, ການລົງທະບຽນເມັດພັນ ແລະ ລະ | DOA | B | ວຽງຈັນ ແລະ ທົ່ວປະເທດ | ເພື່ອພັດທະນາລະບົບໃນການລົງທະບຽນປະເພດແນວພັນ ສຳລັບ ວັດຖຸທີ່ກ່ຽວຂ້ອງກັບການປູກຝັງ ແລະ ເມັດພັນ. | (1) ພິຈາລະນາຄືນ ບັນດາຂໍ້ກຳນົດ ທີ່ພວມນຳໃຊ້ປະຈຸບັນ ກ່ຽວກັບເມັດພັນ ແລະ ວັດຖຸກ່ຽວຂ້ອງກັບການປູກຝັງ . (2) ລະບົບ ການຂື້ນທະບຽນເມັດພັນ ແລະ ສິ່ງອຳນວຍຕ່າງໆ.(3) ຝຶກອົບຮົມພະນັກງານກ່ຽວກັບບັນດາຂັ້ນຕອນໃນການຂື້ນທະບຽນພືດພັນ. |

| | | | | | | |
|---|---|---|---|---|---|---|
| | ປັບການອອກທະບຽນ | | | | | |
| 9. | ສົ່ງເສີມພາລະບົດບາດ ອັນໃໝ່ ຂອງກກປ ແລະ ອຳນາດການປົກຄອງ ທ້ອງຖິ່ນ ໃນເສດຖະກິດ ຕະຫລາດ(T/A) | ສຳນັກງານນາຍົກ (ຄະນະກຳມະການຊີ້ນຳການປະຕິຮູບສະຖາບັນ ແລະ ການປົກຄອງ) | B | ກະຊວງກະສິກຳ ແລະ ທຸກໆ ແຂວງ | ສ້າງແຜນແມ່ບົດ ແລະ ຮ່າງນຳສະເໜີກ່ຽວກັບພາລະ ບົດບາດອັນໃໝ່ ຂອງ ກກປ ແລະ ອຳນາດການປົກຄອງທ້ອງຖິ່ນໃນເສດຖະກິດຕະຫລາດ | (1) ພິຈາລະນາຄືນ ບົດບາດຂອງລັດຖະບານ ແລະ ພາກສ່ວນເອກະຊົນໃນຂອບຂ່າຍດ້ານເສດຖະກິດ ມະຫາພາກ ຂອງປະເທດ. (2) ສຶກສາພາລະບົດບາດ ອັນເໝາະສົມ ຂອງ ກກປ ແລະ ອຳນາດການປົກຄອງທ້ອງຖິ່ນ ໃນວຽກງານກະສິກຳ. (3) ສຶກສາລະບົບການບໍລິຫານອັນເໝາະສົມ ແລະ ໂຄງປະກອບຂອງການຈັດຕັ້ງ ຂອງ ກກປ ແລະ ອຳນາດການປົກຄອງທ້ອງຖິ່ນ ໃນການລົງຄວາມຕັດສິນໃຈ, ການຕີລາຄາພະນັກງານ ການບໍລິຫານຂໍ້ມູນຂ່າວສານ ຕິດຕາມແລະຕີລາຄາໂຄງການ, ບໍລິຫານການເງິນ ແລະ ພັດທະນາເຕັກໂນໂລຊີ. |

# 3. ການພັດທະນາຊັບພະຍາກອນມະນຸດ

| ລ/ດ | ຊື່ໂຄງການ/ແຜນງານ | ອົງການປະຕິບັດ | ໄລຍະ | ທີ່ຕັ້ງ | ຈຸດປະສົງ | ໜ້າວຽກ |
|---|---|---|---|---|---|---|
| 1 | ສ້າງຄວາມເຂັ້ມແຂງ ແລະ ການຂະຫຍາຍຕົວທາງດ້ານການບໍລິການ ກກປ. | MAF/AEA | A | MAF, NAFEA, Nation wide | ສ້າງຄວາມເຂັ້ມແຂງ ໃຫ້ແກ່ກອງສົ່ງເສີມ ເມືອງ ແລະ ແຂວງ. | (1) ຊ່ວຍເຫຼືອທາງດ້ານວິຊາການ ແລະ ການຈັດຕັ້ງໃຫ້ແກ່ກອງສົ່ງເສີມກະສິກຳ, (2) ຊ່ວຍເຫຼືອດ້ານວິຊາການ ສຳລັບອຳນວຍຄວາມສະດວກ ໃຫ້ແກ່ ໜ່ວຍຝຶກອົບຮົມການສົ່ງເສີມກະສິກຳ ຂອງກອງດັ່ງກ່າວ, PAFS/DAFO(3) ຝຶກອົບຮົມຄູຝຶກ ແລະ ພະນັກງານສົ່ງເສີມ ຂັ້ນເມືອງ ແລະ ຂັ້ນແຂວງ.(4) ຝຶກອົບຮົມ OTJ ໃຫ້ແກ່ FSEW.(5) ພັດທະນາ ແລະປະຕິບັດໂຄງການສົ່ງເສີມຂັ້ນເມືອງ. (6) ພັດທະນາໜ່ວຍຝຶກອົບຮົມສົ່ງເສີມ ຂັ້ນເມືອງ ແລະ ຂັ້ນແຂວງ |
| 2 | ປັບປຸງສູນຝຶກອົບຮົມສົ່ງເສີມກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນວິຊາຊີບຊາວນາ (ພັດທະນາການຝຶກອົບຮົມ ກັບທີ່ຂັ້ນເມືອງ ແລະ ຝຶກອົບຮົມຊາວ ນາໃນວຽກງານກະສິກຳປ່າໄມ້ (ໄລຍະ I). | MAF/RAFECT -FVS | A | RAFECT /FVSຢູ່ ຊຽງເງິນ ຫຼວງພະບາງ, ປາກແຈ້ງ ວຽງຈັນ, ເຊໂປນ ສະຫວັນນະເຂດ /FVS ຫຼວງນ້ຳທາ ແລະ ທົ່ງພົບ ແລະ ຈຳປາສັກ | ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ ການບໍລິການສົ່ງເສີມກະສະກຳປ່າໄມ້ຂັ້ນເມືອງ ແລະ ຂັ້ນບ້ານ ດ້ວຍການເພີ່ມທະວີຄວາມສາມາດ ຂອງສູນຝຶກ ສົ່ງເສີມ ກະສິກຳປ່າໄມ້ຂອງເຂດ ແລະ ຝຶກອົບຮົມວິຊາຊີບທາງດ້ານກະສິກຳປ່າໄມ້ ໃຫ້ແກ່ຊຸມຊົນກະສິກອນ. | (1) ຊ່ວຍເຫຼືອທາງດ້ານວິຊາການ ເພື່ອພັດທະນາໂຄງການຝຶກອົບຮົມ ແລະ ຂະຫຍາຍ ຂອງ ສູນຝຶກອົບຮົມສົ່ງເສີມກະສິກຳປ່າໄມ້ຂອງເຂດ ແລະ FVS.(2) ຊ່ວຍເຫຼືອທາງດ້ານວິຊາການ ເພື່ອພັດທະນາ ໂຄງການຝຶກອົບຮົມ ແລະ ວັດຖຸອຸປະກອນ ໃຫ້ແກ່ສູນຝຶກ ສົ່ງເສີມກະສິກຳປ່າໄມ້ຂອງເຂດ ແລະ FVS. (3) ພັດທະນາແບບຢ່າງ ໃນການສົ່ງເສີມ ແລະ ສົ່ງເຂດໃນການຝຶກອົບຮົມ ສຳລັບສູນຝຶກ.(4) ປັບປຸງສິ່ງອຳນວຍຄວາມສະດວກຕ່າງໆຂອງສູນຝຶກ.(5) ພັດທະນາສິ່ງອຳນວຍຄວາມສະດວກ ແລະ ພາມເພື່ອລົງຝຶກຫັດ ຂອງ FVS .(6) ຝຶກອົບຮົມຢ່າງເປັນລະບົບ ໃຫ້ແກ່ ພະນັກງານ ກວດກາຂັ້ນເມືອງ ແລະ FSEW.(7) ຝຶກອົບຮົມ ຊຸມຊຸນຊາວກະສິກອນ. |
| 3 | ພັດທະນາການຝຶກອົບຮົມກັບທີ່ ແລະ ການຝຶກອົບຮົມຊາວນາ ດ້ານກະສິກຳປ່າໄມ້ ຂັ້ນເມືອງ (ໄລຍະ2) | MAF/PAFS/FVS | B | FVS ຢູ່ 11 ແຂວງ | ເພື່ອປັບປຸງການບໍລິການ ການສົ່ງເສີມການກະສິກຳປ່າໄມ້ ດ້ວຍການຝຶກອົບຮົມວິຊາຊີບ ດ້ານກະສິກຳປ່າໄມ້ ໃຫ້ແກ່ຊຸມຊົນຊາວກະສິກອນ. | (1) ສ້າງແບບFSV ໃນທຸກແຂວງ(2) ພັດທະນາສິ່ງອຳນວຍແລະພານລົງຝຶກຫັດຂອງFSV (3 ຝຶກອົບຮົມຊຸມຊົນຊາວກະສິກອນ |
| 4 | ປັບປຸງຄວາມສາມາດຂອງການສຶກສາດ້ານວິຊາການກະສິກຳປ່າໄມ້ | MAF, AFTS | A | AFTS ປາກເຊືອງ ຫຼວງພະບາງ ເມືອງໃໝ່ ບໍລິຄຳໄຊ, ນາແກສະຫວັນນະເຂດ , ປາກເຊ ຈຳປາສັກ | ເພື່ອຍົກສູງຄຸນນະພາບການສຶກສາດ້ານກະສກຳປ່າໄມຂອງພະນັກງານວິຊາການໂດຍການປັບປຸງລັກສູດ ແລະປັບປຸງສິ່ງອຳນວຍຢູ່4ໂຮງຮຽນວິການກະສິກຳປ່າໄມທີມີຢູ່ | (1) ຊ່ວຍເຫຼືອດ້ານວິຊາການເພື່ອປັບປຸງຫລັກສູດ(2)ຫລັດສູດຊ່ວຍເຫລືອດ້ານວິການສຳດັບການພັດທະນາບົດສອນແລະປຶ້ມຄູ່ມື (3) ຝຶກອົບຮົມຄູສອນແລະຄູຝຶກ(4) ໃຫ້ທຶນການສຶກສາ ໄປຮຽນຕໍ່ຢູ່ຕ່າງປະເທດ ສຳດັບຄູສອນແລະຄູຝຶກ(5) ພິມປຶ້ມແບບຮຽນແລະເອກະສານແບບຮຽນ(6 ປັບປຸງສິ່ງອຳນວຍຂອງໂຮງຮຽນ(7 ສ້າງພານຂອງໂຮງຮຽນເພື່ອການລົງຝຶກຫັດ |
| 5 | ປັບປຸງຂອງໂຮງຮຽນຊົນລະປະທານ | MAF ທ່າງ່ອນ ITS | A | ທ່າງ່ອນ ITS ກຳແພງນະຄອນວຽງຈັນ | ເພື່ອພັດທະນາການສຶກສາແລະການຝຶກອົບຮົມພະນັກງານ ດ້ານຊົນລະປະທານໂດຍການປັບປຸງຫລັກສູດແລະສິ່ງອຳນວຍຂອງໂຮງຮຽນ ທ່າງ່ອນທີ່ມີແລ້ວ | (1) ຊ່ວຍເຫລືອດ້ານວິຊາການເພື່ອປັບປຸງຫລັກສູດ(2)ຫລັດສູດຊ່ວຍເຫລືອດ້ານວິການສຳດັບການພັດທະນາບົດສອນແລະປຶ້ມຄູ່ມື(3ຝຶກອົບຮົມຄູ່ສອນແລະຄູຝຶກ(4) ) ໃຫ້ທຶນການສຶກສາ ໄປຮຽນຕໍ່ຢູ່ຕ່າງປະເທດ ສຳດັບຄູສອນແລະຄູຝຶກ(5) ພິມປຶ້ມແບບຮຽນແລະເອກະສານແບບຮຽນ(6 )ປັບປຸງສິ່ງອຳນວຍຂອງໂຮງຮຽນ(7 )ສ້າງເນື້ອທີ່ສຳດັບການລົງຝຶກຫັດຂອງໂຮງຮຽນ |

| | | | | | | |
|---|---|---|---|---|---|---|
| 6 | ເພີ່ມທະວີຄວາມສາມາດຂອງການສຶກສາຊັ້ນມະຫາວິທະຍາໄລ ໃນດ້ານກະສິກຳປ່າໄມ້ | MAF, ກະຊວງສຶກສາ, NUOL | A | ສະຖາບັນປ່າໄມ້ດົງໂດກ, ໂຮງຮຽນຊົນລະປະທານຕາດທອງ, ກະເສດນາບົງ | (1) ຍົກລະດັບການຝຶກອົບຮົມ ລະດັບມະຫາວິທະຍາໄລ ກ່ຽວກັບການຄຸ້ມຄອງຊົນລະປະທານ ແລະ ຊັບພະຍາກອນນ້ຳ ໂດຍປັບປຸງຫລັກສູດ ແລະ ຕຳລາ ແລະ ພັດທະນາຊັບພະຍາກອນ, (2) ພັດທະນາລະບົບຝຶກອົບຮົມ ແລະ ການສຶກສາດ້ານຊົນລະປະທານຂອງ SMS ແລະ ນັກວິສະວະກອນ ແລະ ວິຊາການຊັ້ນສູງ ດ້ານຊົນລະປະທານໃນຕໍ່ໜ້າ. | (1) ປັບປຸງຫລັກສູດ ແລະ ຕຳລາວິສະວະກຳຊົນລະປະທານລະດັບ ປະລິນຍາໂທ ແລະ ປະລິນຍາເອກ ບົນພື້ນຖານການສ້າງຕັ້ງ SMS, (2) ປັບປຸງຫລັກສູດ ແລະ ຕຳລາຢູ່ກົມວິສະວະກຳຊົນລະປະທານ, ຄະນະສາດວິສະວະກຳ ແລະ ເຕັກນິກ, (3) ຍົກລະດັບຄວາມສາມາດຂອງກົມວິສະວະກຳຊົນລະປະທານ ໂດຍຝຶກອົບຮົມຄູຝຶກ, ພັດທະນາເຄື່ອງຊ່ວຍ ແລະ ສິ່ງອຳນວຍການສິດສອນ ລວມທັງ ພື້ນຊູສິ່ງອຳນວຍ. |
| 7 | ການສຶກສາ ດ້ານກະສິກຳ ແລະ ປ່າໄມ້ ຢູ່ໂຮງຮຽນປະຖົມ ແລະ ມັດທະຍົມ. | MAF | B | ກະຊວງສຶກສາ, ທຸກແຂວງ | ປັບປຸງການສຶກສາດ້ານກະສິກຳ ຢູ່ໂຮງຮຽນປະຖົມ ແລະ ມັດທະຍົມ, ໂດຍສະເພາະຢູ່ໂຮງຮຽນເຂດຊົນນະບົດ. | (1) ປັບປຸງຫລັກສູດ ແລະ ຕຳລາການສຶກສາ ດ້ານກະສິກຳ ແລະ ປ່າໄມ້, (2) ຝຶກອົບຮົມຄູສອນ ກ່ຽວກັບບົດສອນ ດ້ານກະສິກຳ, (3) ສ້າງ ແລະ ສະໜອງເອກະສານ ແລະ ເຄື່ອງຊ່ວຍສິດສອນ ລວມທັງ ພາບໃຫຍ່, ປື້ມອ່ານ, ອຸປະກອນທົດລອງພື້ນຖານ ແລະ ທົ່ນ, (4) ສົ່ງເສີມສວນປູກຜັກ, ລ້ຽງສັດ ແລະ ສວນກ້າເບ້ຍຂອງໂຮງຮຽນ. |

## 4. ພືດ: ການສົ່ງເສີມ, ຄົ້ນຄ້ວາ ແລະ ອື່ນໆ

| ລ/ດ | ຊື່ໂຄງການ/ແຜນງານ | ອົງການປະຕິບັດ | ໄລຍະ | ທີ່ຕັ້ງ | ຈຸດປະສົງ | ໜ້າວຽກ |
|---|---|---|---|---|---|---|
| ການຜະລິດເຂົ້າ | | | | | | |
| 1 | ໂຄງການປັບປຸງລະບົບຂະຫຍາຍເມັດພັນເຂົ້າ | DOA/NAFRI | A | ທົ່ວປະເທດ | - ເພີ່ມທະວີປະສິດທິຜົນຂອງການເກັບກ່ຽວດ້ວຍການເພີ່ມການຜະລິດເມັດພັນເຂົ້າ ແລະສົ່ງເສີມການນຳໃຊ້ເມັດພັນເຂົ້າປັບປຸງໃນແຕ່ລະຄອບຄົວ | (1) ຟື້ນຟູສິ່ງອຳນວຍຂະຫຍາຍເມັດພັນທີ່ມີໃນປະຈຸບັນ; (2) ປັບປຸງໂຄງປະກອບລະບົບຂະຫຍາຍເມັດພັນ ລວມທັງຜະລິດເມັດພັນພື້ນຖານຄືນໃໝ່; (3) ໃຫ້ການຝຶກອົບຮົມດ້ານເຕັກນິກ ດ້ານການຂະຫຍາຍເມັດພັນແກ່ ພະນັກງານ; ແລະ (4) ຝຶກອົບຮົມຊາວນາໃຊ້ເມັດພັນ. |
| 2 | ສ້າງສາງເຂົ້າສຳຮອງ ເພື່ອເຫດການສຸກເສີນ | DOA | B | ທົ່ວປະເທດ | - ຮັບປະກັນຄວາມປອດໄພ ດ້ານສະບຽງອາຫານລະດັບຊາດ. | (1) ສ້າງຕັ້ງ ແລະ ຟື້ນຟູສາງພັນເຂົ້າ ເພື່ອເຫດການສຸກເສີນຢູ່ເຂດຫ່າງໄກ, (2) ຍົກລະດັບຄວາມສາມາດດ້ານການຄຸ້ມຄອງ ແລະ ດ້ານເຕັກນິກຂອງ ພະນັກງານຫລັກແຫລ່ງ, (3) ຈັດຕັ້ງການຝຶກອົບຮົມ ສຳລັບພາກສ່ວນເອກະຊົນ. |
| 3 | ໂຄງການປູກເຂົ້າຄົງທີ່ຢູ່ເຂດເນີນສູງ | DOA | S | ທົ່ວປະເທດ | -ເພື່ອພັດທະນາທົດລອງເລືອກເຟັ້ນວິທີການສຳດັບການຄົ້ນຄ້ວາກະສິກຳຄົບວົງຈອນຢູ່ເຂດເນີນສູງ<br>- ເພື່ອພັດທະນາລະບົບອາຊີບຄົງທີ່ແທນທີ່ການຖາງປ່າເຮັດໄຮ່<br>- ເພື່ອສົ່ງເສີມພັດທະນາຊຸມຊົນ ຄວາມອາດສາມາດໃນການຕັດສິນໃຈແລະນຳພາເຂດຊຸມຊົນທີ່ເປັນເປົ້າໝາຍ | (1) ຊ່ວຍເຫລືອດ້ານວິຊາການໃນການຄົ້ນຄ້ວາຈັບວຽກງານຄົ້ນຄ້ວາ, (2) ຝຶກອົບຮົມພະນັກງານຂອງໂຄງການແລະພະນັກງານຂອງອົງການPAFS/ DAPO (3) ການໃຊ້ຈ່າຍທາງກົງແລະທົ່ວໄປ (4) ປະກອບວັດຖຸອຸປະກອນນັບທັງຄອມພິວເຕີ ແລະ ລົດຈັກໃຫ້ແກ່ IUARP |
| ການຜະລິດພືດ ເປັນສິນຄ້າ | | | | | | |
| 4 | ໂຄງການສົ່ງເສີມກະສິກຳແບບຫຼາກຫຼາຍ | DOA/PAFS/ DAFO | A | ເຂດຊົນລະປະທານນ້ຳຂອງ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ | - ເພີ່ມທະວີການປູກພືດຜັກເພື່ອສ້າງລາຍຮັບໃຫ້ປະຊາຊົນໂດຍການຂະຫຍາຍການປູກພືດສຳຮອງ ທີ່ຫລາກຫລາຍຕາມຂົງເຂດທີ່ມີຊົນລະປະທານ. | (1) ຊ່ວຍເຫລືອທາງດ້ານເຕັກນິກສຳລັບການບໍລິຫານໂຄງການ , ການກະກຽມຕາຕະລາງ ການປູກພືດ, ການຄັດເລືອກ ອອກແບບ ແລະ ຈັດຕັ້ງການສາທິດ (2) ດຳເນີນດານຝຶກອົບຮົມ ໃຫ້ແກ່ພະນັກງານ DOA/PAFS/DAFO (3) ຊ່ວຍເຫລືອທາງດ້ານເຕັກນິກ ສຳລັບ ການສາທິດ ດ້ານການປົກປັກຮັກສາ ແລະ ດຳເນີນວຽກງານ (4) ຊີ້ນຳທາງດ້ານເຕັກນິກ ແກ່ຊາວນາ ຢູ່ໃນເນື້ອທີ່ທີ່ມີການສາທິດ (5) ຊ່ວຍເຫຼືອທາງດ້ານວິຊາການໃນການຈັດຕັ້ງ ການກະກຽມ ເນື້ອທີ່ ກ້າເບ້ຍ (6) ດຳເນີນການສຳຫຼວດກ່ຽວກັບຄວາມຕ້ອງການທາງດ້ານກະສິກຳ ແລະ ກ່ຽວກັບການຕິດຕາມກວດກາ |
| 5 | ແຜນງານສົ່ງເສີມການຜະລິດຜັກ ແລະ ດອກໄມ້ | DOA/PAFS/DA FO | A | ກຳແພງນະຄອນ, ວຽງຈັນ ແລະ ບໍລິຄຳໄຊ. | - ເພີ່ມລາຍຮັບໃຫ້ແກ່ຊາວກະສິກອນ ໂດຍການຂະຫຍາຍການປູກພືດ ແລະ ດອກໄມ້ ຢູ່ໃນເຂດຊານເມືອງ | (2) ຊ່ວຍເຫລືອທາງດ້ານເຕັກນິກສຳລັບການບໍລິຫານໂຄງການ , ການກະກຽມຕາຕະລາງ ການປູກພືດ, ການຄັດເລືອກ ອອກແບບ ແລະ ຈັດຕັ້ງການສາທິດ (2) ດຳເນີນດານຝຶກອົບຮົມ ໃຫ້ແກ່ພະນັກງານ DOA/PAFS/DAFO (3) ຊ່ວຍເຫລືອທາງດ້ານເຕັກນິກ ສຳລັບ ການສາທິດ ດ້ານການປົກປັກຮັກສາ ແລະ ດຳເນີນວຽກງານ (4) ຊີ້ນຳທາງດ້ານເຕັກນິກ ແກ່ຊາວນາ ຢູ່ໃນເນື້ອທີ່ທີ່ມີການສາທິດ (5) ຊ່ວຍເຫຼືອທາງດ້ານເຕັກນິກເພື່ອກຳນົດການຜະລິດ ແລະ ກຸ່ມການຕະຫຼາດ (6) ດຳເນີນການສຳຫຼວດກ່ຽວກັບຄວາມຕ້ອງການທາງດ້ານກະສິກຳ ແລະ ກ່ຽວກັບການຕິດຕາມກວດກາ |
| 6 | ແຜນງານສົ່ງເສີມການຜະລິດອ້ອຍແບບຍືນຍົງ | DOA/PAFS/DA FO | B | ພາກເໜືອຂອງລາວ | - ເພີ່ມທະວີການຜະລິດອ້ອຍ ບົນພື້ນຖານລະບົບປູກຝັງ ທີ່ເໝາະສົມ. | (1) ສຳຫລວດຕະຫລາດຊາອອກ ສຳລັບນ້ຳຕານ ແລະ/ຫລື ອ້ອຍ ຢູ່ຈີນ ແລະ ໄທ, (2) ວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ເພື່ອຜະລິດອ້ອຍແບບຍືນຍົງ, (3) ຈັດໜານສາທິດເຕັກນິກປັບປຸງ ລວມທັງລະບົບປູກຝັງທີ່ເໝາະສົມ ດ້ານນິເວດແກ່ຊາວນາ ໂດຍປະສານກັບຜົນການຄົ້ນຄ້ວາ. |
| 7 | ແຜນງານສົ່ງເສີມການສົ່ງອອກພືດຜັກ | DOA/PAFS/DA FO | A | ໄຊຍະບູລີ, ບໍ່ແກ້ວ, ຫຼວງນ້ຳທາ ແລະ ຊຽງຂວາງ | - ຂະຫຍາຍການສົ່ງອອກພືດແລະຜົນຜະລິດກະສິກຳຢູ່ຕາມເຂດຊາຍແດນ. | (1) ຊ່ວຍເຫຼືອທາງດ້ານວິຊາການໃນການສຶກສາການພັດທະນາ ກະສິກຳເພື່ອດສົ່ງອອກຢູ່ບັນດາແຂວງທີ່ຢູ່ຕາມຊາຍແດນ (2) ຊ່ວຍເຫຼືອທາງດ້ານວິຊາການສຳລັບການຄຸ້ມຄອງໂຄງການ ການກະກຽມ ຕາຕະລາງເວລາປູກພືດ ແລະ ສ້າງແປງສາທິດ (3) ຝຶກອົບຮົມພະນັກງານ DOA/PAFS/DAFO(4) ຊ່ວຍເຫລືອທາງດ້ານເຕັກນິກ ສຳລັບ ການສ້າງ ແລະ ປົກປັກຮັກສາ ແປງສາທິດ(5) ຊີ້ນຳທາງດ້ານເຕັກນິກ ແກ່ຊາວນາ ຢູ່ໃນເນື້ອທີ່ທີ່ມີການສາທິດ (6) ຊ່ວຍເຫຼືອທາງດ້ານເຕັກນິກເພື່ອກຳນົດຫົວໜ່ວຍແປຮູບທາງດ້ານກະສິກຳ ຊຶ່ງບໍລິຫານໂດຍຊຸມຊົນ |

| | | | | | | |
|---|---|---|---|---|---|---|
| | | | | | | ແລະ ກຸ່ມການຕະຫຼາດ (7) ດຳເນີນການສຳຫຼວດກ່ຽວກັບຄວາມຕ້ອງການທາງດ້ານກະສິກຳ ແລະ ກ່ຽວກັບການຕິດຕາມກວດກາ |
| 8 | ແຜນງານສົ່ງເສີມ ການຜະລິດໝາກໄມ້ຢູ່ພາກເໜືອຂອງລາວ. | DOA/PAFS/DAFO | A | ເຂດເນີນສູງແລະ ເຂດພູດອຍ, ຫຼວງພະບາງ, ອຸດົມໄຊ ແລະ ຜົ້ງສາລີ. | -ເພື່ອສ້າງລາຍຮັບເພີ່ມເຕີມ ໂດຍການ ຂະຫຍາຍການປູກໝາກໄມ້ ຢູ່ເຂດເນີນສູງ ແລະ ພູດອຍພາກເໜືອ. | (3) ຊ່ວຍເຫລືອທາງດ້ານເຕັກນິກສຳລັບການບໍລິຫານໂຄງການ , ການກະກຽມຕາຕະລາງ ການປູກພືດ, ການຄັດເລືອກ ອອກແບບ ແລະ ຈັດຕັ້ງແປງສາທິດ (2). ດຳເນີນດານຝຶກອົບຮົມ ໃຫ້ແກ່ພະນັກງານ DOA/PAFS/DAFO (3) ຊ່ວຍເຫລືອທາງດ້ານເຕັກນິກ ສຳລັບ ການສ້າງ ແລະ ປົກປັກຮັກສາແປງສາທິດ (4) ຊີ້ນຳທາງດ້ານເຕັກນິກ ແກ່ຊາວນາ ຢູ່ໃນເນື້ອທີ່ທີ່ມີການສາທິດ (5) ຊ່ວຍເຫຼືອທາງດ້ານເຕັກນິກເພື່ອກຳນົດການຜະລິດ ແລະ ກຸ່ມການຕະຫຼາດ (6) ດຳເນີນການສຳຫຼວດກ່ຽວກັບຄວາມຕ້ອງການທາງດ້ານກະສິກຳ ແລະ ກ່ຽວກັບການຕິດຕາມກວດກາ. |
| 9 | ແຜນງານສົ່ງເສີມ ການຜະລິດໝາກໄມ້ຢູ່ພາກໃຕ້ຂອງລາວ. | DOA/PAFS/DAFO | A | ເຂດເນີນສູງ, ແຂວງເຊກອງ ແລະ ອັດຕະປື. | - ເລືອກເຟັ້ນ ແລະ ພັດທະນາການຜະລິດໝາກໄມ້ເປັນສິນຄ້າຢູ່ເຂດເນີນສູງທາງພາກໃຕ້ຂອງລາວ. | (4) ຊ່ວຍເຫລືອທາງດ້ານເຕັກນິກສຳລັບການບໍລິຫານໂຄງການ , ການກະກຽມຕາຕະລາງ ການປູກພືດ, ການຄັດເລືອກ ອອກແບບ ແລະ ຈັດຕັ້ງການສາທິດ (2) ດຳເນີນດານຝຶກອົບຮົມ ໃຫ້ແກ່ພະນັກງານ DOA/PAFS/DAFO (3) ຊ່ວຍເຫລືອທາງດ້ານເຕັກນິກ ສຳລັບ ການສ້າງ ແລະ ປົກປັກຮັກສາແປງສາທິດ (4) ຊີ້ນຳທາງດ້ານເຕັກນິກ ແກ່ຊາວນາ ຢູ່ໃນເນື້ອທີ່ທີ່ມີການສາທິດ (5) ຊ່ວຍເຫຼືອທາງດ້ານເຕັກນິກເພື່ອກຳນົດການຜະລິດ ແລະ ກຸ່ມການຕະຫຼາດ (6) ດຳເນີນການສຳຫຼວດກ່ຽວກັບຄວາມຕ້ອງການທາງດ້ານກະສິກຳ ແລະ ກ່ຽວກັບການຕິດຕາມກວດກາ |
| ການປູກມອນ ລ້ຽງມ້ອນ | | | | | | |
| 10 | ແຜນງານສົ່ງເສີມຝັດໃຫ້ໄຍ | DOA/PAFS/DAFO, ສູນສົ່ງເສີມ ແລະ ຄົ້ນຄ້ວາການປູກມອນລ້ຽງໄໝ. | A | ທົ່ວປະເທດ | - ສ້າງລາຍຮັບເພີ່ມເຕີມໃນເຂດຊົນນະບົດ ໂດຍການຂະຫຍາຍການຜະລິດ ຝ້າຍ ແລະ ໄໝທີ່ມີຄຸນນະພາບ | (1) ຊ່ວຍເຫຼືອທາງດ້ານວິຊາການ ສຳລັບການບໍລິຫານໂຄງການການປູກຕົ້ນມອນ ແລະ ລ້ຽງມ້ອນ ພັດທະສ່ວນຮ່ວມຂອງບ້ານທີ່ມີທຶນ ກິດຈະກຳຫຼັງການເກັບກ່ຽວປີ້ມ້ອນ ແລະ ການຕະຫລາດ (2) ຊ່ວຍເຫຼືອດ້ານວິຊາການເພື່ອ ໃຫ້ແຜນການຟື້ນຟູ ສະຖານີ ແລະ ອຸປະກອນ ຍົກລະດັບເຕັກໂນໂລຊີ ໃນການຜະລິດໄຂ່ ອອກແບບ ປະເມີນລາຍຈ່າຍ ແລະ ການກະກຽມເອະສານປະມູນ (3) ບູລະນະສູນຄົ້ນຄ້ວາ ແລະ ສົ່ງເສີມການປູກມອນລ້ຽງມ້ອນ ແລະ ຕິດຕັ້ງອຸປະກອນທີ່ຈຳເປັນ (4) ຄັດເລືອກບ້ານບູລິມະສິດເພື່ອ ປະຕິບັດໂຄງການ (5) ສ້າງກອງທຶນແລະ ກຳນົດກຸ່ມຊາວກະສິກອນ ໄດ້ການຊ່ວຍເຫຼືອທາງດ້ານວິຊາການ ຂອງ NGO (6) ຝຶກອົບຮົມພະນັກງານ ແລະ ຊາວກະສິກອນ (7) ຊີ້ນຳທາງດ້ານເຕັກນິກ ໃຫ້ແກ່ບັນດາຟາມປູກມອນລ້ຽງມ້ອນ ທາງດ້ານການ ປູກມອນແລະ ເຮືອນມ້ອນ ການປົກປັກຮັກສາສິ່ງອຳນວຍຄວາມສະດວກຕ່າງໆ ການລ້ຽງມ້ອນ ກິດຈະກຳຫຼັງເກັບກ່ຽວປີ້ມ້ອນ. |
| 11 | ໂຄງການຊ່ວຍ ພາກສ່ວນເອກະຊົນ ຜະລິດໄໝ (ຂະໜາດໃຫຍ່) | DOA/PAFS/DAFO, ສູນສົ່ງເສີມ ແລະ ຄົ້ນຄ້ວາການປູກມອນລ້ຽງໄໝ. | B | ທົ່ວປະເທດ | ອຳນວຍການຜະລິດປີ້ມອນ ແລະ ໄໝດິບ ທີ່ມີຄຸນນະພາບຢູ່ໂຮງງານເອກະຊົນ. | (1) ສ້າງລະບົບຜະລິດໄຂ່ມອນປະສົມ (ປີ-ປີ), (2) ຝຶກອົບຮົມພະນັກງານ ກ່ຽວກັບການຂະຫຍາຍພັນມ້ອນ, (3) ຝຶກອົບຮົມຊາວນາຂະຫຍາຍພັນມອນ, (4) ໃຫ້ການຊ່ວຍເຫລືອ ດ້ານເຕັກນິກ ກ່ຽວກັບການປູກມອນ, ລ້ຽງ ແລະ ສາວໄໝ ໃຫ້ພາກສ່ວນເອກະຊົນ, (5) ພັດທະນາລະບົບຕີລາຄາຄຸນນະພາບທັງປີ້ມ້ອນ ແລະ ໄໝດິບ, (6) ສ້າງສິ່ງອຳນວຍທົດສອບຄຸນນະພາບຮັງໄໝ ແລະ ໄໝດິບ ແລະ ຈັດປະເພດຄຸນນະພາບໄໝ. |
| | ການສົ່ງເສີມ | | | | | |
| 12 | ໂຄງການຂະຫຍາຍເຕັກໂນໂລຊີ ກະສິກຳ | AEA/NAFRI/STEA | A | ວຽງຈັນ & ທົ່ວປະເທດ | ສະໜອງຂໍ້ມູນຂ່າວສານເຕັກໂນໂລຊີ ກະສິກຳໃຫ້ແກ່ຊາວກະສິກອນ ແລະ ພະນັກງານສົ່ງເສີມໂດຍຜ່ານວິທະຍຸ ໂທລະພາບ | (1) ຊ່ວຍເຫລືອທາງດ້ານວິຊາການ ໃນກາເກັບກຳຂໍ້ມູນຂ່າວສານ ດ້ານລະບົບການເຮັດກະສິກຳ ສັງລວມຂໍ້ມູນຂ່າວສານ ແລະ ຄຳແນະນຳທາງດ້ານເຕັກນິກໃຫ້ແກ່ການທົດລອງພາກສະໜາມ (2) ຊ່ວຍເຫຼືອທາງດ້ານເຕັກນິກ ໃນການກະກຽມ ຂໍ້ມູນດິບ ແລະ ນຳເອົາໄປ ອອກໂຄສະນາ, ພັດທະນາລາຍການວິທະຍຸ ແລະ ໂທລະພາບກ່ຽວກັບຂໍ້ມູນດ້ານກະສິກຳ ກະກຽມຂໍ້ມູນດິບເປັນລາຍລັກອັກ |

| | | | | | | |
|---|---|---|---|---|---|---|
| | | | | | | ສອນ (3) ຕິດຕັ້ງອຸປະກອນຕ່າງໆ ສຳລັບລາຍການໂທລະພາບ ແລະ ວິທະຍຸ (4) ຜະລິດລາຍການໂທລະພາບ ແລະ ວິທະຍຸ ແລະ ພິມເອກະສານໂຄສະນາຕ່າງໆ (5) ປັບປຸງລາຍການແລະ ສິ່ງພິມຕ່າງໆ ໃຫ້ທັນສະໄໝ. ຕອບສະໜອງ ແລະ ຕາມການສົ່ງຂ່າວ ແລະ ຂ່າວສານໃໝ່ໆ ຈາກສະໜາມ (6) ກວດກາຕີລາຄາປະສິດທິຜົນ ຂອງການໂຄສະນາ ປັບປຸງດັດແປງແກ້ໄຂໃຫ້ດີຂຶ້ນ. |
| 13 | ເຮັດການກະສິກຳ ແບບຜູກພັນສັນຍາ ຢູ່ໃນເຂດຈຸມສຸມ (ປະສົມປະສານກັບແຜນງານສົ່ງເສີມ AEA 8 | AEA/ DOA | B | AEA, ແລະ ທຸກແຂວງ | ສະໜັບສະໜູນກຸ່ມຜະລິດ ແລະ ສະຫະກອນຊາວນາ ກ່ຽວກັບການເຮັດກະສິກຳຕາມແບບຜູກພັນສັນຍາ. | (1) ສະໜັບສະໜູນການເຊັນສັນຍາ ລະຫວ່າງ ບໍລິສັດ ແລະ ຊາວນາ, (2) ໃຫ້ການສະໜັບສະໜູນດ້ານເຕັກນິກແກ່ ບໍລິສັດ ແລະ ຊາວນາ ກ່ຽວກັບ ເຕັກນິກການຜະລິດ ແລະ ລະບົບປູກຝັງ, (3) ຊ່ວຍຊາວນາ ແລະ ບໍລິສັດ ແກ້ໄຂຂໍ້ຜິດພາດທີ່ເກີດຂຶ້ນໃນການເຮັດກະສິກຳແບບຜູກພັນສັນຍາສັນຍາ, (4) ຝຶກອົບຮົມ SMS, FSEW ແລະ ຊາວນາ ກ່ຽວກັບ ວິທີເຮັດກະສິກຳຕາມແບບຜູກພັນສັນຍາ. |
| | ການຄົ້ນຄ້ວາ ກ່ຽວກັບໂຄງການສ້າງເທິງນີ້ | | | | | |
| 14 | ແຜນງານຄົ້ນຄ້ວາເຕັກໂນໂລຢີ ປູກກາເຟບ້ານອີຕູ້. | NAFRI/DOA/PAFS /DAFO | A | ພູພຽງບໍລິເວນ | ເພື່ອພັດທະນາເຕັກໂນໂລຊີສະໄໝ ໃໝ່ສຳລັບການປູກກາເຟ ເພື່ອສົ່ງອອກ. | (1) ຊ່ວຍເຫຼືອທາງດ້ານວິຊາການໃຫ້ແກ່ການຄົ້ນຄ້ວາ ຢູ່ສູນຄົ້ນຄ້ວາກາເຟ ແລະ ຢູ່ກັບສະໜາມ ໂດຍສະເພາະແມ່ນໃນດ້ານ (ກ) ກິດຈະກຳຫຼັງເກັບກ່ຽວ ແລະ ການກວດກາຄຸນນະພາບ (ຂ) ການຄຸ້ມຄວາມອຸດົມສົມບູນຂອງດິນ ແລະ ການວິໄຈດິນ (ຄ) ລະບົບ ການເຮັດການກະສິກຳ ແລະ ເສດຖະກິດ(ງ) ການເຜີຍແຜ່ສົ່ງເສີມ ແລະ ຝຶກອົບຮົມ (ງ) ການຊ່ວຍເຫລືອຂອງຊ່ຽວຊານ ໃນໄລຍະສັ້ນ ...; (2) ຊ່ວຍເຫຼືອທາງດ້ານວິຊາການ ເພື່ອສ້າງມາດຖານຄຸນນະພາບ ຂອງກາເຟ ຕິດຕັ້ງອຸປະກອນ ເພື່ອກວດກາຄຸນນະພາບ ແລະ ລະບົບ ກວດກາຄຸນນະພາບ (3) ຝຶກອົບຮົມພະນັກງານ ລວມທັງຝຶກອົບຮົມຄ່າທີ່ ແລະ ໄປທັດສະນະສຶກສາ (4) ຊ່ວຍເຫຼືອທາງດ້ານວິຊາການໃຫ້ແກ່ໂຄງການຝຶກອົບຮົມ ພະນັກງານສົ່ງເສີມ ຂອງ PAFS/DAFO ແລະ ຜູ້ປູກກາເຟຕົວແບບ.(5) ຊ່ວຍເຫຼືອທາງດ້ານວິຊາການສຳລັບກິດຈະກຳສົ່ງເສີມ ສ້າງແປງສາທິດ ແລະ ຕິດຕາມ ຕີລາຄາຂໍ້ມູນຂ່າວສານດ້ານການຕະຫຼາດ ກາເຟ. |
| 15 | ແຜນງານຄົ້ນຄ້ວາ ເຕັກໂນໂລຢີປູກພືດຜັກ. | NAFRI/DOA | A | ວຽງຈັນ ແລະ ທົ່ວປະເທດ | ຄັດເລືອກພັນປັບປຸງໃໝ່ ແລະ ພັດທະນາເຕັກໂນໂລຊີການປູກຜັກ ທີ່ແທດເໝາະ ຢູ່ໃນສະໜາມ. | (1) ຊ່ວຍເຫຼືອທາງດ້ານເຕັກນິກ ວິຊາການໃຫ້ແກ່ການຄົ້ນຄວ້າ ຢູ່ສູນຄົ້ນຄ້ວາພືດແລະ ດອກໄມ້ ແລະ ບັນດາສະຖານີຂອງແຂວງ ຕະຫຼອດຮອດການທົດລອງຢູ່ສະໜາມ (ກ) ປັບປຸງ ແລະ ທົດສອບບັນດາແນວພັນ .(ຂ) ວິໄຈດິນ ແລະ ການຄຸ້ມຄອງຄວາມອຸດົມສົມບູນຂອງດິນ (ຄ) ປົກປັກຮັກສາພືດ (ງ) ລະບົບການກະສິກຳໃນການເສດຖະກິດ.(2) ຊ່ວຍເຫຼືອໃນດ້ານວິຊາການໃຫ້ແກ່ແຜນການໃນຕໍ່ໜ້າ ກ່ຽວກັບການພັດທະນາຄົ້ນຄ້ວາພືດຜັກ ແຜນການບູລະນະແລະຍົກລະດັບ, ອອກແບບ ແລະ ປະເມີນຄ່າໃຊ້ຈ່າຍ (3) ບູລະນະສິ່ງອຳນວຍຄວາມສະດວກຕ່າງໆທີ່ມີແລ້ວຂອງ ສູນຄົ້ນຄ້ວາພືດແລະ ຜັກ ຍົກລະດັບສູນຄົ້ນຄ້ວາຢູ່ຂັ້ນແຂວງ (4) ດຳເນີນການຝຶກອົບຮົມໃຫ້ນັກຄົ້ນຄ້ວາຫຼັກແຫຼ່ງ (ຢູ່ກັບທີ່ ແລະ ໄປຝຶກອົບຮົມຢູ່ຕ່າງປະເທດ). |
| 16 | ແຜນງານຄົ້ນຄ້ວາ ເຕັກໂນໂລຢີປູກຕົ້ນໄມ້ໃຫ້ໝາກ. | NAFRI/DOA | A | ວຽງຈັນ ແລະ ທົ່ວປະເທດ | ຄັດເລືອກພັນປັບປຸງໃໝ່ ແລະ ພັດທະນາເຕັກໂນໂລຊີການປູກຕົ້ນໄມ້ໃຫ້ໝາກ ທີ່ແທດເໝາະ ຢູ່ໃນສະໜາມ. | (1) ຊ່ວຍເຫຼືອທາງດ້ານເຕັກນິກ ວິຊາການໃຫ້ແກ່ການຄົ້ນຄວ້າ ຢູ່ສູນຄົ້ນຄ້ວາພືດແລະ ດອກໄມ້ ແລະ ບັນດາສະຖານີຂອງແຂວງ ຕະຫຼອດຮອດການທົດລອງຢູ່ສະໜາມ (ກ) ປັບປຸງ ແລະ ທົດສອບບັນດາແນວພັນ .(ຂ) ວິໄຈດິນ ແລະ ການຄຸ້ມຄອງຄວາມອຸດົມສົມບູນຂອງດິນ ນັບທັງການ ຄຸ້ມຄອງ ການສຽດເຊາະຂອງດິນ (ຄ) ປົກປັກຮັກສາພືດ (ງ) ລະບົບການກະສິກຳໃນການເສດຖະກິດ.(2) ຊ່ວຍເຫຼືອໃນດ້ານວິຊາການໃຫ້ແກ່ແຜນການໃນຕໍ່ໜ້າ ກ່ຽວກັບການພັດທະນາຄົ້ນຄ້ວາພືດຜັກ ແຜນການບູລະນະແລະຍົກລະດັບ, ອອກແບບ ແລະ ປະເມີນຄ່າໃຊ້ຈ່າຍ (3) ບູລະນະສິ່ງອຳນວຍຄວາມສະດວກຕ່າງໆທີ່ມີແລ້ວຂອງ ສູນຄົ້ນຄ້ວາພືດແລະ ຜັກ ຍົກລະດັບສູນຄົ້ນຄ້ວາຢູ່ຂັ້ນແຂວງ (4) ດຳເນີນການຝຶກອົບຮົມໃຫ້ນັກຄົ້ນຄ້ວາຫຼັກແຫຼ່ງ (ຢູ່ກັບທີ່ ແລະ ໄປຝຶກອົບຮົມຢູ່ຕ່າງປະເທດ). |
| 17 | ແຜນງານຄົ້ນຄ້ວາເຕັກໂນໂລຢີ ເຮັດກະສິກຳແບບຄົບ | NAFRI/DOA | B | ວຽງຈັນ | ພັດທະນາເຕັກໂນໂລຢີ ກະສິກຳແບບຄົບວົງຈອນເພື່ອຜະລິດສິນຄ້າດ້ານກະສິກຳ. | (1) ສ້າງລະບົບການກະສິກຳແບບຄົບວົງຈອນ ລວມທັງປູກພືດ, ການລ້ຽງສັດ ແລະ ການປະມົງ, (2) ສ້າງຟາມທົດລອງຢູ່ແຂວງ/ເມືອງ/ບ້ານບູລິມະສິດ ເພື່ອ |

| | | | | | | |
|---|---|---|---|---|---|---|
| | ວິຈອນ. | | | | | ພັດທະນາລະບົບການກະສິກຳແບບຄົບວົງຈອນ ແລະ ສະແດງຜົນໃຫ້ຊາວນາເຫັນ. |
| 18 | ໂຄງການຝຶກອົບຮົມແລະຄົ້ນຄ້ວາເຂົ້າ ລາວ IRRI | NAFRI/DOA | S | ເນື້ອທີ່ປູກເຂົ້າທົ່ວປະເທດ | ວັດຖຸປະສົງຂອງ ໂຄງການໄລຍະ IVນີ້ ແມ່ນແນໃສ່ໃຫ້ໄປເຖິງ ຊາວນາ ໂດຍອີງໃສ່ຄວາມສາມາດຂອງ ໂຄງການໃນການກຳນົດວາງແຜນ ດຳເນີນການປະຕິບັດ ປະກອບເອກະສານ ຕິດຕາມປະເມີນຜົນ ແຜນງານ ໃນການພັດທະນາການຄົ້ນຄ້ວາທີ່ແທດເໝາະກັບຄວາມຕ້ອງການຕົວຈິງ ຢ່າງມີຈຸດສຸມ ໃນການຜະລິດເຂົ້າຢູ່ທົ່ງພຽງ ແລະ ເຂດເນີນສູງ. | ໃນຊຸມປີຜ່ານມາ ໂຄງການໄດ້ກາຍເປັນ ແຫຼ່ງອັນຕົ້ນຕໍໃນການກໍ່ສ້າງດ້ານຄວາມສາມາດ ແລະ ພັດທະນາເຕັກໂນໂລຊີ ໃນການຜະລິດເຂົ້າ ເພື່ອບັນລຸ ວັດຖຸປະສົງອັນຍືນຍົງ ຂອງໂຄງການຄົ້ນຄ້ວາເຂົ້າລະດັບຊາດນີ້ SDC ໄດ້ມີຄວາມຄາດຫວັງ ເຖິງທ່າແຮງ ອັນໃຫຍ່ຫຼວງລະດັບຊາດ ໃນການວາງແຜນ ແລະ ດຳເນີນການຄົ້ນຄ້ວາ ພັດທະນາຢ່າງເປັນເອກະລາດ ຈາກນັ້ນ ຈະເປັນການຫຼຸດຜ່ອນການຂຶ້ນກັບຊ່ຽວຊານຕ່າງປະເທດ. ອີກປະການໜຶ່ງ ໂດຍອີງໃສ່ຄວາມຫຼາກຫຼາຍຂອງແຫຼ່ງທຶນນັບທັງພາກລັດທະບານ ແລະ ອົງການຊ່ວຍເຫລືອຕ່າງໆ. ໂຄງການໄລຍະ 4 ນັບມື້ນັບ ຈະເນັ້ນໃສ່ ຄວາມຕ້ອງການຊັບພະຍາກອນເພີ່ມເຕີມ ຈາກໂຄງການຈັດຕັ້ງຊ່ວຍເຫຼືອຕ່າງໆ ສຳລັບກິດຈະກຳຄົ້ນຄ້ວາ ແລະ ຝຶກອົບຮົມ |
| 19 | ແຜນງານຄົ້ນຄ້ວາລະບົບເຮັດກະສິກຳ ດ້ວຍກົນຈັກ. | NAFRI | B | ວຽງຈັນ | ປະເມີນຄວາມສາມາດໃຊ້ເຄື່ອງຈັກ ໃນວຽກງານກະສິກຳ. | (1) ຄົ້ນຄ້ວາສະພາບນຳໃຊ້ເຄື່ອງຈັກກະສິກຳ ໃນປະຈຸບັນ, (2) ພັດທະນາການປູກຝັງດ້ວຍເຄື່ອງຈັກ ໂດຍນຳໃຊ້ເຄື່ອງຈັກນ້ອຍ ຫລື ທີ່ຜະລິດໃນທ້ອງຖິ່ນ, (3) ພັດທະນາຟາມຂະໜາດໃຫຍ່ ທີ່ໃຊ້ເຄື່ອງຈັກ ເພື່ອຜະລິດເຂົ້າ ແລະ ພືດເປັນສິນຄ້າ. |
| 20 | ມາດຖານທົດສອບ ປະສິດທິພາບຂອງເຄື່ອງຈັກກະສິກຳ. | NAFRI | B | ວຽງຈັນ | ພັດທະນາລະບົບທົດສອບປະສິດທິພາບຂອງເຄື່ອງຈັກກະສິກຳ. | (1) ສ້າງຫ້ອງວິໄຈ ທົດສອບປະສິດທິພາບທີ່ປະກອບດ້ວຍ ອຸປະກອນທີ່ຈຳເປັນ ສຳລັບ ກົນຈັກກະສິກຳ (2) ໃຫ້ການຝຶກອົບຮົມດ້ານເຕັກນິກແກ່ ພະນັກງານຢູ່ຫ້ອງວິໄຈດັ່ງກ່າວ, (3) ວາງທິດທາງ ເພື່ອວັດແທກປະສິດທິພາບຂອງເຄື່ອງຈັກກະສິກຳ. |
| 21 | ໂຄງການພັດທະນາເມັດພັນພື້ນຖານ. | ສູນຄົ້ນຄວ້າ ກະສິກຳ NAFRI ສູນຂະຫຍາຍເມັດພັນນາພອກ DOA | A | ວຽງຈັນ | ພັດທະນາເຕັກໂນໂລຢີ ເມັດພັນພື້ນຖານນັບທັງ ການປະສົມພັນ ແລະ ປະເມີນຜົນ ການຜະລິດ ເມັດພັນພື້ນຖານການຜະລິດ ເມັດ ເຂົ້າສຳລັບພືດຕະກູນຖົ່ວ ແລະ ໝາກຖົ່ວ. | (1) ຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ໃຫ້ແກ່ແຜນການພັດທະນາພືດພັນ ແຜນການຍົກລະດັບ ອຸປະກອນ ແລະ ປະເມີນຄ່າໃຊ້ຈ່າຍ (2) ຊ່ວຍເຫຼືອທາງດ້ານວິຊາການໃຫ້ແກ່ການປະເມີນຜົນ ເມັດພັນ ການຜະລິດ ເມັດພັນພື້ນຖານການຜະລິດເມັດພັນເຂົ້າ (3) ຕິດຕັ້ງອຸປະກອນໃໝ່ ແກ່ ການປະເມີນຜົນ ເມັດພັນແລະ ການຜະລິດເມັດພັນ (4) ຊ່ວຍເຫຼືອທາງດ້ານວິຊາການໃຫ້ແກ່ການອົບຮົມຢູ່ພາຍໃນແລະ ຕ່າງປະເທດສຳລັບພະນັກງານ. (5) ຊ່ວຍເຫຼືອດ້ານວິຊາການໃນການສ້າງຕັ້ງລະບົບຂະຫຍາຍເມັດພັນ ໄລຍະ 2. (6) ຊ່ວຍເຫຼືອທາງດ້ານວິຊາການ ໃນການຝຶກອົບຮົມ ຊາວກະສິກອນ ທີ່ຜູກພັນສັນຍາ ຢູ່ສູນຂະຫຍາຍເມັດພັນ ແລະ ສວນປູກ. |
| 22 | ແຜນການຄົ້ນຄ້ວາ ເຕັກໂນໂລຢີ ປູກພືດຢູ່ເຂດເນີນສູງ | ສູນຄົ້ນຄວ້າ ກະສິກຳ NAFRI PAFS/ DOA | A | ວຽງຈັນ ແລະ ທົ່ວປະເທດ | ເລືອກເຟັ້ນແນວພັນປັບປຸງໃໝ່ ແລະ ພັດທະນາເຕັກໂນໂລຢີທີ່ແທດເໝາະ ກັບ ລະດັບ ທ້ອງຖິ່ນ ສຳລັບການປູກພືດເຂດເນີນສູງ | (1) ຊ່ວຍເຫຼືອທາງດ້ານວິຊາການໃນການຄົ້ນຄ້ວາຢູ່ ສູນກະສິກຳ ແລະບັນດາສະຖານີຂອງແຂວງ ຕະຫຼອດຮອດຢູ່ ສວນທົດລອງ (ກ) ຄັດເລືອກ ແລະ ທົດສອບພືດ ແລະແນວພັນ (ຂ) ຄຸ້ມຄອງຄວາມອຸດົມສົມບູນຂອງດິນ ແລະ ວິໄຈດິນ (ຄ) ຕ້ອງການພືດ (ງ) ລະບົບກະສິກຳ ແລະ ເສດຖະກິດກະສິກຳ ນັບທັງການຕະຫຼາດ (2) ຊ່ວຍເຫຼືອທາງດ້ານວິຊາການ ໃຫ້ແກ່ແຜນການໃນຕໍ່ໜ້າ ທາງດ້ານການພັດທະນາ ແລະ ຄົ້ນຄ້ວາ ພືດ ເຂດເນີນສູງ ແຜນການຍົກລະດັບ ອຸປະກອນແລະ ສະຖານີຕ່າງໆ, ອອກແບບ, ປະເມີນລາຄາ (3) ຍົກລະດັບອຸປະກອນຢູ່ໃນສູນຄົ້ນຄ້ວາກະສິກຳ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ຢູ່ສູນຄົ້ນຄ້ວາສິ້ນແຂວງ (4) ຝຶກອົບຮົມ ຢູ່ພາຍໃນແລະ ຕ່າງປະເທດ ໃຫ້ແກ່ ນັກຄົ້ນຄ້ວາຫຼັກແຫຼ່ງ. |

## 5. ການລ້ຽງສັດ ແລະ ການປະມົງ: ການສົ່ງເສີມ, ຄົ້ນຄ້ວາ ແລະ ອື່ນໆ

| ລ/ດ | ຊື່ໂຄງການ/ແຜນງານ | ອົງການປະຕິບັດ | ໄລຍະ | ທີ່ຕັ້ງ | ຈຸດປະສົງ | ໜ້າວຽກ |
|---|---|---|---|---|---|---|
| ການພັດທະນາການລ້ຽງສັດ | | | | | | |
| 1 | ສືບຕໍ່ປັບປຸງການບໍລິການລ້ຽງສັດ ແລະ ການສົ່ງເສີມ (ໂຄງການລ້ຽງສັດ ລາວ - EU) | MAF/DLF | S | ທົ່ວປະເທດ | (1) ປັບປຸງສຸກຂະພາບ ແລະ ຫລຸດຜ່ອນພະຍາດສັດລ້ຽງ, (2) ປັບປຸງການບໍລິການດ້ານການລ້ຽງສັດ ກ່ຽວກັບສຸກຂະພາບສັດ. | (1) ໃຫ້ການຊ່ວຍເຫລືອດ້ານເຕັກນິກ ເພື່ອສ້າງລະບຽບກົດໝາຍ ກ່ຽວກັບການບໍລິການ, ລະບົບສັດຕະວະແພດ, (2) ປັບປຸງລະບົບຜະລິດ ແລະ ແຈກຢາຍຢາວັກຊີນ, (3) ຈັດຕັ້ງຂ່າວສານການຕະຫລາດ ກ່ຽວກັບສັດລ້ຽງ ກໍ່ຄືພະຍາດສັດລ້ຽງ, (4) ປັບປຸງດ້ານກວດກາຜະລິດຕະພັນສັດລ້ຽງ ກໍ່ຄື DAFO ແລະVVW ເພື່ອສົ່ງເສີມການລ້ຽງສັດ. |
| 2 | ໂຄງການປັບປຸງຄຸນນະພາບສັດ. | MAF/DLF | A | ທົ່ວປະເທດ | (1) ປັບປຸງສຸກຂະພາບ ແລະ ຫລຸດຜ່ອນພະຍາດສັດລ້ຽງ, (2) ປັບປຸງການບໍລິການ ດ້ານການລ້ຽງສັດ ກ່ຽວກັບສຸກຂະພາບ. | (1) ເພີ່ມທະວີ ການຜະລິດ ວັກຊີນຂອງສະຖາບັນຜະລິດວັກຊີນແຫ່ງຊາດ (2) ສູນຝຶກອົບຮົມດ້ານວິຊາການ ໃຫ້ແກ່ VVWS ແລະ ພະນັກງານຂອງ PLFO/DNFPO. (3) ເພີ່ມທະວີລະບົບກວດກາຂື້ນ ນັບທັງດ່ານກວດຕ່າງໆ (4) ສ້າງລະບົບປ້ອງກັນພະຍາດ ຢູ່ຂົງແຂວງ . |
| 3 | ໂຄງການຊ່ວຍເຫລືອ ລະບົບປັບປຸງ ແລະ ຂະຫຍາຍພັນສັດ. | MAF/DLF | B | ທົ່ວປະເທດ | - ຊ່ວຍຈັດຕັ້ງລະບົບຂະຫຍາຍພັນ ໃຫ້ພາກສ່ວນເອກະຊົນ. | (1) ຄົ້ນຄ້ວາປັບປຸງການທົດສອບຄວາມແທດເໝາະຂອງພັນສັດປັບປຸງ, (2) ສ້າງລະບຽບກົດໝາຍ ກ່ຽວກັບລະບົບ ແລະ ຂະຫຍາຍສັດ, (3) ໃຫ້ການສະໜັບສະໜູນດ້ານເຕັກນິກ ກ່ຽວກັບສັດພໍ່ ແລະ ການສືບພັນທຽມ ເພື່ອຂະຫຍາຍພັນແກ່ ພາກສ່ວນເອກະຊົນ, (4) ສ້າງລະບົບກວດກາການຂະຫຍາຍພັນ, (5) ສ້າງລະບົບປື້ມບັນພັນ. |
| 4 | ການສ້າງລະບົບປະກັນໄພສັດ. | MAF/DLF | B | ທົ່ວປະເທດ | - ພັດທະນາ ແລະ ຈັດຕັ້ງປະຕິບັດລະບົບປະກັນໄພສັດ. | (1) ສ້າງລະບຽບກົດໝາຍປະກັນໄພສັດ, (2) ໃຫ້ການຊ່ວຍເຫລືອດ້ານເຕັກນິກ ກ່ຽວກັບວຽກງານດ້ານການເງິນ ເພື່ອພັດທະນາລະບົບປະກັນໄພສັດລ້ຽງຂອງພາກສ່ວນເອກະຊົນ. |
| 5 | ການຍົກລະດັບ ຜະລິດຕະພາບການລ້ຽງສັດ. | MAF/DLF | A | ທົ່ວປະເທດ | - ເພີ່ມທະວີຜະລິດຕະພາບ ການລ້ຽງສັດ ໂດຍປັບປຸງການສະໜອງອາຫານສັດ. | (1) ປັບປຸງຫ້ອງວິໄຈອາຫານສັດ ລວມທັງ ສິ່ງອຳນວຍທົດສອບປະສິດທິພາບການລ້ຽງສັດ, (2) ວາງມາດຕະຖານອາຫານສັດ, (3) ປັບປຸງສູນລ້ຽງສັດຂັ້ນເມືອງ ລວມທັງຟື້ນຟູສິ່ງອຳນວຍ ແລະ ຝຶກອົບຮົມພະນັກງານ, (4) ປະກອບເຕັກໂນໂລຢີປັບປຸງອາຫານສັດ ບົນພື້ນຖານການສາທິດ ດ້ານເຕັກນິກ ແລະ ການຝຶກອົບຮົມ. |
| 6 | ການປັບປຸງສູນສັດຕະວະແພດແຫ່ງຊາດ (ຕາມແຜນການຂອງ DLF). | MAF/DLF | A | ທົ່ວປະເທດ | - ຍົກລະດັບຄວາມສາມາດຂອງ ສູນສຸຂະພາບສັດ ແຫ່ງຊາດ. | (1) ປັບປຸງຫ້ອງວິໄຈບົ່ງມະຕິພະຍາດສັດ. (2) ສ້າງຫ້ອງວິໄຈ4 ແຫ່ງຢູ່ໃນຂັ້ນທ້ອງຖິ່ນ, (3) ໜ່ວຍກວດກາຄຸນນະພາບວັກຊີນ (4) ຝຶກອົບຮົມວິຊາການໃຫ້ແກ່ພະນັກງານ |
| 7 | ປັບປຸງສູນປັບປຸງງົວຊີ້ນ ແລະ ງົວນົມ (ຕາມແຜນການຂອງ DLF) | MAF/DLF | B | ນາຊ່ວງ, ລາດແສນ, ,ແບ່ງ ບໍລິເວນ | - ຍົກລະດັບຄວາມສາມາດຄົ້ນຄ້ວາ ແລະ ສົ່ງເສີມຂອງສູນປັບປຸງງົວນົມ. | (1) ຟື້ນຟູສູນ ແລະ ຕິດຕັ້ງອຸປະກອນ, (2) ຝຶກອົບຮົມພະນັກງານ, (3) ສ້າງແຜນການ ແລະ ຝຶກອົບຮົມຊາວນາ, (4) ພັດທະນາເຕັກໂນໂລຢີທີ່ມີຜົນ ລະດັບສິ່ງເຂດ ຫລື ແຂວງ. |

| | | | | | | |
|---|---|---|---|---|---|---|
| 8 | ແຜນງານຄົ້ນຄ້ວາການຜະລິດຫຍ້າ ແລະ ນຳໃຊ້ທົ່ງຫຍ້າ ແບບຍືນຍົງ | NAFRI/DOF | B | ວຽງຈັນ ແລະ ທົ່ວປະເທດ | (1) ເລືອກເຟັ້ນພັນຫຍ້າ ປັບປຸງໃໝ່ ແລະ ພັດທະນາເຕັກໄນໂລຢີທີ່ເໝາະສົມ ເພື່ອປູກຫຍ້າ ແລະ ແປຮູບພາຍຫຼັງເກັບກ່ຽວ, (2) ພັດທະນາລະບົບຄຸ້ມຄອງທົ່ງຫຍ້າ ທີ່ແທດເໝາະ ແລະ ຍືນຍົງ. | (1) ທົດສອບຄວາມແທດເໝາະຂອງພັນຫຍ້າໃໝ່ ແລະ ສ້າງລະບົບປູກຝັງທີ່ຖືກຕ້ອງລວມທັງໃສ່ຝຸ່ນ, ເສັ້ງຫຍ້າ, ຄວບຄຸມພະຍາດ ແລະ ແມງໄມ້, ປູກແບບໝູນວຽນ ແລະ ການປູກຝັງແບບຍືນຍົງ, (2) ພັດທະນາເຕັກໄນໂລຢີ ຫລັງເກັບກ່ຽວ ສຳລັບຫຍ້າລ້ຽງສັດ, (3) ສ້າງຟາມທົດລອງຢູ່ແຂວງບໍລິມະສັດ ເພື່ອສະແດງຜົນການພັດທະນາຂ້າງເທິງນີ້ ໃຫ້ຊາວນາເຫັນ, (4) ພັດທະນາການນຳໃຊ້ດິນ ເພື່ອເປັນທົ່ງຫຍ້າລ້ຽງສັດແບບຍືນຍົງ. |
| 9 | ໂຄງການຄຸ້ມຄອງພະຍາດສັດຢູ່ໃນອິນດູຈີນ | NAFRI/DLF | S | ທົ່ວປະເທດ | ກຳນົດຍຸດທະສາດລະດັບພາກພື້ນ ສຳລັບສຸຂະພາບ ແລະ ແລະ ຄວບຄຸມພະຍາດສັດ. | (1) ຝຶກອົບຮົມ ດ້ານວິຊາການໃຫ້ແກ່ພະນັກງານສັດ ຢູ່ໃນຂົງເຂດອິນດູຈີນ. (2) ບົ່ງມະຕິແລະ ກວດກາຕິດຕາມພະຍາດສັດ.(3) ຊ່ວຍເຫຼືອທາງດ້ານວິຊາການໃຫ້ແກ່ການຜະລິດວັກຊີນ ແລະ ກວດກາຄຸນນະພາບສັດ. |
| | ການພັດທະນາການລ້ຽງສັດນ້ຳ | | | | | |
| 10 | ການປັບປຸງ ແລະ ສົ່ງເສີມການລ້ຽງສັດນ້ຳ | MAF/DAFS | A (S) | ນ້ຳຊວງ | ສ້າງສູນລ້ຽງສັດນ້ຳຊ່ວງ ແລະ ຍົກລະດັບຄວາມສາມາດຂອງ ຜູ້ຊ່ວຍງານດ້ານເຕັກໄນໂລຢີ ແລະ ວຽກງານສົ່ງເສີມລ້ຽງສັດນ້ຳ. | (1) ຈັດຕັ້ງສິ່ງອຳນວຍທົດສອບ-ດຳເນີນງານຂອງສູນລ້ຽງສັດນ້ຳຊວງ, (2) ຝຶກອົບຮົມບັນດາຜູ້ມີສ່ວນຮ່ວມແລະ ບັນດາພະນັກງານສົ່ງເສີມ, (3) ປັບປຸງການທົດລອງ ເພື່ອປັບປຸງການຜະລິດລູກປາ ແລະ ເຕັກນິກລ້ຽງສັດນ້ຳ. |
| 11 | ໂຄງການຟື້ນຟູ ແລະ ຂະຫຍາຍສູນຜະລິດປາ | DLF/PAFS/O/DAFSO | A | 8 ແຂວງ | -ບູລະນະແລະສ້າງ ສູນຜະລິດພັນປາ<br>- ປັບປຸງພະນັກງານໃນດ້ານເຕັກໄນໂລຊີ ແລະ ການຂະຫຍາຍ ການລ້ຽງສັດນ້ຳ | (1) ຟື້ນຟູ ແລະ ສ້າງສູນຜະລິດພັນປາ 8 ແຫ່ງ (2) ຝຶກອົບຮົມພະນັກງານ ໃນດ້ານການລ້ຽງສັດນ້ຳ (3) ທົດລອງການລ້ຽງສັດນ້ຳ. |
| 12 | ໂຄງການພັດທະນາການລ້ຽງປາ ຢູ່ເຂດຊົນນະບົດ | DLF/PAFS/O/DAFSO ສະຫະພັນແມ່ຍິງ | A | 12 ແຂວງ | ພັດທະນາການລ້ຽງປາໃນເຂດຊົນນະບົດ ດ້ວຍການສົມທົບເຕັກໄນໂລຊີ ແລະ ອຸປະກອນທີ່ເໝາະສົມ ການຝຶກອົບຮົມ ແລະ ທຶນຮອນ. | (1) ພັດທະນາສູນຜະລິດປາ (2) ຂະຫຍາຍເຕັກໄນໂລຊີການລ້ຽງສັດນ້ຳ ໄປສູ່ຊຸມຊົນ(3) ປ່ອຍເງິນກູ້ ສຳລັບການລ້ຽງສັດນ້ຳ(4) ພັດທະນາສູນຜະລິດ ອາຫານປາ (5) ສົ່ງເສີມທາງດ້ານຕະຫຼາດປາ ດ້ວຍການຜະລິດນ້ຳກ້ອນ ຢູ່ໃນເຂດຊົນນະບົດ. |

## 6. ຍຸດຕິການຖາງປ່າເຮັດໄຮ່: ກະສິກຳປ່າໄມ້ NTFPS, ອາຊີບທີ່ກ່ຽວຂ້ອງ

| ລ/ດ | ຊື່ໂຄງການ/ແຜນງານ | ອົງການປະຕິບັດ | ໄລຍະ | ທີ່ຕັ້ງ | ຈຸດປະສົງ | ໜ້າວຽກ |
|---|---|---|---|---|---|---|
| | | | | | 1. | |
| 1. ຍຸດຕິການຖາງປ່າເຮັດໄຮ່ ນອກຂອບເຂດ NBCA | | | | | | |
| 1.1 | ຍຸດຕິການຖາງປ່າຢູ່ໃນພາກໃຕ້ | PAFS/MAF | A | ສາລະວັນ ເຊກອງ, ອັດຕະປື | (1)ຍຸດຕິການຖາງປ່າເຮັດໄຮ່ກ່ອນປີ 2010 ດ້ວຍການພັດທະນລະບົບ ການນຳໃຊ້ດິນແບບຍືນຍົງ ແລະ ສ້າງລາຍຮັບຕ່າງໆ ທີ່ບໍ່ທຳລາຍສິ່ງແວດລ້ອມ. (2) ຫລຸດຜ່ອນ ແລະ ລົບລ້າງການຜະລິດ ຝິ່ນທີ່ຜິດກົດໝາຍດ້ວຍມາດຕະການພັດທະນາຊົນນະບົດ ແບບ ພິເສດ ໄດ້ເງື່ອນໄຂຂອງການຂະຫຍາຍຕົວ ແບບຍືນຍົງ ຂອງຊາດ. | (1) ມອບດິນແບບມີສ່ວນຮ່ວມ. (2) ສະໜັບສະໜູນການວາງແຜນ ການພັດທະນາບ້ານ. (3) ເຊື່ອມຕໍ່ບັນດາສູນຄົ້ນຄວ້າກັບ ລະບົບການປູກກະສິກຳທີ່ເໝາະ.(4) ຄຸ້ມຄອງ ແລະ ນຳໃຊ້ NTFP ແບບຍືນຍົງ. (5) ສົ່ງເສີມການກ້າເບ້ຍໄມ້ ຢູ່ກັບຟາມ.(6) ຕິດຕາມປະເມີນຜົນ. |
| 1.2 | ຍຸດຕິການຖາງປ່າຢູ່ໃນພາກເໜືອ | LCDC/UNDCP/ ອຳນາດການປົກຄອງແຂວງ PAFS/MAF | A | ຫົວພັນ, ຜົ້ງສາລີ, ຫລວງນ້ຳທາ, ຫຼວງພະບາງ, ອຸດົມໄຊ. | (1) ຍຸດຕິການຖາງປ່າເຮັດໄຮ່ກ່ອນປີ 2010 ດ້ວຍການພັດທະນລະບົບ ການນຳໃຊ້ດິນແບບຍືນຍົງ ແລະ ສ້າງລາຍຮັບຕ່າງໆ ທີ່ບໍ່ທຳລາຍສິ່ງແວດລ້ອມ. (2) ຫລຸດຜ່ອນ ແລະ ລົບລ້າງການຜະລິດ ຝິ່ນທີ່ຜິດກົດໝາຍດ້ວຍມາດຕະການພັດທະນາຊົນນະບົດ ແບບ ພິເສດ ໄດ້ເງື່ອນໄຂຂອງການຂະຫຍາຍຕົວ ແບບຍືນຍົງ ຂອງຊາດ. | (1) ໂຄງລ່າງພື້ນຖານ-ຖະໜົນ, ນ້ຳປະປາ, ຫ້ອງນ້ຳ, ຊົນລະປະທານຂະໜາດນ້ອຍ.(2) ໂຄງລ່າງພື້ນຖານດ້ານສັງຄົມ - ວິທີການສົ່ງເສີມຄວາມຮັບຜິດຊອບຂອງເພດຕ່າງໆ ໃນການພັດທະນາຊຸມຊົນ ສຸຂະພາບ, ການສຶກສາ ແລະ ການຝຶກອົບຮົມ.(3) ຮັບປະກັນມີສະບຽງອາຫານ , ມີລາຍຮັບ ພັດທະນາການນຳໃຊ້ດິນແບບຍືນຍົງ, ລ້ຽງສັດ, ປ່າໄມ້, ທ່ອງທ່ຽວ, ລາຍຮັບຫລາຍທາງ ແລະ ເງິນກູ້. |
| 1.3 | ພັດທະນາເຂດເປີນສູງ ແລະ ການລົບລ້າງຄວາມທຸກຍາກ | MAF/Sida | A | ໃຫ້ສຳເລັດກ່ຳເປັນໄປໄດ້ ຫຼວງພະບາງ, ໄຊຍະບູລີ, ສະຫວັນນະເຂດ | ຕ້ອງໄດ້ກຳນົດລະອຽດໃນເວລາກະກຽມ ແລະການປະເມີນ. ເປັນໄປໄດ້ທີ່ຈະລວມເອົາການລົບລ້າງຄວາມທຸກຍາກ, ລະບົບການນຳໃຊ້ດິນແບບຍືນຍົງ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ. | ຕ້ອງໄດ້ກຳນົດລະອຽດໃນເວລາກະກຽມ ແລະ ປະເມີນ |
| 2. | ຍຸດຕິການຖາງປ່າເຮັດໄຮ່ຢູ່ໃນ NBCAs | DOF/MAF | A | ບູລິມະສິດ NBCAs ທີ່ຢູ່ໃຕ້ການນາບຂູ່ ຂອງການຖາງປ່າເຮັດໄຮ່ | 1. ຍຸດຕິການຖາງປ່າເຮັດໄຮ່ ສົ່ງເສີມ ການນຳໃຊ້ປ່າແລະຊັບພະຍາກອນທຳມະຊາດ ຢູ່ໃນເຂດ ຂອງຊຸມຊົນ ທີ່ນອນຢູ່ໃນ NBCA ເປົ້າໝາຍບູລິມະສິດ ພູພະນັງ, ນ້ຳກະດິງ, ດົງພູວຽງ, ເຊຊັດ, ດົງອຳພັນ, ນ້ຳຊັນ, ນ້ຳພຸຍ, ນາກາຍ, ນ້ຳເທີນ ແລະ ພູຫີນປູນ. | (1) ວາງແຜນແລະ ແບ່ງເຂດນຳໃຊ້ດິນ ແບບມີສ່ວນຮ່ວມ-ວິທີການ NBCA .(2) ສະໜັບສະໜູນ ການຂະຫຍາຍ ແລະ ການວາງແຜນ ການພັດທະນາບ້ານ, (3) ຄຸ້ມຄອງ ແລະ ນຳໃຊ້ແບບຍືນຍົງ NTFP.(4) ຕິດຕາມປະເມີນຜົນ. |
| 3. | ຄົ້ນຄ້ວາດ້ານກະສິກຳປ່າໄມ້ກັບທີ່ ສຳລັບລະບົບ ການເຮັດກະສິກຳ ແບບຍືນຍົງຢູ່ເຂດເປີນສູງ. | NAFRI/DOF ແລະ ບ້ານເປົ້າໝາຍ PAFS/DAFS | A | ບ້ານເປົ້າໝາຍ PAFS/DAFS | 1. ເພື່ອພັດທະນາແລະສ້າງຕັ້ງ ຕົວຢ່າງ ກະສິກຳປ່າໄມ້ ຢູ່ກັບພື້ນທີ່ ສຳລັບການນຳໃຊ້ດິນແບບຍືນຍົງທີ່ເໝາະສົມພາບໄຕ້ເງື່ອນໄຂ ຂອງ ດິນຟ້າອາກາດ ແລະ ຊີວະພາບ | (1) ທວນຄືນບັນດາໂຄງການ ກ່ຽວຂ້ອງກັບກະສິກຳປ່າໄມ້ ທີ່ໄດ້ສຳເລັດ ແລະພວມປະຕິບັດຢູ່.(2) ລະບົບເຊື່ອມຕໍ່ ສຳລັບການພັດທະນາລະບົບ ກະສິກຳປ່າໄມ້ ກັບພື້ນທີ່. (3) ຕີລາຄາປະເມີນຜົນ ຜົນກະທົບດ້ານເສດຖະກິດສັງຄົມ |
| 4 | ຄົ້ນຄ້ວາການຄຸ້ມຄອງ ແບບຍືນຍົງ ແລະ ການນຳໃຊ້ | NTFP Unit / FRC/NAFRI/ MAF | A | ອຸດົມໄຊ, ສາລະວັນ, ຈຳປາສັກ. | 1. ພັດທະນາແລະສົ່ງເສີມ ການຄຸ້ມຄອງ ການເກັບກ່ຽວແບບຍືນຍົງ ແລະ ການນຳໃຊ້ NTFP | (1) ສານ NTFP, 2) ການຄຸ້ມຄອງແລະ ນຳໃຊ້ NTFP.(3) ການຄຸ້ນເຄີຍກັບ NTFP.(4) ກວດກາປະເມີນຜົນ |
| 5 | ການອະນຸລັກ ແລະ ຄຸ້ມຄອງ NTFP | NAFRI | B | ທົ່ວປະເທດ | 1. ສະໜັບສະໜູນການຜະລິດ ແບບຍືນຍົງ NTFPເປັນສິນຄ້າ.(2) ພັດທະນາຊັບພະຍາກອນມະນຸດ | 1. ຄົ້ນຄ້ວາການຄຸ້ມຄອງ NTFP ແບບຍືນຍົງ.(2) ພັດທະນາສານ NTFP.(3) ພັດທະນາແລະ ສຶກສາການນຳໃຊ້ NTFP. |
| 6 | ສາທິດການນຳໃຊ້ດິນ ແລະ ກະສິກຳປ່າໄມ້. | NAFRI/MAF | B | ເນື້ອທີ່ຖາງປ່າເຮັດໄຮ່ ທົ່ວປະເທດ | 1. ຂະຫຍາຍການສາທິດ ທາງດ້ານກະສິກຳປ່າໄມ້ ໄປເຖິງສິ່ງເຂດ ທີ່ມີການຖາງປ່າເຮັດໄຮ່. (2) ສາທິດກ່ຽວກັບລະບົບກະສິກຳປ່າໄມ້ທີ່ເໝາະສົມກັບພື້ນທີ່ ສຳລັບ ການເຮັດກະສິກຳ ປູກຝັງ, ລ້ຽງຫຍ້າ ແລະ ກະສິກຳປະສົມປະສານ. | (1) ຄົ້ນຄ້ວາ/ສູນຝຶກອົບຮົມປະຈຳທ້ອງຖິ່ນ/ເຊື່ອມຕໍ່.(2) ຝຶກອົບຮົມພະນັກງານ.(3) ອອກແບບ ແລະ ສ້າງຕັ້ງ ການສາທິດ ດ້ານກະສິກຳປ່າໄມ້ພິເສດ ຕາມເຂດພູມອາກາດ.(4) ຕິດຕາມປະເມີນຜົນ ແລະ ລາຍງານຄວາມຄືບໜ້າຂອງການສາທິດ ຂອງຜົນປະໂຫຍດຊຸມຊົນ/ ເກັບກຳຂໍ້ມູນຕ່າງໆ. |
| 7 | ເຕັກໂນໂລຊີ ແລະ ວິທີການສ້າງຕາຂ່າຍ ໃນລະບົບ ການ | SSCP/DOF MAF | B | ບ້ານເປົ້າໝາຍ | 1. ເຊື່ອມຕໍ່ຕາຂ່າຍລະຫວ່າງໂຄງການເຂດເປີນສູງ ສຳລັບການແລກປ່ຽນຂໍ້ມູນຂ່າວສານ ແລະ ປະສົບປະການທີ່ກ່ຽວ | ໜ້າວຽກແມ່ນສຳລັບການສ້າງຕາຂ່າຍຂອງຂໍ້ມູນຂ່າວສານ ການຕິດຕາມແລະປະເມີນຜົນດ້ານເສດຖະກິດສັງຄົມ ຂອງ ຂະບວນການຍຸດຕິການຖາງປ່າເຮັດໄຮ່ |

| | | | | | | |
|---|---|---|---|---|---|---|
| | ເຮັດກະສິກຳຢູ່ເຂດເປີນສູງ ແລະ ການພັດທະນາວິຊາຊີບ | | | PAFS/DAFS | ສ້ອງກັບການຍຸດຕິການຖາງປ່າເຮັດໄຮ່ ແລະ ລະບົບ ເຮັດກະສິກຳ ແບບຍືນຍົງ ກັບໂອກາດໃນການສ້າງລາຍຮັບນອກຈາກການກະສິກຳ .(2) ຕິດຕາມຄວາມຄືບໜ້າໃນການຕີລາຄາປະເມີນຜົນການຍຸດຕິການຖາງປ່າເຮັດໄຮ່ ແລະ ສະພາບເສດຖະກິດສັງຄົມຂອງຊຸມຊົນ ຢູ່ເຂດເປີນສູງ. | (1) ວາງແຜນແລະ ມອບການນຳໃຊ້ດິນ.(2)ລະບົບການເຮັດກະສິກຳ.(3)ຕົ້ນໄມ້ຢູ່ໃນຟາມ ແລະ NTFPs.(4) ຕິດຕາມ ປະເມີນຜົນດ້ານເສດຖະກິດສັງຄົມ |

## 7. ການຕະຫຼາດ

| ລ/ດ | ຊື່ໂຄງການ/ແຜນງານ | ອົງການປະຕິບັດ | ໄລຍະ | ທີ່ຕັ້ງ | ຈຸດປະສົງ | ໜ້າວຽກ |
|---|---|---|---|---|---|---|
| 1. | ະບົບການກວດກາທາງດ້ານ ອະນາໄມ ຊີ້ນ | DOL/DOA/NAFRI | B | ວຽງຈັນ, ທົ່ວປະເທດ | ສ້າງມາດຕະຖານກ່ຽວກັບ ອານາໄມອາຫານ ເພື່ອສ້າງລະບົບ ກວດກາ ອານາໄມອາຫານ | 1. ສຶກສາສະພາບປະຈຸບັນ ແລະ ຂໍ້ຈຳກັດຕ່າງໆ ຂອງບັນດາສະຖາບັນ ທີ່ເຮັດໜ້າທີ່ກວດກາອາຫານ.(2) ປັບປຸງຂໍ້ກຳນົດກົດໝາຍທີ່ກ່ຽວຂ້ອງ (3) ປັບປຸງຫ້ອງທົດລອງ ແລະ ອຸປະກອນທີ່ກ່ຽວຂ້ອງກັບການກວດກາອາຫານ. (4) ນຳໃຊ້ລະບົບ ກວດກາອາຫານ ນັບທັງການກວດກາປົກກະຕິ ແລະ ການຂຶ້ນທະບຽນ.(5) ຝຶກອົບຮົມດ້ານວິຊາການໃຫ້ແກ່ພະນັກງານກວດກາ.(6) ໃຫ້ການປຶກສາທາງດ້ານວິຊາການ ແກ່ລະບົບການກວດກາຄຸນນະພາບ ແລະ ສຸຂະອະນາໄມ ບັນດາໂຮງງານແປຮູບ |
| 2. | ໂຄງການເກັບກຳ ຂໍ້ມູນຕະຫລາດສິນຄ້າກະສິກຳ | ທີ່ວໜ່ວຍດ້ານເສດຖະກິດ ແລະ ການຕະຫລາດ DOA | A | ວຽງຈັນ ແລະ ທົ່ວປະເທດ | 1. ເພື່ອເກັບກຳ ແລະ ໃຈແຍກຂໍ້ມູນ ຕະຫລາດ ສິນຄ້າ ກ່ຽວກັບລາຄາ ແລະ ຜະລິດຕະພັນ ຕົ້ນທາງ ແລະ ປາຍທາງ ໃນຂອບຂ່າຍທີ່ໄດ້ມາດຕະຖານ.(2) ເຜີຍແຜ່ຂໍ້ມູນດ້ານຕ່ອງທາງຈຳໜ່າຍ ສຳລັບສິນຄ້າຕົ້ນຕໍ ປະລິດທີ່ມີນຂອງຕະຫລາດ ແລະ ບໍລິມາດການໄຫຼວຽນຂອງສິນຄ້າ ຈາກບ່ອນຜະລິດ ໄປຫາບ່ອນຊົມໃຊ້ (3) ສະໜອງຂໍ້ມູນ ໃຫ້ແກ່ ຂະແໜງການເຮັດທຸລະກິດ ດ້ານກະສິກຳ ກ່ຽວກັບ ລັກສະນະລະດູການຂອງການຜະລິດ ການໄຫຼວຽນຂອງຕະຫລາດ ແລະ ຂະບວນການກຳນົດລາຄາ ຕາມແຕ່ລະໄລຍະ ຂອງຮອບບຽນຜະລິດຕະພັນ . | (1) ຊ່ວຍເຫຼືອດ້ານວິຊາການ ສຳລັບການເຄື່ອນໄຫວ ແລະ ການຄົ້ນຄ້ວາ MIS ກ່ຽວກັບການຂະຫຍາຍ ຂອງ MIS ໃນຕໍ່ໜ້າ ໄປສູ່ບັນດາແຂວງ ເຮັດໃຫ້ MIS ເປັນແຜນງານລະດັບຊາດ ເພື່ອຜົນປະໂຫຍດ ຂອງ ສປປລາວ. (2) ຝຶກອົບຮົມພະນັກງານ EMU ຂັ້ນແຂວງ ແລະ ບຳລຸງຄືນຄວາມຮູ້ໃຫ້ແກ່ SMS ແລະ ພະນັກງານ EMU ຂັ້ນສູນກາງ. (3) ລາຍຈ່າຍທາງກົງ ແລະ ລາຍຈ່າຍທົ່ວໄປ (4) ສະໜອງອຸປະກອນ ໃຫ້ແກ່ການປະຕິບັດງານ MIS ນັບທັງການສະໜອງຄອມພິວເຕີ 05 ໜ່ວຍ ໂດຍໂຄງການທີ່ພວມປະຕິບັດຢູ່ ແລະ ອີກ 02 ໜ່ວຍ ສຳລັບການຂະຫຍາຍ MIS |
| 3. | ກຸ່ມຊາວກະສິກອນສຳລັບການຜະລິດກະສິກຳ (T/A) | DOA/MOCD | B | ວຽງຈັນ ແລະ ທົ່ວປະເທດ | ເພື່ອສົ່ງເສີມ ໃຫ້ຊາວນາມີອຳນາດໃນການຕໍ່ລອງສູງຂຶ້ນ | (1) ສ້າງຂໍ້ກຳນົດກົດໝາຍກ່ຽວກັບການຈັດຕັ້ງ ຊາວກະສິກອນສຳລັບການຄ້າຂາຍ (2) ກະກຽມຮ່າງກົດໝາຍແບບຢ່າງ (3) ຝຶກອົບຮົມການບໍລິຫານການຈັດຕັ້ງ ແລະ ການເງິນ (4) ສົມທົບກັບການເງິນຊົນນະບົດ ແລະ ການກໍ່ສ້າງທາງຊົນນະບົດ (5) ຝຶກອົບຮົມດ້ານວິຊາການ ແລ່ນເອກະສານ , ກວດກາຄຸນນະພາບ, ຍົກສູງ ມາດຕະຖານ ໃຫ້ແກ່ ກຸ່ມຕ່າງໆ. |
| 4. | ໂຄງການແບ່ງປະເພດ ແລະ ແບ່ງຂັ້ນຂອງຜະລິດຕະພັນກະສິກຳ | DOB ສົມທົບກັບDOA ແລະ DLF | A | ວຽງຈັນ, ແລະ ທົ່ວປະເທດ | 1. ພັດທະນາລະບົບ ຂອງການແບ່ງຂັ້ນແລະ ແບ່ງປະເພດສິນຄ້າກະສິກຳ ທີ່ຖືກຍອມຮັບຢ່າງກ້ວາງຂວາງ ຈາກຜູ້ຜະລິດ, ຜູ້ຈຳໜ່າຍ ແລະຜູ້ຊົມໃຊ້ຢູ່ພາຍໃນແລະຕ່າງປະເທດ. (2) ອຳນວຍຄວາມສະດວກໃຫ້ແກ່ ການຄ້າຂາຍ ດ້ວຍການຊອກໃຫ້ເຫັນໂອກາດການຄ້າທີ່ເຊື່ອງຊ້ອນ.(3) ຊ່ວຍເຫຼືອໃນການວາງມາດຕະຖານການຊົມສົ່ງການຫຸ້ມຫໍ່ການຮັກສາ | 1. ສຶກສາແລະ ສຳຫລວກ ນັບທັງການສຳຫຼວດເຖິງ ຄຸນລັກສະນະ ແລະ ຄຸນປະໂຫຍດຂອງຜະລິດຕະພັນຢູ່ ສປປລາວ ຕີລາຄາລະບົບແບ່ງຂັ້ນຢູ່ປະເທດໄທ ແລະ ຄວາມນິຍົມ ຂອງຜູ້ຊື້ແລະຜູ້ຊົມໃຊ້ຢູ່ປະເທດເພື່ອນບ້ານ.(2) ຄັດເລືອກສິນຄ້າທີ່ສຳຄັນ ແລະ ດຳເນີນການກວດສອບລະບົບ ການແບ່ງປະເພດ, ແບ່ງຂັ້ນ. (3) ເພີ່ມທະວີຄວາມສາມາດຂອງການຈັດຕັ້ງ ໃນ |

| | | | | | | |
|---|---|---|---|---|---|---|
| | | | | | ເປັນ ແລະ ການແປຮູບ. | ການກວດກາ ແລະ ການດຳເນີນລະບົບ. Grainge (4) ຝຶກອົບຮົມໃຫ້ແກ່ພະນັກງານທີ່ຮັບຜິດຊອບລະບົບດັ່ງກ່າວ(5) ຕິດຕາມປະເມີນຜົນລະບົບປະເພດ ແລະ ແບ່ງຂັ້ນ |
| 5. | ວາງຂອບສ່າຍທາງດ້ານ ລັດຖະບັນຍັດກົດໝາຍໂດຍອີງໃສ່ ຕະຫລາດ ແລະການຄ້າຂາຍ (T/A) | MOCT | B | ຕ່າງປະເທດ | ສະໜັບສະໜູນ ການພັດທະນາຮັບນະບົດທີ່ເນັ້ນໃສ່ຕະຫລາດ ດ້ວຍການສ້າງຕັ້ງຂອບສ່າຍ ດ້ານກົດໝາຍດ້ວຍການສ້າງນິຕິກຳກົດໝາຍ ທີ່ຕິດພັນກັບແວດລ້ອມທາງດ້ານເສດຖະກິດກະສິກຳ ໃນປະຈຸບັນ. | (1) ທົບທວນຄືນ ແລະຍົກເລີກລັດຖະບັນຍັດກົດໝາຍທີ່ຈຳກັດ ການເຄື່ອນໄຫວດ້ານເສດຖະກິດ ກະສິກຳ ທີ່ເນັ້ນໃສ່ຕະຫລາດ (2) ທົບທວນຄືນແລະຍົກເລີກບັນດາລັດຖະບັນຍັດກົດໝາຍ ທີ່ພາໃຫ້ເສຍເວລາຫລາຍຂັ້ນຕອນ ໃນການ ອະນຸຍາດ ການດຳເນີນທຸລະກິດໃໝ່ ແລະ ບໍລິສັດເອກະຊົນ. |
| 6. | ສູນເຕັກໂນໂລຊີແປຮູບກະສິກຳ ແລະ ຫ້ອງການເກັບກ່ຽວ | NAFRI/DOA | B | ວຽງຈັນ | ເພື່ອສ້າງຕັ້ງສູນເຕັກໂນໂລຊີ ສຳລັບຫຼັງເກັບກ່ຽວ ແລະ ການແປຮູບກະສິກຳ ນັບທັງການກວດກາຄຸນນະພາບ ການແປຮູບ, ການຄັດເລືອກ, ການເກັບຮັກສາ ແລະ ການຫຸ້ມຫໍ່.<br>- ເພື່ອສະໜັບສະໜູນດ້ານວິຊາການໃຫ້ແກ່ວິສາຫະກິດຂະໜາດນ້ອຍ . | 1. ສ້າງຕັ້ງສູນ ທີ່ມີວັດຖຸອຸປະກອນແລະ ເຄື່ອງມືທີ່ຈຳເປັນ.(2) ຝຶກອົບຮົມດ້ານວິຊາການໃຫ້ແກ່ພະນັກງານ (3) ຂະຫຍາຍການຝຶກອົບຮົມດ້ານວິຊາການໃຫ້ແກ່ວິສາຫະກິດຂະໜາດນ້ອຍ (4) ບໍລິການການຕີລາຄາຄຸນນະພາບ ຂອງຜະລິດຕະພັນ ດ້ານກະສິກຳ ທີ່ໄດ້ຮັບການແປຮູບ.(5) ພັດທະນາເຕັກໂນໂລຊີທີ່ເໝາະສົມສຳລັບວຽກງານຫຼັງເກັບກ່ຽວ ແລະ ການແປຮູບດ້ານກະສິກຳ ນັບທັງການກວດກາຄຸນນະພາບ, ການຄັດເລືອກ, ການຫຸ້ມຫໍ່ ແລະການເກັບຮັກສາ.(6) ເປີດການຝຶກອົບຮົມໃຫ້ແກ່ວິສາຫະກິດ ຂະໜາດນ້ອຍໃນດ້ານ ກິດຈະກຳຫຼັງເກັບກ່ຽວແລະ ການແປຮູບ ຢູ່ທີ່ສູນເຕັກໂນໂລຊີ ແລະ ຢູ່ກັບທີ່.(7) ປະສານກັບໂຄງການປ່ອຍກູ້ຂະໜາດນ້ອຍ ເພື່ອສະໜອງ ສິ່ງອຳນວຍແລະ ອຸປະກອນຕ່າງໆ ກ່ຽວກັບ ການແປຮູບກະສິກຳຫຼັງເກັບກ່ຽວ ໃຫ້ແກ່ວິສາຫະກິດຂະໜາດນ້ອຍ. |
| 7. | ສຶກສາຄວາມສາມາດບົ່ມຊ້ອນດ້ານການສົ່ງອອກ ແລະ ການສະໜອງຂາເຂົ້າ ດ້ານ ສິນຄ້າກະສິກຳ | DOA/DOP/ MOCT | A | ຕ່າງປະເທດ ແລະ ປະເທດອ້ອມຂ້າງ(ຈີນ,ໄທ, ຫວຽດນາມ, ສິງກະໂປ, ກຳປູເຈຍ, ມຽນມາ) | ເພື່ອສຶກສາໂອກາດທາງດ້ານການຕະຫລາດໃນການສົ່ງອອກ ແລະ ນຳເຂົ້າສິນຄ້າດ້ານກະສິກຳ . | (1) ທວນຄືນ ການສຶກສາການຕະຫຼາດຂອງ FAO ແລະ JICA (2) ສຶກສາເງື່ອນໄຂທາງດ້ານການຕະຫຼາດ ຜະລິດຕະພັນກະສິກຳ ຢູ່ບັນດາປະເທດເປົ້າໝາຍໂດຍແນໃສ່ປະເດັນດັ່ງຕໍ່ໄປນີ້: 1. ເງື່ອນໄຂທາງດ້ານການຕະຫລາດ ສຳລັບສິນຄ້າກະສິກຳ ຕົ້ນຕໍ. 2. ຊ່ອງທາງຈຳໜ່າຍສຳລັບສິນຄ້າກະສິກຳຕົ້ນຕໍ. 3. ຂໍ້ຈຳກັດໃນການນຳເຂົ້າ-ສົ່ງອອກ ສິນຄ້າກະສິກຳຕົ້ນຕໍ.4. ມາດຕະຖານໃນການຫຸ້ມຫໍ່ ຈັດສົ່ງ ແລະ ກັກກັນ. 5. ສະພາບດ້ານການຕະຫຼາດ ແລະ SWOTສຳລັບ ຜະລິດຕະພັນຂອງລາວ.6. ຈຸດພິເສດຂອງການຊົມໃຊ້ສິນຄ້າກະສິກຳ ຢູ່ບັນດາປະເທດເປົ້າໝາຍ.7. ຄວາມຕ້ອງການຂອງຕະຫຼາດ ,ປະເພດຂອງສິນຄ້າ ແລະ ຜູ້ສະໜອງ.8. ການນຳເຂົ້າແລະ ສົ່ງອອກ ສິນຄ້າກະສິກຳຕົ້ນຕໍ.9. ການເໜັງຕີງຂອງລາຄາຕາມລະດູການ ຂອງສິນຄ້າກະສິກຳຕົ້ນຕໍ. (3) ດຳເນີນການທົດສອບການຕະຫຼາດ |

| | | | | | | |
|---|---|---|---|---|---|---|
| | | | | | | ກ່ຽວກັບຜະລິດຕະພັນຂອງລາວທີ່ ໄດ້ກຳນົດໄວ້- ຕະຫຼາດເຊື່ອງຊ້ອນ ແລະ ວິໃຈຜົນໄດ້ຮັບ.(4) ປັບປຸງ ຄວາມສາມາດຂອງພະນັກງານລັດ ດ້ວຍການອົບຮົມວິຊາການຕະຫຼາດ (5) ແລກປ່ຽນຄຳຄິດຄຳເຫັນແລະ ຂ່າວສານດ້ວຍການ ໄປທັດສະນະສຶກສາ ຈັດສຳມະນາ ຮ່ວມກັບໂຄງການພັດທະນາ ສະຖາບັນການຈັດຕັ້ງສົ່ງເສີມຕ່າງໆ ທີ່ກ່ຽວຂ້ອງກັບການກະສິກຳ |
| 8. | ແປຮູບ ແລະ ຈຳໜ່າຍ ເຄື່ອງປ່າຂອງດົງ | DOF/DOP/ NOCP | A | ກົມຄົ້ນຄ້ວາເຄື່ອງປ່າຂອງດົງ FRC/NAFRI ແລະ 3 ສູນສົ່ງເສີມ ເຄື່ອງປ່າຂອງດົງ ຢູ່ ອຸດົມໄຊ, ສາລະວັນ, ຈຳປາສັກ | ກຳນົດເຄື່ອງປ່າຂອງດົງຕົ້ນຕໍ ແລະ ພັດທະນາຄວາມຮູ້ດ້ານການຕະຫລາດ ປັບປຸງຍຸດທະສາດ ແລະ ທິດຊີ້ນຳດ້ານການຕະຫລາດ ດຳເນີນການທົດສອບເບື້ອງຕົ້ນ ບັນດາທິດນຳ .<br>- ກຳນົດໂອກາດໃນການແປຮູບ ແນະນຳ ທິດທາງການພັດທະນາ ສຳລັບຂະແໜງການແປຮູບ . | (1) ກຳນົດເຄື່ອງປ່າຂອງດົງທີ່ເປັນເປົ້າໝາຍ ທີ່ໄດ້ຮັບຄວາມນິຍົມ (2) ກຳນົດບ່ອນທີ່ຄວາມສາມາດທາງດ້ານການແປຮູບ ແລະ ດ້ານການຕະຫລາດ ຕ້ອງການການພັດທະນາ ແລະ ການປັບປຸງ ໃຫ້ທິດຊີ້ນຳ ແລະ ຝຶກອົບຮົມແກ່ຊ່າງທັດຖະກຳຄົນລາວ. (3) ດຳເນີນການສຳຫລວດແລະ ການທົດລອງການຕະຫຼາດ ແລະ ປະເມີນ ອຸປະສັກທາງດ້ານກົດໝາຍ ແລະ ຂັ້ນຕອນຕ່າງໆ ໃຫ້ຄຳແນະນຳເພື່ອ ຜ່ານຜ່າອຸປະສັກດັ່ງກ່າວ (4) ດຳເນີນການຂະຫຍາຍຕະຫຼາດ ຢູ່ບ່ອນທີ່ ມີທ່າແຮງ .(5) ຕິດຕາມປະເມີນຜົນ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ເສດຖະກິດສັງຄົມ .(6) ກະກຽມຂໍ້ສະເໜີ ຂໍຄວາມຊ່ວຍເຫຼືອ ແລະ ກຳນົດໜ້າວຽກຕ່າງໆຂອງໂຄງການໃນຕໍ່ໜ້າ. |
| 9. | ໂຄງການພັດທະນາ ຕະຫຼາດຂາຍຍົກ | MOCT | A | ກຳແພງນະຄອນວຽງຈັນ, ຫຼວງພະບາງ ແລະ ສະວັນນະເຂດ | ສະໜອງສິ່ງອຳນວຍຄວາມສະດວກໃຫ້ແກ່ ການແລກປ່ຽນຄ້າຂາຍສິນຄ້າ ນັບທັງສິນຄ້າທີ່ ເປື່ອຍເນົ່າເປັນ ຢູ່ໃນ ລະດັບການຂາຍຍົກ ຕາມຫົວເມືອງໃຫ່ຍ 1. ສ້າງໂອກາດ ອັນດີທາງດ້ານການຕະຫຼາດໃຫ້ແກ່ຜູ້ຈຳໜ່າຍ ແລະ ຊາວກະສິກອນ . 2. ສົ່ງເສີມຜູ້ຊື້ ແລະ ຜູ້ຂາຍຢູ່ທ້ອງຖິ່ນ ເຊື່ອມຕໍ່ທາງດ້ານການສືບສົ່ງ ແລະຕະຫຼາດຕົ້ນຕໍ. 3. ຊ່ວຍໃຫ້ຂາຍໄດ້ໄວ ແລະ ຫຼຸດຜ່ອນການເສຍຫາຍ ໃນການຄ້າຂາຍສິນຄ້າ ທີ່ເປື່ອຍເນົ່າເປັນດ້ວຍການຂາຍຍົກ. | (1) ຊ່ວຍເຫຼືອດ້ານວິຊາການ ສ້າງບົດວິພາກເສດຖະກິດ ກ່ຽວກັບ ການພັດທະນາ ຕະຫຼາດຂາຍຍົກຢູ່ກຳແພງນະຄອນ, ຫຼວງພະບາງ ແລະ ສະຫວັນນະເຂດ, ອອກແບບແລະກໍ່ສ້າງ ຕະຫຼາດຂາຍຍົກ .(2) ຊ່ວຍເຫຼືອດ້ານວິຊາການເພື່ອປັບປຸງດ້ານກົດໝາຍຕະຫຼາດການຂາຍຍົກ, ການຄຸ້ມຄອງ ລະບົບຕະຫຼາດຂາຍຍົກ . (3) ຟື້ນຟູ ແລະ ກໍ່ສ້າງສິ່ງອຳນວຍຄວາມສະດວກຕ່າງໆ ຂອງຕະຫຼາດຂາຍຍົກ.(4)ຝຶກອົບຮົມໃຫ້ແກ່ພະນັກງານຕະຫຼາດຂາຍຍົກ ແລະ ພະນັກງານລັດທີ່ກ່ຽວຂ້ອງກັບຕະຫຼາດຂາຍຍົກ. |

8. ການເງິນຊົນນະບົດ

| ລ/ດ | ຊື່ໂຄງການ/ແຜນງານ | ອົງການປະຕິບັດ | ໄລຍະ | ທີ່ຕັ້ງ | ຈຸດປະສົງ | ໜ້າວຽກ |
|---|---|---|---|---|---|---|
| 1. | ຝຶກອົບຮົມຢູ່ກັບທີ່ ໃຫ້ແກ່ ພະນັກງານຂອງ SOCB ແລະ ຂະຫຍາຍສູນຝຶກອົບຮົມ | ກະຊວງການເງິນ | A | ວຽງຈັນ, ແລະ ທົ່ວປະເທດ | ສ້າງຕັ້ງລະບົບການບໍລິຫານ ແລະ ປະຕິບັດງານທີ່ມີປະສິດທິພົນຢູ່ ແຕ່ລະ SOCB<br>ສ້າງຕັ້ງລະບົບການຝຶກອົບຮົມ ໃຫ້ແກ່ພະນັກງານ SOCB | (1) ພັດທະນາໂຄງການຫຼັກສູດສຳລັບການຝຶກອົບຮົມ ແລະ ການຍົກລະດັບ (2) ຝຶກອົບຮົມຄູຝຶກ |
| 2. | ປັບປຸງປະສິດທິພາບ ຂອງການທຳງານຂອງ SOCB ແລະ ຂະຫຍາຍສາຂາທະນາຄານ | ກະຊວງການເງິນ | A | ວຽງຈັນ, ທົ່ວປະເທດ | ເພື່ອ ທົບທວນຄືນ ແລະ ຕີລາຄາຜົນງານຂອງ SOCB ພາຍຫຼັງທີ່ໄດ້ນຳໃຊ້ບັນດາມາດຕະການຕ່າງໆໃນການປັບປຸງ ລວມເຖິງ ສາຂາທະນາຄານ . | 1. ແນະນຳມາດຕະການພິເສດ ເພື່ອປັບປຸງຜົນງານໂດຍອີງໃສ່ ການປະເມີນຜົນແລະສ້າງຕັ້ງສາຂາຕ່າງໆ . |
| 3. | ນຳໃຊ້ລະບົບ ການປ້ອງການເງິນຝາກ ແລະ ຫ້ອງການຂໍ້ມູນຂ່າວສານ ສິນເຊື່ອ(TA) ສຳເລັດໃນເດືອນ ມີນາ ແລະ ເມສາ 2001 | ກະຊວງການເງິນ | S | ວຽງຈັນ | ກະຕຸກຊຸກຍູ້ເງິນຝາກ ພາຍໃນປະເທດ ໂດຍຜ່ານການປະຕິບັດງານ ອັນມີປະສິດທິຜົນຂອງບັນດາທະນາຄານ ສະໜອງຂໍ້ມູນສິນເຊື່ອຜູ້ຊົມໃຊ້ໃຫ້ແກ່ສາຂາປ່ອຍກູ້ | (1) ສ້າງຂໍ້ກຳນົດກົດໝາຍໃໝ່ ກ່ຽວກັບ ການປ້ອງກັນ ການຝາກເງິນ ແລະ ຂໍ້ມູນຂ່າວສານສິນເຊື່ອ ຜູ້ຊົມໃຊ້ |
| 4. | ສ້າງກົດໝາຍກ່ຽວກັບການເກັບກູ້ໜີ້ ແລະ ການເພີ່ມທະວີຄວາມປອດໄພ.ສ້າງພື້ນຖານດ້ານກົດໝາຍ ສຳລັບ Bills of Exchange, Promissory note ແລະ leasing (TA) ພວມດຳເນີນ | ກະຊວງການເງິນ | B | ວຽງຈັນ | ເພື່ອສົ່ງເສີມການປະຕິບັດອັນໄດ້ຮັບຜົນຂອງທະນາຄານຕ່າງໆ ແລະ ຫຼີກເວັ້ນໜີ້ເສຍ ຂອງບຸກຄົນ ແລະ ບໍລິສັດ . | (1) ສ້າງຕົວບົດກົດໝາຍກ່ຽວຂ້ອງກັບການເກັບກູ້ໜີ້ Bills of Exchange, ແລະ leasing |
| 5. | ສືບຕໍ່ແລະຂະຫຍາຍກຸ່ມສິນເຊື່ອ ແລະ ເງິນປະຫຍັດ | ກະຊວງການເງິນ | B | ວຽງຈັນ, ທົ່ວປະເທດ | ເພື່ອເພີ່ມລາຍຮັບ ແລະ ການຝາກເງິນປະຫຍັດຂອງ ປະຊາຊົນ ໂດຍຜ່ານກຸ່ມສິນເຊື່ອ ແລະ ເງິນປະຫຍັດ . | ສ້າງຕັ້ງກຸ່ມສິນເຊື່ອ ແລະເງິນປະຫຍັດ ໂດຍຜ່ານການປ່ຽນແປງຂອງ VRF |
| 6. | ພັດທະນາທ່ອງເງິນຢືມຂອງ SOCB ໃຫ້ແກ່ ການລ້ຽງສັດແລະ ການປະມົງ(ໂຄງການທົດລອງ) | SOCB | B | ວຽງຈັນ ແລະ ທົ່ວປະເທດ | ເພື່ອສ້າງໃຫ້ມີຫຼາຍແຫຼ່ງທຶນສຳລັບບໍລິສັດທີ່ເຮັດການກະສິກຳ . | ກຳນົດບູລິມະສິດສຳລັບຂະແໜງການຍ່ອຍ ແລະ ຜະລິດຕະພັນທີ່ສົມຄວນປ່ອຍກູ້ໃຫ້ . |
| 7. | ສຶກສາການບົ່ງມະຕິ ທກສ(TA) | ທະນາຄານແຫ່ງ ສປປ ລາວ | S | ວຽງຈັນ | ເພື່ອທົບທວນຄືນ ແລະ ຕີລາຄາຜົນງານຂອງ ທກສ. | ດຳເນີນສຶກສາກ່ຽວກັບ ທກສ ເພື່ອສ້າງຕັ້ງການທະນາຄານທີ່ ເຄື່ອນໄຫວໄດ້ດີກ່ວາ. |
| 8. | ສົ່ງເສີມການປ່ອຍກູ້ໃຫ້ແກ່ກຸ່ມຊາວກະສິກອນ ໂດຍ ທກສ | ທກສ | A | ວຽງຈັນ ແລະທົ່ວປະເທດ | ເພື່ອສົ່ງເສີມການຜະລິດຂອງຊາວກະສິກອນ ໃຫ້ກາຍເປັນສິນຄ້າ. | ເພີ່ມຄວາມອາດສາມາດໃນການສຳລະໜີ້ຂອງກຸ່ມຊາວກະສິກອນ . |
| 9. | ຈັດຕັ້ງຄືນ ທກສ ໂດຍອີງໃສ່ ຄຳແນະນຳ ທີ່ໄດ້ຮັບຈາກການສຶກສາບົ່ງມະຕິ | ກະຊວງການເງິນ | A | ວຽງຈັນ | ເພື່ອປະຕິບັດຕາມການສຶກສາບົ່ງມະຕິ ທກສ . | 1. ກວດຄືນໂຄງປະກອບທາງດ້ານການຈັດຕັ້ງ. 2. ພິຈາລະນາຄືນນະໂຍບາຍໃຫ້ກູ້ຢືມ .3. ພິຈາລະນາຄືນການຖືບັນຊີ.4. ພິຈາລະນາຄືນນະໂຍບາຍ ເງິນຝາກ . |
| 10 | ຂະຫຍາຍ SOCB ໃນດ້ານສາຂາທະນາຄານ , ລະດົມເງິນຝາກ ແລະ ສິນເຊື່ອ ເຄື່ອນທີ່ | SOCB | B | ວຽງຈັນ ແລະ ທົ່ວປະເທດ | ເພື່ອເຂົ້າໄປເຖິງຜູ້ກູ້ຢືມ ຢູ່ເຂດຊອກຫຼີກຫ່າງໄກ. | ‘ລະບົບພະນັກງານສິນເຊື່ອ ເຄື່ອນທີ່, ສ້າງສາຂາແຫ່ງໃໝ່ ແລະ ເພີ່ມທະວີປ່ອຍກູ້ແລະເງິນຝາກປະຫຍັດ . |

| | | | | | | |
|---|---|---|---|---|---|---|
| 11 | ສົ່ງເສີມ ແລະ ຂະຫຍາຍ ກິດຈະກຳ ຂອງ ສູນຝຶກ ການເງິນຈຸລະພາກ UNDP, CDF ໄປທົ່ວທຸກ ແຂວງ | ກະຊວງການເງິນ | A | ວຽງຈັນທົ່ວປະເທດ | ສ້າງຕັ້ງລະບົບຊ່ວຍໜູນ ສຳລັບຊາວກະສິກອນ ໃນດ້ານການເງິນຊົນນະບົດ ການສົ່ງສິນເຊື່ອ ແລະ ການລະດົມເງິນຝາກ. | ຝຶກອົບຮົມສະມາຊິກ ຂອງ VRF ກຸ່ມ ເງິນຝາກ ແລະ ສິນເຊື່ອ ແລະ NGO |
| 12. | ຂະຫຍາຍ SOCB ກ່ຽວກັບສິນເຊື່ອໃຫ້ຊາວກະສິກອນ ແລະ ຜູ້ປະກອບທຸລະກິດກະສິກຳ | SOCB | B | ວຽງຈັນ ແລະ ທົ່ວປະເທດ | ເພື່ອສ້າງໃຫ້ມີຫຼາຍແຫຼ່ງທຶນ ສຳລັບ ຊາວກະສິກອນຢູ່ຊົນນະບົດ ແລະ ບັນດາວິສາຫະກິດ ເພື່ອ ເຮັດໃຫ້ເສດຖະກິດທ້ອງຖິ່ນຂະຫຍາຍຕົວ. | ເພີ່ມທະວີກິດຈະກຳ ຂອງ MCO ແລະ ສາຂາຕ່າງໆ ໂດຍຜ່ານການສົ່ງເງິນກູ້ ແລະ ການລະດົມເງິນຝາກ . . |
| 13 | ຂະຫຍາຍກຸ່ມສິນເຊື່ອ ແລະເງິນຝາກປະຫຍັດ ການເງິນຈຸລະພາກ Financial Deepening and Conversions ຂອງ VRF ໄປສູ່ກຸ່ມເງິນຝາກ ແລະ ສິນເຊື່ອ | ກະຊວງການເງິນ | B | ວຽງຈັນແລະ ທົ່ວປະເທດ | ເພື່ອປ່ຽນການເງິນນອກລະບົບ ໃຫ້ເປັນການເງິນໃນສະຖາບັນ. | ຝຶກອົບຮົມກ່ຽວກັບເງິນກູ້ ແລະ ສິນເຊື່ອການຈັດຕັ້ງກຸ່ມ TA ກ່ຽວກັບ ການປ່ຽນເປັນກຸ່ມ ເງິນຝາກ ປະຫຍັດ ແລະ ສິນເຊື່ອ |

9. ການພັດທະນາຊົນນະບົດ

| ລ/ດ | ຊື່ໂຄງການ/ແຜນງານ | ອົງການປະຕິບັດ | ໄລຍະ | ທີ່ຕັ້ງ | ຈຸດປະສົງ | ໜ້າວຽກ |
|---|---|---|---|---|---|---|
| 1. | ຂໍລິເລີ່ມການພັດທະນາກະສິກຳທີ່ບ້ານນຳພາຢູ່ເຂດຊົນນະບົດຫ່າງໄກ ໄລຍະ 1 ປະກອບດ້ວຍ 3 ໂຄງການຍ່ອຍ | PAFS/DAFO ຢູ່ໃນແຕ່ລະແຂວງ ແລະ ອົງການກ່ຽວຂ້ອງ | A | ທົ່ວປະເທດ | (1.) ສົ່ງເສີມກະສິກຳ ເປັນສິນຄ້າ ຢູ່ເຂດ ຊົນນະບົດຫ່າງໄກ ໂດຍແມ່ນຂໍລິເລີ່ມຂອງບ້ານ.(2) ຍົກມາດຕະຖານຊີວິດການເປັນຢູ່ ຫຼຸດຜ່ອນຄວາມທຸກຍາກຢູ່ບັນດາບ້ານທີ່ສອກຫຼີກຫ່າງໄກ ດ້ວຍການພັດທະນາການກະສິກຳ . | (1) ຊ່ວຍເຫຼືອດ້ານວິຊາການ ໃຫ້ແກ່ການສຶກສາການພັດທະນາ ການສຳຫລວດແບບມີສ່ວນຮ່ວມ ຊຶ່ງຈະນຳໄປເຖິງ ການເກີດມີ ຂໍລິເລີ່ມ ດ້ານແຜນການພັດທະນາກະສິກຳຂອງບ້ານ (2) ຊ່ວຍເຫຼືອທາງດ້ານວິຊາການໃຫ້ແກ່ການປະຕິບັດໂຄງການ.(3) ສ້າງໂຄງລ່າງພື້ນຖານຊົນນະບົດ ລວມທັງຖະໜົນຊົນນະບົດ ຟື້ນຟູຊົນລະປະທານ ພື້ນຖານໂຄງລ່າງດ້ານການຕະຫລາດ ໄຟຟ້າຊົນນະບົດ ແລະ ລະບົບນ້ຳປະປາ.(4) ບໍລິການສົ່ງເສີມກະສິກຳ ລວມມີ: ຝຶກອົບຮົມພະນັກງານຂອງ PAFS/DAFO ສ້າງແປງສາທິດ ແລະ ໂຮງຮຽນສຳລັບຊາວກະສິກອນຢູ່ກັບທີ່ ...(5) ສະໜອງທຶນເຂົ້າໃນການປະຕິບັດໂຄງການຂະໜາດນ້ອຍ ຂອງບ້ານ.(6) ລາຍການໃຊ້ຈ່າຍໂດຍກົງ ແລະທົ່ວໄປ .(7) ສະໜອງພາຫະນະ ເປັນຕົ້ນແມ່ນ ລົດຈັກ, ຄອມພິວເຕີ ໃຫ້ແກ່ການບໍລິການສົ່ງເສີມ. |
| (1) | ຢູ່ ຈຳປາສັກ, ອັດຕະປື, ສາລະວັນ ແລະ ເຊກອງ: 100ບ້ານ | | | | | |
| (2) | ຢູ່ຄຳມ່ວນ, ສະຫວັນນະເຂດ : 100 ບ້ານ | | | | | |
| (3) | ຢູ່ກຳແພງນະຄອນວຽງຈັນ, ບໍລິຄຳໄຊ: 100 ບ້ານ | | | | | |
| 2. | ຂໍລິເລີ່ມການພັດທະນາກະສິກຳທີ່ບ້ານນຳພາຢູ່ເຂດຊົນນະບົດຫ່າງໄກ ໄລຍະ 2 | PAFS/DAFO ຢູ່ໃນແຕ່ລະແຂວງ ແລະ ອົງການກ່ຽວຂ້ອງ | B | ທົ່ວປະເທດ | (1.) ສົ່ງເສີມກະສິກຳ ເປັນສິນຄ້າ ຢູ່ເຂດ ຊົນນະບົດຫ່າງໄກ ໂດຍແມ່ນຂໍລິເລີ່ມຂອງບ້ານ.(2) ຍົກມາດຕະຖານຊີວິດການເປັນຢູ່ ຫຼຸດຜ່ອນຄວາມທຸກຍາກຢູ່ບັນດາບ້ານທີ່ສອກຫຼີກຫ່າງໄກ ດ້ວຍການພັດທະນາການກະສິກຳ . | ຄືກັນກັບໄລຍະ 1 |
| (1) | ຢູ່ໄຊສົມບູນ, ຊຽງຂວາງ 100ບ້ານ | | | | | |
| (2) | ຢູ່ໄຊຍະບູລີ, ຫຼວງພະບາງ ,ຫົວພັນ 100 ບ້ານ | | | | | |
| (3) | ຢູ່ອຸດົມໄຊ, ບໍ່ແກ້ວ, ຫຼວງນ້ຳທາ, ຜົ້ງສາລີ. | | | | | |
| 3. | ໂຄງການກະສິກຳຮອບດ້ານ ແລະ ພັດທະນາຊົນນະບົດ ຢູ່ພູພຽງບໍລະເວນ. | ຈຳປາສັກ, ສາລະວັນ, ເຊກອງ PAFS ສູນຄົ້ນຄ້ວາກາເຟບ້ານອີຕູ້ NAFRI/DAFO | A | ພູພຽງບໍລິເວນ ທີ່ກວມເອົາ ແຂວງຈຳປາສັກ , ສາລະວັນ, ເຊກອງ. | ເພີ່ມທະວີຊາອອກ ດ້ານກະສິກຳ ດ້ວຍການປັບປຸງ ແລະ ພັດທະນາທົນທາງ ຊົນລະປະທານ ລະບົບສົ່ງນ້ຳ ແລະ ໂຄງລ່າງອື່ນໆ ພ້ອມກັບການບໍລິການ ຜູ້ໜູນວຽກງານກະສິກຳທີ່ເໝາະສົມ | (1) ຊ່ວຍເຫຼືອທາງດ້ານວິຊາການໃຫ້ແກ່ການອອກແບບແລະ ການກໍ່ສ້າງ (2) ຊ່ວຍເຫຼືອດ້ານວິຊາການສຳລັບ ການບໍລິຫານ NAFRI, ພັດທະນາກະສິກຳ ເຊັ່ນການສົ່ງເສີມ , ການຄຸ້ມຄອງນ້ຳ, ການຄຸ້ມຄອງການຕະຫຼາດ ແລະ ການກວດກາປະເມີນຜົນ(3) ຟື້ນຟູທະໜົນທີ່ເຊື່ອມຕໍ່ກັບຕະຫຼາດ (4) ສ້ສ້າງ ຟາມສາທິດ ແລະ ຫ້ອງການສາຂາຂອງ NAFRI (5) ສ້າງລະບົບຊົນລະປະທານ ແລະ ລະບາຍນ້ຳ, (6) ສ້າງໂຄງລ່າງພື້ນຖານດ້ານສັງຄົມ . |
| 4. | ແຜນງານພັດທະນາຊົນນະບົດຮອບດ້ານ ຢູ່ກັບທີ່ ໄລຍະ 1. | RDC/RDO ຢູ່ໃນແຕ່ລະແຂວ ແລະ SPC/LCRD | A | ທົ່ວປະເທດ ລວມມີ 1500 ບ້ານ. | ເພື່ອແກ້ໄຂຄວາມຫຍຸ້ງຍາກຢູ່ຊົນນະບົດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນຢູ່ຊົນນະບົດ ດ້ວຍການປັບປຸງພັດທະນາໂຄງລ່າງພືນຖານ ແລະ ສິ່ງອຳນວຍຄວາມສະດວກຢູ່ຊົນນະບົດ | (1) ໃຫ້ການປຶກສາ ສຳລັບການຝຶກອົບຮົມ ພະນັກງານສູນກາງ ແລະ ທ້ອງຖິ່ນ ເພື່ອຊ່ວຍເຫຼືອໃນການວາງແຜນພັດທະນາ ອອກແບບ ຄຸ້ມຄອງການກໍ່ສ້າງ ແລະ ຕິດຕາມປະເມີນຜົນ.(2) ຝຶກອົບຮົມການດຳເນີນການສຳຫຼວດແບບມີສ່ວນຮ່ວມ , ການວາງແຜນແລະ ປະຕິບັດໂຄງການ ການຕິດຕາມແລະ ປະເມີນຜົນ ໃຫ້ແກ່ພະນັກງານຢູ່ CLCRD, PLCRD/PRDO ແລະ ຢູ່ຫ້ອງການຂອງເມືອງທີ່ກ່ຽວຂ້ອງ .(3) ສະໜອງພາຫະນະ(ລົດຈັກ) ສຳລັບວຽກສະໜາມ ຂອງພະນັກງານຢູ່ PRCD/PRDO ແລະ ຫ້ອງການຢູ່ເມືອງທີ່ກ່ຽວຂ້ອງ.(4) ຄ່າໃຊ້ຈ່າຍໃນການເດີນທາງ ຢູ່ພາຍໃນປະເທດສຳລັບ ພະນັກງານ ແລະ ທີ່ປຶກສາCLCRD.(5) ຊ່ວຍເຫຼືອທາງດ້ານການເງິນ ສຳລັບພະນັກງານທີ່ ລົງສະໜາມ ຢູ່ CLCRD.PLCRD,PRDO ແລະ ຫ້ອງການຂອງເມືອງກ່ຽວຂ້ອງ. |
| 5. | ແຜນງານພັດທະນາຊົນນະບົດຮອບດ້ານ ຢູ່ກັບທີ່ ໄລຍະ 2. | RDC/RDO ຢູ່ໃນແຕ່ລະແຂວ ແລະ SPC/LCRD | B | ທົ່ວປະເທດ ລວມມີ 1500 ບ້ານ. | ເພື່ອແກ້ໄຂຄວາມຫຍຸ້ງຍາກຢູ່ຊົນນະບົດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນຢູ່ຊົນນະບົດ ດ້ວຍການປັບປຸງພັດທະນາໂຄງລ່າງພືນຖານ ແລະ ສິ່ງອຳນວຍຄວາມສະດວກຢູ່ຊົນນະບົດ | ຄືກັນກັບໄລຍະທີ່ 1 ແຕ່ວ່າໄລຍະ 2 ນີ້ຈະດຳເນີນໂດຍ ລັດຖະບານ ໂດຍອາໃສງົບປະມານຂອງລັດຖະບານເອງ ແລະ ນຳໃຊ້ພະນັກງານທີ່ໄດ້ຮັບການຝຶກອົບຮົມຢູ່ໃນໄລຍະທີ່ 1. |

## 10.ຊົນລະປະທານ

| ລ/ດ | ຊື່ໂຄງການ/ແຜນງານ | ອົງການປະຕິບັດ | ໄລຍະ | ທີ່ຕັ້ງ | ຈຸດປະສົງ | ໜ້າວຽກ |
|---|---|---|---|---|---|---|
| 1. | ໂຄງການສະແໜງຊົນລະປະທານທີ່ຊຸມຊົນເປັນຜູ້ຄຸ້ມຄອງ | DOI/MAF | A | ພາກເໜືອດັ່ງນີ້: ຫຼວງພະບາງ, ໄຊຍະບູລີ, ຜົ້ງສາລີ, ບໍ່ແກ້ວ, ຫຼວງນ້ຳທາ, ອຸດົມໄຊ | 1. ເພີ່ມທະວີ ການຜະລິດ ທາງດ້ານກະສິກຳ ບົນພື້ນຖານການຜະລິດ ແບບຍືນຍົງ . 2. ເພີ່ມທະວີຄວາມຮັບປະກັນທາງດ້ານສະບຽງອາຫານ ແລະ ລາຍຮັບ.3. ປັບປຸງອ່າງໂຕ່ງນ້ຳດ້ວຍການຫຼຸດຜ່ອນການຖາງປ່າເຮັດໄຮ່ ສົ່ງເສີມການປູກໄມ້ ຢູ່ເຂດຊົນນະບົດ ພາກເໜືອ ໂດຍຜ່ານການມອບໝາຍການຄຸ້ມຄອງ ຊົນລະປະທານ | (1) ຄັດເລືອກໂຄງການບູລິມະສິດ ສຳລັບບັນດາແຂວງ (2) ລະດົມຊຸມຊົນປະກອບສ່ວນເຂົ້າໃນກິດຈະກຳ ຂອງໂຄງການ(3) ຟື້ນຟູ ແລະ ຂະຫຍາຍຊົນລະປະທານ ທີ່ຊຸມຊົນຄຸ້ມຄອງ (4) ສ້າງໂຄງລ່າງ ຢູ່ຊົນນະບົດ ນັບທັງນ້ຳປະປາຢູ່ຊົນນະບົດ ທາງຮ່ອມຂອງເມືອງ (5) ຊ່ວຍເຫຼືອທາງດ້ານການຈັດຕັ້ງ ແລະ ການເງິນ ນັບທັງ ສ້າງຕັ້ງ ກອງທຶນພັດທະນາບ້ານ ສຳລັບພັດທະນາ ຊົນລະປະທານທີ່ຊຸມຊົນຄຸ້ມຄອງ. (6) ສະໜັບສະໜູນບັນດາກິດຈະກຳທີ່ສ້າງລາຍຮັບອື່ນໆ |
| 2. | ໂຄງການພັດທະນາແລະ ບໍລິຫານຊົນລະປະທານແບ່ງຂັ້ນຄຸ້ມຄອງ (ເງິນຂອງADB ແລະ ຝຣັ່ງ) | DOI/MAF | S | ບໍລິຄຳໄຊ, ກຳແພງນະຄອນວຽງຈັນ, ແຂວງວຽງຈັນ, ສະຫວັນນະເຂດ, ຫຼວງພະບາງ , ໄຊຍະບູລີ | ເພື່ອອຳນວຍຄວາມສະດວກ ໃຫ້ ແກ່ການມອບຊົນລະປະທານໃຫ້ຊາວກະສິກອນຢ່າງຂາດຕົວເປັນການທົດລອງ | (1) ຊ່ວຍເຫຼືອຜູ້ຊົມໃຊ້ໂດຍຜ່ານ WUA ເພື່ອຈັດຕັ້ງພວກເຂົາເຈົ້າປະກອບສ່ວນເຂົ້າໃນການຟື້ນຟູ OM ລະບົບຊົນລະປະທານ.(2) ສະໜອງການບໍລິການສົ່ງເສີມທີ່ເໝາະສົມໃຫ້ແກ່ຊາວກະສິກອນ (3) ຮ່ວມກັບ WUA ຟື້ນຟູຊົນລະປະທານທີ່ມີ (4) ເພີ່ມທະວີຄວາມສາມາດຂອງ PAFS/DAFO. (5) ສົ່ງເສີມຫົວຄິດລິເລີ່ມຂອງເພດຍິງ ໃນໂຄງການພັດທະນາ.(6) ສະໜັບສະໜູນບາດກ້າວ VDF ເພື່ອທົດແທນທຶນຄືນ |
| 3. | ໂຄງການພັດທະນາກະສິກຳ (ທຶນຂອງ WB) | DOP/MAF | S | ຈຳປາສັກ, ຄຳມ່ວນ, ສາລະວັນ, ອັດຕະປື | 1. ເພີ່ມທະວີປະສິດທິຜົນ ທາງດ້ານກະສິກຳ ແລະ ສົ່ງເສີມການປູກພືດຫຼາຍຊະນິດ ເຮັດແນວນັ້ນເພື່ອ ເພີ່ມທະວີການຜະລິດທາງດ້ານກະສິກຳ ໂດຍລວມ.2. ແນໃສ່ຊາວກະສິກອນທີ່ມີລາຍຮັບຕ່ຳ ທັງນີ້ກໍ່ເພື່ອຮັບປະກັນ ອາຫານການກິນ ໃຫ້ແກ່ ຜູ້ມີລາຍໄດ້ຕ່ຳ ແລະ ເພີ່ມລາຍຮັບຢູ່ຊົນນະບົດ ຂັ້ນຢ່າງ ຍືນຍົງ. | (1) ຟື້ນຟູສິ່ງອຳນວຍຕ່າງໆທາງດ້ານຊົນລະປະທານ.(2) ສ້າງ ແລະ ຟື້ນຟູເສັ້ນທາງໄປເຖິງບ້ານ. (3) ສ້າງນ້ຳປະປາຂອງບ້ານ .(4) ສ້າງກອງທຶນ ສຳລັບການລົງທຶນຂອງບ້ານ.(5)ເພີ່ມທະວີການບໍລິການດ້ານກະສິກຳ ເພື່ອເຮັດໃຫ້ການຈັດຕັ້ງເຂັ້ມແຂງ, (6) ສະໜັບສະໜູນການປະຕິບັດຕາມໂຄງການ. |
| 4. | AT ກ່ຽວກັບການເລັ່ງການໂອນການຄຸ້ມຄອງຊົນລະປະທານ | DOI/MAF | A | ທົ່ວປະເທດ | 1. ສ້າງຖານຂໍ້ມູນກ່ຽວກັບລະບົບ ຊົນລະປະທານທີ່ມີຢູ່ . 2. ສ້າງພື້ນຖານຂໍ້ມູນ ກ່ຽວກັບທ່າແຮງບົ່ມຊ້ອນ ຂອງລະບົບຊົນລະປະທານ ທີ່ຊຸມ ຊົນເປັນຜູ້ຄຸ້ມຄອງ.3 . ສະໜອງຂໍ້ມູນຂ່າວສານທີ່ຈຳເປັນ ແລະ ຄຳແນະນຳຕ່າງໆເພື່ອເລັ່ງລັດ ແລະ ສະໜັບສະໜູນຂະບວນການ ມອບໂອນ ການຄຸ້ມຄອງຊົນລະປະທານ. | (1) ເກັບກຳລະບົບຊົນລະປະທານທີ່ມີແລ້ວ ເປັນຕົ້ນແມ່ນເງື່ອນໄຂ ຊັບພະຍາກອນທຳມະຊາດ ແລະ ມະນຸດ , ຂໍ້ຫຍຸ້ງຍາກ ແລະ ຄວາມຕ້ອງການໃນການປັບປຸງການຜະລິດກະສິກຳ ເນື້ອທີ່ຊົນລະປະທານ ສະພາບສິ່ງອຳນວຍຄວາມສະດວກ ກິດຈະກຳຂອງການຈັດຕັ້ງຊາວກະສິກອນ ຄວາມຕ້ອງການ ແລະ ມູນຄ່າໃນການຟື້ນຟູ ແລະ ຂໍ້ມູນທີ່ຈຳເປັນ.(2) ເກັບກຳທ່າແຮງບົ່ມຊ້ອນຂອງລະບົບຊົນລະປະທານ ທີ່ຊຸມຊົນຄຸ້ມຄອງ ເປັນຕົ້ນແມ່ນເງື່ອນໄຂ ຊັບພະຍາກອນທຳມະຊາດ ແລະ ມະນຸດ , ຂໍ້ຫຍຸ້ງຍາກ ແລະ ຄວາມຕ້ອງການໃນການປັບປຸງການຜະລິດກະສິກຳ ເນື້ອທີ່ຊົນລະປະທານ ສະພາບສິ່ງອຳນວຍຄວາມສະດວກ ກິດຈະກຳຂອງການຈັດຕັ້ງຊາວກະສິກອນ ຄວາມຕ້ອງການ ແລະ ມູນຄ່າໃນການຟື້ນຟູ ແລະ ຂໍ້ມູນທີ່ຈຳເປັນ. (3) ທົບທວນຄືນ ແລະ ແນະນຳສຳລັບລະບົບ ການຄຸ້ມຄອງ ນັບທັງ ການປັບປຸງ OM, ຄວາມສາມາດຂອງການກໍ່ສ້າງຂອງ WUA, ໃຫ້ການສຶກສາແລະຝຶກອົບຮົມແກ່ສະມາຊິກ WUA ຂະບວນການມອບໂອນການຄຸ້ມຄອງຊົນລະປະທານ ແລະ ການບໍລິຫານ VDF...(4) ໃຫ້ບູລິມະສິດແກ່ລະບົບ ທີ່ມີຢູ່ ເພື່ອຟື້ນຟູ ແລະ ປັບປຸງ ແລະ ພັດທະນາ ລະບົບ ທີ່ເປັນທ່າແຮງເຊື່ອງຊ້ອນ ກະກຽມແຜນງານ ສຳລັບໄລຍະສັ້ນ -ກາງ-ຍາວ . |
| 5. | ໂຄງການຊົນລະປະທານ ຂະໜາດນ້ອຍທີ່ຊຸມຊົນເປັນຜູ້ຄຸ້ມຄອງ | DOI/MAF | A | ທົ່ວປະເທດ | 1. ເພີ່ມທະວີປະສິດທິຜົນ ທາງດ້ານກະສິກຳ ແລະ ສົ່ງເສີມການປູກພືດຫຼາຍຊະນິດ ເຮັດແນວນັ້ນເພື່ອ ເພີ່ມທະວີການຜະລິດທາງດ້ານກະສິກຳ ໂດຍລວມ.2. ເພີ່ມທະວີການຮັບປະກັນ ອາຫານ ແລະ ລາຍຮັບ .3. ປັບປຸງອ່າງໂຕ່ງນ້ຳ | (1) ຊ່ວຍເຫຼືອຜູ້ຊົມໃຊ້ໂດຍຜ່ານ WUA ເພື່ອຈັດຕັ້ງພວກເຂົາເຈົ້າປະກອບສ່ວນເຂົ້າໃນການຟື້ນຟູ OM ລະບົບຊົນລະປະທານ.(2) ສະໜອງການບໍລິການສົ່ງເສີມທີ່ເໝາະສົມໃຫ້ແກ່ຊາວກະສິກອນ (3) ຮ່ວມກັບ WUA ຟື້ນຟູຊົນລະປະທານທີ່ມີ (4) ສ້າງລະບົບຊົນລະປະທານໃໝ່ ບົນ |

| | | | | | | |
|---|---|---|---|---|---|---|
| | | | | | ດ້ວຍການຫຼຸດຜ່ອນການຖາງປ່າເຮັດໄຮ່ ສົ່ງເສີມການປູກໄມ້ ແລະ ບໍລິຫານໃນເຂດພູດອຍ. | ພື້ນຖານການປະກອບສ່ວນຂອງຊຸມຊົນ (5) ດຳເນີນການໂອນມອບການຄຸ້ມຄອງຊົນລະປະທານ.(6) ເພີ່ມທະວີຄວາມສາມາດຂອງ DFAS/DAFO.(7) ສົ່ງເສີມທິວຄິດ ລິເລີ່ມຂອງແມ່ຍິງຕ້ອງມີການພັດທະນາຢ່າງເປັນລະບົບ. (8) ສະໜັບສະໜູນ VDF ເພື່ອທົດແທນທຶນຄືນ . |
| 6. | TAກ່ຽວກັບການພັດທະນາຊັບພະຍາກອນນ້ຳ ຢູ່ພາກເໜືອ ແລະ ພາກກາງ | DOI/MAF | B | ພາກເໜືອ ແລະ ພາກກາງ | ຊອກຫາທາງອອກທາງດ້ານວິຊາການ ແລະ ຂະບວນການລົງທຶນ ເພື່ອເຮັດໃຫ້ການກະສິກຳ ຊົນນະບົດ ແລະ ຂະແໜງການອື່ນໆ ຢູ່ພາກເໜືອ ແລະ ພາກກາງ ໝັ້ນທ່ຽງ ຮັບປະກັນໃຫ້ບັນດາແຂວງ ມີອາຫານຢ່າງພຽງພໍ ແລະ ໃນບາງເຂດ ໃຫ້ມີສ່ວນເຫຼືອ. | (1) ສຶກສາ ຊັບພະຍາກອນນ້ຳ ຊົນລະປະທານ, ຊັບພະຍາກອນນ້ຳໃຊ້ທົ່ວໄປ, ການຄຸ້ມຄອງນ້ຳຖ້ວມ ແລະ ສິ່ງແວດລ້ອມຢູ່ເຂດພາກເໜືອ ແລະ ພາກກາງ.(2) ໃຫ້ບູລິມະສິດແກ່ໂຄງການ ແລະ ກະກຽມ ຕາຕະລາງເວລາລົງມືປະຕິບັດ. |
| 7. | TA ສຳລັບການນຳໃຊ້ຊົນລະປະທານ ຢ່າງໄດ້ຜົນທີ່ສຸດ ຢູ່ໃນເຂດ ແຫຼ່ງນ້ຳ ສຳລັບໂຄງການພັດທະນາກະສິກຳແບບຫຼາກຫຼາຍ. | DOI/MAF | B | ທົ່ວປະເທດ | 1. ເພີ່ມທະວີປະສິດທິຜົນ ທາງດ້ານກະສິກຳ ແລະ ສົ່ງເສີມການປູກພືດຫຼາຍຊະນິດ ເຮັດແນວນັ້ນເພື່ອ ເພີ່ມທະວີການຜະລິດທາງດ້ານກະສິກຳ ໂດຍລວມ.(2) ເພີ່ມທະວີການຮັບປະກັນສະບຽງອາຫານ ແລະ ລາຍຮັບດ້ວຍລະບົບກະເສດສຸມ . | (1) ສຶກສາການພັດທະລະບົບຊົນລະປະທານ ຂະໜາດກາງ ແລະ ຂະໜາດໃຫ່ຍ ດ້ວຍການຮ່ວມມືຂອງຊຸມຊົນ ໂດຍຜ່ານໂຄງການພັດທະນາການນຳໃຊ້ ນ້ຳ ຢ່າງໄດ້ຮັບຜົນດີທີ່ສຸດເຊັ່ນວ່າ: ໄຟຟ້ານ້ຳຕົກ, ນ້ຳປະປາ, ການຄວບຄຸມນ້ຳຖ້ວມ...(2) ສຶກສາການກໍ່ສ້າງ ສິ່ງອຳນວຍຕ່າງໆ ເພື່ອຕ້ານນ້ຳຖ້ວມ ສຳລັບການນຳໃຊ້ ເຂດນ້ຳຖ້ວມແບບຍືນຍົງ.(3) ທວນຄືນແລະແນະນຳລະບົບການບໍລິຫານມັບທັງ ການປັບປຸງ OM ການເພີ່ມຄວາມສາມາດໃຫ້ WUA ໃຫ້ການສຶກສາແລະ ຝຶກອົບຮົມແກ່ສະມາຊິກ WUA ຂະບວນການມອບໂອນ ການຄຸ້ມຄອງຊົນລະປະທານແລະ ການຄຸ້ມຄອງ VDF ...(4) ສຶກສາເພື່ອສະໜອງ ການບໍລິການສົ່ງເສີມ ທີ່ເໝາະສົມສຳລັບຊາວນາ .(5) ສຶກສາການເພີ່ມຄວາມສາມາດຂອງ PAFS/DAFO . |
| 8. | ຊົມໃຊ້ຊັບພະຍາກອນນ້ຳ ຊົນລະປະທານຢ່າງໄດ້ຮັບຜົນດີທີ່ສຸດສຳລັບໂຄງການພັດທະນາກະສິກຳ ແບບຫຼາຍຫຼາກ. | DOI/MAF | B | ທົ່ວປະເທດ | 1. ເພີ່ມທະວີປະສິດທິຜົນ ທາງດ້ານກະສິກຳ ແລະ ສົ່ງເສີມການປູກພືດຫຼາຍຊະນິດ ເຮັດແນວນັ້ນເພື່ອ ເພີ່ມທະວີການຜະລິດທາງດ້ານກະສິກຳ ໂດຍລວມ.(2) ເພີ່ມທະວີການຮັບປະກັນສະບຽງອາຫານ ແລະ ລາຍຮັບດ້ວຍລະບົບກະເສດສຸມ . | (1) ຟື້ນຟູ ແລະກໍ່ສ້າງຊົນລະປະທານຂະໜາດກາງ ແລະ ຂະໜາດໃຫຍ່ ຮ່ວມກັບຊຸມຊົນ .(2) ສະໜອງແລະ ກໍ່ສ້າງສິ່ງອຳນວຍຄວາມສະດວກຕ່າງໆ ໃນການຕ້ານນ້ຳຖ້ວມເພື່ອ ນຳໃຊ້ຢ່າງຍືນຍົງ ເຂດ ດິນນ້ຳຖ້ວມ.(3) ຟື້ນຟູຊົນລະປະທານທີ່ມີຢູ່ ຮ່ວມກັບ WUA (4) ດຳເນີນການມອບໂອນການຄຸ້ມຄອງຊົນລະປະທານ.(5) ສະໜອງການບໍລິການທີ່ເໝາະສົມໃຫ້ຊາວນາ .(6) ເພີ່ມທະວີຄວາມສາມາດໃຫ້ PAFS/DAFO.(7) ສະໜັບສະໜູນຂໍລິເລີ່ມຂອງເພດຍິງ ໃນໂຄງການພັດທະນາ .(8) ສະໜັບສະໜູນການບໍລິຫານ VDF ເພື່ອ ການຄຸ້ມຄອງໂຄງການທີ່ຍືນຍົງ. |
| 9. | ການພັດທະນາແລະຄຸ້ມຄອງຊົນລະປະທານນ້ຳໜ້າດິນ | DOI/MAF | B | ທົ່ວປະເທດ | ສົ່ງເສີມພືດສິນຄ້າທີ່ມີຄຸນຄ່າສູງດ້ວຍການນຳໃຊ້ ຊັບພະຍາກອນນ້ຳ ໜ້າດິນ . | (1) ສຳຫຼວດ ທ່າແຮງທາງດ້ານນ້ຳໜ້າດິນ (2) ສ້າງລະບົບຊົນລະປະທານນ້ຳໜ້າດິນທົດລອງ (3) ເຊື່ອມຕໍ່ຊົນລະປະທານນ້ຳໜ້າດິນ ກັບແຜນງານຊົນນະບົດ |
| 10 | ຮ່ວມມືທາງດ້ານວິຊາການສຳລັບສູນວິສະວະກຳຊົນລະປະທານ ພືດເຂດເນີນສູງ | DOI/MAF | B | ພາກໃຕ້ | ຂະຫຍາຍການຈັດຕັ້ງ ຄົ້ນຄວ້າສຳລັບ ພືດ ຊົນລະປະທານເຂດເນີນສູງ | (1) ກໍ່ສ້າງສູນ ວິສະວະກຳຊົນລະປະທານພືດເຂດເນີນສູງ ແລະ ເຂດ ຕົວແບບ (2) ສະໜອງຂໍ້ມູນທີ່ຈຳເປັນ ແລະ ການ ຄົ້ນຄວ້າສຳລັບການພັດທະນາພືດກະສິກຳເຂດເນີນສູງ. (3) ສ້າງຫຼັກສູດຝຶກອົບຮົມໃຫ້ແກ່ພະນັກງານກ່ຽວຂ້ອງ ແລະ ຊາວກະສິກອນ |
| 11 | ຫຼຸດຜ່ອນໄພນ້ຳຖ້ວມ | DOI/MAF | A | ເຂດນ້ຳຖ້ວມ ຕາມລ່ອງສາຂາແມ່ນ້ຳຂອງ: ກຳແພງນະຄອນ, ບໍລິຄຳໄຊ, ຄຳມ່ວນ, ສະວັນນະເຂດ, ສາລະວັນ, ຈຳປາສັກ | ຮັບປະກັນຄວາມປອດໄພຂອງການຜະລິດກະສິກຳ ແລະ ຊັບສິນຕ່າງໆ ຢູ່ ເຂດນ້ຳຖ້ວມ ຕາມລ່ອງສາຂາແມ່ນ້ຳຂອງ ໃນ ລະດູນ້ຳຖ້ວມ. | (1) ປະເມີນຢ່າງລະອຽດ ເນື້ອທີ່ຈະຖືກທຳລາຍຈາກນ້ຳຖ້ວມໃນລະດູຝົນ.(2) ຄັດເລືອກເຂດບູລິມະສິດ .(3) ວາງແຜນມາດຕະການຕ້ານນ້ຳຖ້ວມເຊັ່ນວ່າ: ຄູກັນນ້ຳ, ປະຕູນ້ຳ , ຈັກສູບນ້ຳ ແລະ ມາດຕະການອື່ນໆທີ່ສາມາດເຮັດໄດ້ .(4) ຟື້ນຟູ ແລະ ຍົກລະດັບສິ່ງອຳນວຍຕ່າງໆ ໃນການຕ້ານນ້ຳຖ້ວມ.(5) ຟື້ນຟູ ແລະຍົກລະດັບລະບົບສັງເກດແມ່ນ້ຳທີ່ມີຢູ່ໃນປະຈຸບັນ. |

JICA